# ພຣະທັມສຸພາສິດ


1 2 3 4 5 6 7 8 9 10
11 12 13 14 15 16 17 18 19 20
21 22 23 24 25 26 27 28 29 30
31


## ສຸພາສິດ

### 1. ຄຸນຄ່າຂອງສຸພາສິດ

1 ຄຳສຸພາສິດເຫລົ່ານີ້ເປັນຂອງໂຊໂລໂມນກະສັດອິສຣາເອນ ພຣະຣາຊໂອຣົດຂອງກະສັດດາວິດ

2 ສຸພາສິດນີ້ຈະຊ່ອຍໃຫ້ທ່ານຮູ້ຈັກຄຸນຄ່າຂອງປັນຍາແລະຄຳແນະນຳທີ່ດີ ຊ່ອຍໃຫ້ເຂົ້າໃຈຖ້ອຍຄຳທີ່ມີຄວາມຫມາຍເລິກເຊິ່ງ

3 ສາມາດສອນທ່ານໃຫ້ຮູ້ຈັກທາງດຳເນີນຊີວິດຢ່າງສລາດ ໃຫ້ຮູ້ຈັກທາງສຸຈຣິດ ຄວາມຍຸດຕິທັມ ແລະທາງຖືກຕ້ອງ

4 ທຳໃຫ້ຄົນໂງ່ມີຄວາມສລາດຊຳນານ ແລະສອນຄົນຫນຸ່ມໃຫ້ຮູ້ຈັກການດຳເນີນຊີວິດ

5 ຊ່ອຍເພີ້ມພູນຄວາມຮູ້ໃຫ້ພວກນັກປາດ ຊີ້ແນວທາງການສຶກສາອົບຮົມ

6 ຊ່ອຍໃຫ້ເຂົ້າໃຈຄວາມຫມາຍອັນເລິກແລບຂອງສຸພາສິດ ແລະຄຳເວົ້າຂອງພວກນັກປາດ

7 ທາງທີ່ພາໃຫ້ເກີດຄວາມຮູ້ນັ້ນ ຄືກ່ອນອື່ນພວກເຈົ້າຕ້ອງຢຳເກງພຣະຜູ້ເປັນເຈົ້າ ຄົນໂງ່ມັກປມາດປັນຍາແລະບໍ່ຍອມສຶກສາອົບຮົມ

#### ຄຳແນະນຳພວກຄົນຫນຸ່ມ

8 ລູກເອີຍ ຈົ່ງເອົາໃຈໃສ່ແລະເຊື່ອຟັງສິ່ງທີ່ພໍ່ແມ່ເຈົ້າບອກສອນ

9 ການສອນຂອງທ່ານເປັນເຫມືອນກະໂຈມໃສ່ຫົວອັນງົດງາມ ຫລືເຫມືອນສາຍສ້ອຍປະດັບຄໍຂອງເຈົ້າ

10 ລູກເອີຍ ເມື່ອຄົນຊົ່ວລໍ້ເຈົ້າໃຫ້ເຈົ້າທຳຊົ່ວ ຢ່າໄດ້ເຮັດຕາມ

11 ສົມມຸດເຂົາເວົ້າວ່າ, "ໄປເທາະ ໄປດັກສະກັດຈັບເອົາຄົນບໍ່ມີຄວາມຜິດມາຂ້າຖິ້ມເທາະ

12 ໃຫ້ມັນເຫມືອນຄວາມຕາຍກືນກິນມະນຸດ ຄືເມື່ອພວກເຮົາພົບເຂົາທີ່ມີຊີວິດຢູ່

13 ພວກເຮົາກໍຈະໄດ້ຂອງມີຄ່າຫລາຍຢ່າງເມືອໄວ້ໃນເຮືອນຂອງເຮົາ

14 ສະນັ້ນ ຈົ່ງມາຮ່ວມກັບພວກເຮົາເທາະ ແລ້ວຈຶ່ງເອົາສິ່ງຂອງທີ່ຍາດຊິງມາໄດ້ນັ້ນແບ່ງປັນກັນ"

15 ລູກເອີຍ ເຈົ້າຢ່າເດີນຕາມທາງຂອງຄົນເຊັ່ນນັ້ນ ຈົ່ງຫລົບຫລີກເສັຽ

16 ເພາະວ່າພວກເຂົາພ້ອມສເມີທີ່ຈະທຳຊົ່ວ ແລະຂ້າຄົນ
17 ເປັນການບໍ່ຖືກຕ້ອງທີ່ຈະກາງຂ່າຍໃຫ້ນົກເຫັນ
18 ແຕ່ຖ້າເຈົ້າທຳເຊັ່ນນັ້ນ ມັນຈະເປັນເຫມືອນກາງຂ່າຍໃສ່ຕົວເອງ ເພາະວ່າຈະຈັບຫຍັງບໍ່ໄດ້ນອກຈາກຊີວິດ
ຂອງເຈົ້າເອງ
19 ຄວາມໂຫດຮ້າຍທາຣຸນຍ່ອມຕົກຖືກຕົນຕົວ ແລະຊີວິດຂອງຜູ້ທຳສເມີ ນີ້ເປັນສິ່ງທີ່ເກີດຂຶ້ນກັບທຸກໆຄົນທີ່ມີ
ຊີວິດຢູ່ດ້ວຍການເປັນຂະໂມຍ

### ສຽງຮຽກຮ້ອງຂອງປັນຍາ

20 ຈົ່ງຟັງ ປັນຍາຈະຮ້ອງອອກໄປຕາມຖນົນ ຕາມທີ່ສາທາລະນະ
21 ຕາມປະຕູເມືອງ ແລະໃນທຸກໆບ່ອນທີ່ປະຊາຊົນມາຊຸມນຸມກັນຢູ່ ປັນຍາຈະຮ້ອງວ່າ,
22 "ຄົນໂງ່ເອີຍ ພວກເຈົ້າຍັງຈະດີໃຈເປັນຄົນໂງ່ຢ່າງນີ້ຢູ່ເທິງປານໃດ? ຈະຫມິ່ນປມາດຄວາມຮູ້ຢູ່ອີກເທິງປານ
ໃດ? ຈະບໍ່ສຶກສາຮ່ຳຮຽນບໍ?
23 ຈົ່ງຟັງເມື່ອເຮົາຕັກເຕືອນເຈົ້າ ເຮົາຈະບອກຖ້ອຍຄຳທີ່ດີແກ່ເຈົ້າ ແລະແຈກຢາຍປັນຍາຄວາມຮູ້ຂອງເຮົາໃຫ້
ເຈົ້າ
24 ເຮົາກຳລັງເອີ້ນ ແລະເຊີນເຈົ້າມາ ແຕ່ເຈົ້າບໍ່ຟັງ ແລະບໍ່ສົນໃຈໃນເຮົາ
25 ບໍ່ເອົາໃຈໃສ່ໃນຄຳແນະນຳທັງປວງຂອງເຮົາ ແລະບໍ່ເຊື່ອຟັງທີ່ເຮົາສອນເຈົ້າໃຫ້ດີ
26 ດັ່ງນັ້ນ ເມື່ອເຈົ້າຕົກທຸກໄດ້ຍາກ ເຮົາຈະຫົວຂວັນເຈົ້າ ຈະຫົວເຍາະເຍີ້ຍເມື່ອເຈົ້າຢ້ານກົວ
27 ເມື່ອຄວາມຢ້ານແລະຄວາມຍາກລຳບາກມາຖືກເຈົ້າໂດຍໄວ ເຫມືອນລົມພະຍຸແລະລົມຫົວກຸດເຈົ້າຈະເຈັບ
ປວດ ແລະໄດ້ຮັບຄວາມຈິບຫາຍ
28 ເມື່ອນັ້ນເຈົ້າຈະເອີ້ນຫາເຮົາ ແຕ່ເຮົາຈະບໍ່ຕອບ ເຈົ້າຈະຊອກຫາເຮົາໃນທຸກໆບ່ອນ ແຕ່ຈະບໍ່ພົບເຫັນເຮົາ
ຈັກບ່ອນ
29 ເຈົ້າບໍ່ເຄີຍໃຊ້ຄວາມຮູ້ຈັກເທື່ອ ບໍ່ຍອມຢຳເກງພຣະຜູ້ເປັນເຈົ້າເລີຍ
30 ແລະບໍ່ຍອມຮັບເອົາຄຳແນະນຳຈາກເຮົາ ຫລືບໍ່ສົນໃຈໃດໆເມື່ອເຮົາສອນເຈົ້າໃຫ້ດີ
31 ດ້ວຍເຫດນີ້ແຫລະ ເຈົ້າຈຶ່ງຈະໄດ້ຮັບຜົນຕອບແທນສົມຄວນກັບເຫດການກະທຳຂອງເຈົ້າເອງຈະທຳໃຫ້ເຈົ້າ
ເຈັບປວດ
32 ຄົນໂງ່ຕາຍຍ້ອນຂາດສະຕິປັນຍາ ແລະຄວາມປມາດເປັນທາງແຫ່ງຄວາມຕາຍ
33 ແຕ່ໃຜກໍຕາມທີ່ເຊື່ອຟັງເຮົາຈະປອດພັຍ ແລະຈະບໍ່ຢ້ານອັນຕະຣາຍໃດໆທັງສິ້ນ"

## 2. ປໂຍດຂອງປັນຍາ

1 ລູກເອີຍ ຈົ່ງຈື່ຈຳສິ່ງທີ່ພໍ່ບອກສອນເຈົ້າ
2 ຈົ່ງຕັ້ງໃຈຟັງເອົາປັນຍາ ແລະພຍາຍາມອຽງໃຈຂອງເຈົ້າເຂົ້າຫາຄວາມເຂົ້າໃຈ

3 ໃຫ້ສແວງຫາຄວາມຮູ້ ອ້ອນວອນຂໍຄວາມເຂົ້າໃຈ
4 ຈົ່ງຊອກຫາປັນຍາເຫມືອນຫາເງິນ ຫລືຂຸມຊັບທີ່ເຊື່ອງໄວ້
5 ຖ້າທຳດັ່ງນີ້ເຈົ້າຈະຮູ້ຈັກຢຳເກງພຣະຜູ້ເປັນເຈົ້າ ແລະຮູ້ເຣື່ອງພຣະເຈົ້າເປັນຢ່າງດີ
6 ແມ່ນພຣະຜູ້ເປັນເຈົ້າຊົງໃຫ້ປັນຍາ ພຣະຄັມຂອງພຣະອົງທຳໃຫ້ມີຄວາມຮອບຮູ້ ແລະຄວາມເຂົ້າໃຈ
7 ພຣະອົງຊົງຊ່ອຍເຫລືອຄຸ້ມຄອງຄົນຊອບທັມ ແລະສັດຊື່
8 ຊົງຮັກສາຄົນທັງຫລາຍທີ່ທຳຕໍ່ຄົນອື່ນຢ່າງຍຸດຕິທັມ ແລະຊົງເບິ່ງແຍງຄົນທັງຫລາຍທີ່ຈົ່ງຮັກພັກດີຕໍ່ພຣະອົງ
9 ຖ້າເຈົ້າເຊື່ອຟັງເຮົາ ເຈົ້າຈະຮູ້ຈັກສິ່ງທີ່ຖືກຕ້ອງ ສິ່ງທີ່ຍຸດຕິທັມ ສິ່ງທີ່ດີງາມແລະທາງແຫ່ງຄວາມສຸກ
10 ຈະກາຍເປັນຄົນສລາດ ແລະມີຄວາມຍິນດີຍ້ອນຄວາມຮູ້ຂອງເຈົ້າ
11 ຄວາມສລາດແລະຄວາມເຂົ້າໃຈຂອງເຈົ້າຈະຄຸ້ມຄອງເຈົ້າ
12 ມັນຈະຊ່ອຍໃຫ້ເຈົ້າປະທາງຊົ່ວຮ້າຍເສັຽ ແລະຊ່ອຍໃຫ້ພົ້ນຈາກຄົນເຫລົ່ານີ້ ຄືຄົນທີ່ເວົ້າກໍ່ກວນ
13 ຄົນທີ່ປະຖິ້ມທາງຊອບທັມໄປດຳເນີນຊີວິດໃນທາງບາບ
14 ຄົນທີ່ຫາຄວາມສຸກໃນທາງຜິດ ແລະທາງຊົ່ວຮ້າຍ
15 ຕລອດທັງຄົນໃຈຄົດທີ່ໄວ້ວາງໃຈບໍ່ໄດ້
16 ເຈົ້າຈະລອດພົ້ນຈາກຍິງຊົ່ວ ຈາກຍິງສັນຈອນທີ່ເວົ້າຈາພະເນົ້າພະນໍ
17 ຜູ້ປະຖິ້ມຄູ່ຄຽງທີ່ນາງໄດ້ມາເມື່ອຍັງສາວໆນັ້ນເສັຽ ແລະລືມຄຳຫມັ້ນສັນຍາແຫ່ງພຣະເຈົ້າຂອງຕົນ
18 ເພາະເຮືອນຂອງນາງຈົມລົງໄປສູ່ຄວາມມໍຣະນາ ແລະວິຖີຂອງນາງໄປສູ່ຄວາມຕາຍ
19 ຜູ້ທີ່ໄປຫານາງບໍ່ກັບຄືນມາຈັກຄົນດຽວ ຫລືຫາມີຜູ້ໃດກັບຄືນມາສູ່ຫົນທາງແຫ່ງຊີວິດອີກຈັກເທື່ອ
20 ດັ່ງນັ້ນ ເຈົ້າຄວນຈະດຳເນີນໃນທາງຂອງຄົນດີ ແລະຮັກສາວິຖີຂອງຄົນຊອບທັມ
21 ເພາະວ່າຄົນທີ່ທ່ຽງທັມຈະໄດ້ຢູ່ໃນແຜ່ນດິນ ແລະຄົນສັດຊື່ຈະຄົງຢູ່ໃນນັ້ນ
22 ແຕ່ຄົນຊົ່ວຮ້າຍຈະຖືກຕັດຂາດເສັຽຈາກແຜ່ນດິນ ແລະຄົນທໍຣະຍົດຈະຖືກຖອນຮາກອອກໄປ

## 3. ຄຳແນະນຳພວກຄົນຫນຸ່ມ

1 ລູກເອີຍ ຢ່າລືມຄຳສອນຂອງເຮົາ ແຕ່ໃຫ້ໃຈຂອງເຈົ້າຮັກສາບັນຍັດຂອງເຮົາ
2 ເພາະສິ່ງເຫລົ່ານີ້ຈະໃຫ້ວັນເດືອນປີຊີວິດຍືນຍາວ ແລະອວຍຄວາມສຸກສົມບູນແກ່ເຈົ້າ
3 ຢ່າໃຫ້ຄວາມຈົ່ງຮັກພັກດີ ແລະຄວາມສັດຊື່ປະຖິ້ມເຈົ້າ ຈົ່ງຜູກມັນໄວ້ທີ່ຄໍຂອງເຈົ້າ ຈົ່ງຂຽນມັນໄວ້ທີ່ແຜ່ນຈາຣຶກແຫ່ງຫົວໃຈຂອງເຈົ້າ
4 ດັ່ງນັ້ນ ເຈົ້າຈົ່ງຫາຄວາມພໍໃຈ ແລະຊື່ສຽງດີ ໃນສາຍພຣະເນດພຣະຜູ້ເປັນເຈົ້າ ແລະໃນສາຍຕາມະນຸດ”
5 ຈົ່ງໄວ້ວາງໃຈໃນພຣະຜູ້ເປັນເຈົ້າໃຫ້ສຸດຈິດສຸດໃຈຂອງເຈົ້າ ຢ່າເຊື່ອຫມັ້ນໃນຄວາມຮູ້ຂອງຕົນ
6 ເວລາທຳທຸກສິ່ງໃຫ້ລະນຶກເຖິງພຣະຜູ້ເປັນເຈົ້າ ແລ້ວພຣະອົງຈະຊົງສະແດງໃຫ້ເຫັນທາງອັນຖືກຕ້ອງ

7 ຢ່າຄິດວ່າຕົນສລາດ ຈົ່ງເຄົາຣົບຢໍາເກງພຣະຜູ້ເປັນເຈົ້າ ແລະໃຫ້ເວັ້ນຈາກການທໍາຜິດ
8 ຖ້າເຈົ້າປະຕິບັດຕາມນີ້ມັນຈະເປັນເຫມືອນຢາວິເສດທີ່ປິ່ນປົວບາດແຜຂອງເຈົ້າໃຫ້ດີ ແລະທໍາໃຫ້ຄວາມເຈັບ
ປວດຂອງເຈົ້າຜ່ອນຄາຍລົງ
9 ຈົ່ງຖວາຍກຽດແດ່ພຣະຜູ້ເປັນເຈົ້າ ດ້ວຍການຖວາຍຜົນລະປູກອັນດີທີ່ສຸດແກ່ພຣະອົງ
10 ຖ້າທໍາໄດ້ດັ່ງນີ້ ເຈົ້າຈະມີເຂົ້າເຕັມເລົ້າ ແລະມີເຫລົ້າອະງຸ່ນຫລາຍຈົນບໍ່ມີໄຫໃສ່
11 ລູກເອີຍ ເມື່ອພຣະຜູ້ເປັນເຈົ້າຊົງບອກສອນເຈົ້າ ຈົ່ງຕັ້ງໃຈຟັງ ແລະຍຶດຖືເປັນເຄື່ອງເຕືອນໃຈ
12 ພຣະຜູ້ເປັນເຈົ້າຊົງບອກສອນຜູ້ທີ່ພຣະອົງຊົງຮັກ ເຫມືອນບິດາບອກສອນລູກຊາຍຜູ້ທີ່ຕົນຫວັງເພິ່ງ
13 ມະນຸດຜູ້ມີປັນຍາ ແລະມີຄວາມເຂົ້າໃຈຍ່ອມມີຄວາມສຸກ
14 ປໂຍດທີ່ໄດ້ຈາກປັນຍາມີຫລາຍກວ່າທີ່ໄດ້ຈາກເງິນຄໍາມັນມີຄຸນຄ່າຫລາຍກວ່າເພັດ
15 ບໍ່ມີອັນໃດໃນໂລກຈະປຽບກັບປັນຍາໄດ້
16 ປັນຍາໃຫ້ເຈົ້າມີຊີວິດຍືນຍາວເຊັ່ນດຽວກັບຊັບສົມບັດແລະກຽດຕິຍົດ
17 ທາງຂອງປັນຍາທໍາໃຫ້ຊີວິດຂອງເຈົ້າມ່ວນຊື່ນປອດພັຍ ຜູ້ທີ່ມີປັນຍາຍ່ອມມີຄວາມສຸກ
18 ປັນຍາຈະໃຫ້ຊີວິດແກ່ເຂົາເຫມືອນກົກໄມ້ໃຫ້ຫມາກສັນນັ້ນ
19 ພຣະຜູ້ເປັນເຈົ້າຊົງວາງຮາກແຜ່ນດິນໂລກໂດຍປັນຍາ ພຣະອົງຊົງສະຖາປະນາຟ້າສວັນໂດຍຄວາມເຂົ້າໃຈ
20 ໂດຍຄວາມຮູ້ຂອງພຣະອົງ ທໍາໃຫ້ແມ່ນໍ້າລ່ອງໄຫລ ແລະເມກກໍເທຝົນລົງມາ
21 ລູກເອີຍ ຈົ່ງຮັກສາສະຕິປັນຍາ ແລະຄວາມສລຽວສລາດໄວ້ ຢ່າໃຫ້ທັງສອງນີ້ຫນີໄປຈາກສາຍຕາຂອງເຈົ້າ
22 ແລະທັງສອງຈະເປັນຊີວິດແກ່ເຈົ້າ ເປັນອາພອນປະດັບຄໍຂອງເຈົ້າ
23 ແລ້ວເຈົ້າຈະດໍາເນີນໃນທາງຂອງເຈົ້າຢ່າງປອດພັຍ ແລະຕີນຂອງເຈົ້າຈະບໍ່ສະດຸດ
24 ຖ້າເຈົ້ານັ່ງ ເຈົ້າຈະບໍ່ຢ້ານ ເມື່ອເຈົ້ານອນ ກໍຈະຫລັບໄປຢ່າງຜາສຸກສົດຊື່ນ
25 ຢ່າຢ້ານຄວາມກົວທີ່ມາເຖິງປັດຈຸບັນທັນດ່ວນ ຫລືຢ້ານຄວາມພິນາດຂອງຄົນຊົ່ວຮ້າຍທີ່ເກີດຂຶ້ນ
26 ເພາະພຣະຜູ້ເປັນເຈົ້າຈະຊົງເປັນຄວາມໄວ້ວາງໃຈຂອງເຈົ້າ ແລະຈະຊົງຮັກສາຕີນຂອງເຈົ້າໃຫ້ພົ້ນຈາກ
ການຖືກຈັບ
27 ຢ່າຍຶດຄວາມດີໄວ້ຈາກຜູ້ທີ່ສົມຄວນຈະໄດ້ຮັບ ໃນເມື່ອສິ່ງນີ້ຢູ່ໃນອໍານາດຂອງເຈົ້າທີ່ຈະກະທໍາໄດ້
28 ຢ່າເວົ້າກັບເພື່ອນບ້ານຂອງເຈົ້າວ່າ, "ໄປເຖີດ ແລ້ວກັບມາອີກ ມື້ອື່ນນີ້ເຮົາຈະໃຫ້" ໃນເມື່ອເຈົ້າມີໃຫ້ຢູ່ແລ້ວ
29 ຢ່າວາງແຜນງານຊົ່ວຮ້າຍຕໍ່ເພື່ອນບ້ານຂອງເຈົ້າ ຜູ້ອາໄສຢ່າງໄວ້ວາງໃຈຢູ່ຂ້າງໆເຈົ້າ
30 ຢ່າໂຕ້ຕອບກັບຜູ້ໃດຢ່າງໄຮ້ເຫດຜົນ ໃນເມື່ອເຂົາບໍ່ໄດ້ທໍາອັນຕະຣາຍຢ່າງໃດແກ່ເຈົ້າ
31 ຢ່າອິດສາຄົນທີ່ທາຣຸນ ຢ່າເລືອກທາງໃດໆຂອງເຂົາເລີຍ
32 ເພາະຄົນຕະລົບຕະແລງເປັນທີ່ກຽດຊັງຕໍ່ພຣະຜູ້ເປັນເຈົ້າ ແຕ່ຄົນທ່ຽງທັມຢູ່ໃນຄວາມໄວ້ພຣະທັຍຂອງພຣະ
ອົງ

33 ຄຳສາບຂອງພຣະຜູ້ເປັນເຈົ້າຢູ່ເທິງເຮືອນຂອງຄົນຊົ່ວຮ້າຍ ແຕ່ພຣະອົງຊົງອວຍພຣະພອນແກ່ທີ່ອາໄສຂອງຄົນຊອບທັມ
34 ພຣະອົງຊົງເຍາະເຍີ້ຍຄົນທີ່ມັກເຍາະເຍີ້ຍ ແຕ່ພຣະອົງຊົງສຳແດງພຣະຄຸນແກ່ຄົນທີ່ຖ່ອມໃຈ
35 ຄົນສລາດຈະໄດ້ກຽດເປັນມໍຣະດົກ ແຕ່ຄົນໂງ່ຈະໄດ້ຄວາມອັປຍົດ

## 4. ປັນຍາເປັນປໂຍດອັນຍິ່ງໃຫຍ່

1 ລູກເອີຍ ຈົ່ງຟັງຄຳສັ່ງສອນຂອງພໍ່ເຈົ້າ ຢ່າງຕັ້ງໃຈເພື່ອເຈົ້າຈະໄດ້ຮັບຄວາມຮອບຮູ້
2 ເພາະເຮົາໃຫ້ພາສິດດີແກ່ເຈົ້າ ຢ່າປະຖິ້ມຄຳສອນຂອງເຮົາ
3 ເມື່ອເຮົາເປັນລູກຢູ່ກັບພໍ່ຂອງເຮົາ ເປັນແກ້ວຕາຂອງແມ່ເຮົາ ເບິ່ງເປັນຫນ້າຮັກແລະອ່ອນໂຍນ
4 ບິດາສອນເຮົາ ແລະເວົ້າກັບເຮົາວ່າ, "ໃຫ້ໃຈຂອງເຈົ້າຍຶດຄຳສອນຂອງເຮົາໄວ້ໃຫ້ຫມັ້ນ ຈົ່ງຮັກສາບັນຍັດຂອງເຮົາ ແລະມີຊີວິດຢູ່
5 ຢ່າລືມແລະຝ່າຝືນຈາກຖ້ອຍຄຳແຫ່ງປາກຂອງເຮົາ ຈົ່ງເອົາປັນຍາ ແລະເອົາຄວາມຮອບຮູ້
6 ຢ່າປະຖິ້ມປັນຍາ ແລະປັນຍາຈະຮັກສາເຈົ້າໄວ້ ຈົ່ງຮັກປັນຍາ ແລະປັນຍາຈະຊ່ອຍລະວັງເຈົ້າ
7 ທີ່ເລີ້ມຕົ້ນຂອງປັນຍາເປັນຢ່າງນີ້ ຄືຈົ່ງເອົາປັນຍາ ແມ້ເຈົ້າຈະໄດ້ສິ່ງໃດກໍຕາມ ຈົ່ງເອົາຄວາມຮອບຮູ້ໄວ້
8 ຈົ່ງຕີຣາຄາປັນຍາໃຫ້ສູງ ແລະປັນຍາຈະຍົກຍ່ອງເຈົ້າ ຖ້າເຈົ້າກອດປັນຍາໄວ້ ປັນຍາຈະໃຫ້ກຽດເຈົ້າ
9 ປັນຍາຈະເອົາມົງຄຸນງາມສວມຫົວເຈົ້າ ຈະໃຫ້ມົງກຸດງາມແກ່ເຈົ້າ"
10 ລູກເອີຍ ຈົ່ງຟັງແລະຮັບຖ້ອຍຄຳຂອງເຮົາ ເພື່ອປີເດືອນແຫ່ງຊີວິດຂອງເຈົ້າຈະມີຫລາຍ
11 ເຮົາໄດ້ສອນເຈົ້າໃນເຣື່ອງທາງປັນຍາແລ້ວ ເຮົາໄດ້ນຳເຈົ້າໃນວິຖີຂອງຄວາມທ່ຽງທັມ
12 ເມື່ອເຈົ້າເດີນ ກ້າວຕີນຂອງເຈົ້າຈະບໍ່ຖືກຂັດຂວາງ ແລະຖ້າເຈົ້າແລ່ນ ເຈົ້າຈະບໍ່ສະດຸດ
13 ຈົ່ງຍຶດວິນັຍໄວ້ ແລະຢ່າປ່ອຍໄປ ຈົ່ງລະວັງປັນຍາໄວ້ ເພາະປັນຍາເປັນຊີວິດຂອງເຈົ້າ
14 ຢ່າເຂົ້າໄປໃນວິຖີຂອງຄົນຊົ່ວຮ້າຍ ແລະຢ່າເດີນໃນທາງຂອງຄົນອະທັມ
15 ຈົ່ງຫລີກເສັຽ ຢ່າເດີນທາງນັ້ນ ລ້ຽວອອກໄປເສັຽ ແລະຈົ່ງຜ່ານໄປ
16 ເພາະຖ້າຄົນຊົ່ວຮ້າຍບໍ່ໄດ້ທຳຄວາມຜິດ ເຂົານອນບໍ່ຫລັບ ຖ້າເຂົາບໍ່ໄດ້ທຳໃຫ້ຄົນໃດສະດຸດເຂົາຈະຫລັບບໍ່ລົງ
17 ເພາະເຂົາຮັບປະທານອາຫານຂອງຄວາມໂຫດຮ້າຍ ແລະດື່ມເຫລົ້າອະງຸ່ນແຫ່ງຄວາມທາຣຸນ
18 ແຕ່ວິຖີຂອງຄົນຊອບທັມເຫມືອນແສງອະຣຸນ ຊຶ່ງສ່ອງແສງເຫລື້ອມໃສຍິ່ງໆຂຶ້ນຈົນເຕັມວັນ
19 ທາງຂອງຄົນຊົ່ວຮ້າຍກໍເຫມືອນຄວາມມືດຕຶບ ເຂົາບໍ່ຮູ້ວ່າ ເຂົາສະດຸດອັນໃດ
20 ລູກເອີຍ ຈົ່ງຕັ້ງໃຈຕໍ່ຖ້ອຍຄຳຂອງເຮົາ ຈົ່ງອ່ຽງຫູຂອງເຈົ້າເຂົ້າຫາຄຳເວົ້າຂອງເຮົາ
21 ຢ່າໃຫ້ມັນຫນີໄປຈາກສາຍຕາຂອງເຈົ້າ ຈົ່ງຮັກສາມັນໄວ້ພາຍໃນໃຈຂອງເຈົ້າ
22 ເພາະມັນເປັນຊີວິດແກ່ຜູ້ທີ່ຄົ້ນພົບ ແລະມັນຮັກສາເນື້ອຂອງຜູ້ນັ້ນທັງສິ້ນ

23 ຈົ່ງຮັກສາໃຈຂອງເຈົ້າດ້ວຍຄວາມລະວັງລະໄວຮອບດ້ານ ເພາະຊີວິດເລີ້ມຕົ້ນອອກມາຈາກໃຈ
24 ຈົ່ງຖີ້ມວາຈາຄົດໆເສັຽ ແລະໃຫ້ຄຳເວົ້າລົດລ້ຽວຫ່າງຈາກເຈົ້າ
25 ໃຫ້ຕາຂອງເຈົ້າເບິ່ງໄປຂ້າງຫນ້າ ແລະໃຫ້ການຈ້ອງຂອງເຈົ້າຊີ້ໄປຂ້າງຫນ້າເຈົ້າ
26 ຈົ່ງສົນໃຈໃນວິຖີແຫ່ງຕີນຂອງເຈົ້າ ແລ້ວທາງທັງສິ້ນຂອງເຈົ້າຈະແນ່ນອນ
27 ຢ່າເຫໄປຂ້າງຂວາ ຫລືຫັນມາຂ້າງຊ້າຍ ຈົ່ງຫລີກເວັ້ນທາງຂອງເຈົ້າເສັຽຈາກຄວາມຊົ່ວຮ້າຍ

## 5. ຄຳເຕືອນໃນເຣື່ອງຫລິ້ນຊູ້

1 ລູກເອີຍ ຈົ່ງຕັ້ງໃຈຕໍ່ປັນຍາຂອງເຮົາ ຈົ່ງອ່ຽງຫູຂອງເຈົ້າຟັງຄວາມເຂົ້າໃຈຂອງເຮົາ
2 ເພື່ອຈະຮັກສາຄວາມສລຽວສລາດໄວ້ ແລະຮີມຝີປາກຂອງເຈົ້າຈະລະມັດລະວັງຄວາມຮູ້
3 ເພາະຮີມຝີປາກຂອງຍິງຊົ່ວນັ້ນກໍຢາດນ້ຳເຜີ້ງອອກມາ ແລະຄຳເວົ້າຂອງນາງກໍຫມື່ນຍິ່ງກວ່ານ້ຳມັນ
4 ແຕ່ໃນທີ່ສຸດ ນາງຂົມຂື່ນຍິ່ງກວ່າບໍຣະເພັດ ແລະຄົມຢ່າງດາບສອງຄົມ
5 ຕີນຂອງນາງກ້າວລົງໄປສູ່ຄວາມຕາຍ ບາດກ້າວຕີນຂອງນາງຕິດຕາມວິຖີສູ່ແດນຜູ້ຕາຍ
6 ນາງບໍ່ສົນໃຈໃນວິຖີແຫ່ງຊີວິດ ທາງຂອງນາງວົນວຽນໄປ ແລະບໍ່ຮູ້ຈັກແຈ້ງວ່າແມ່ນຫຍັງຈະເກີດຂຶ້ນ
7 ລູກເອີຍ ບັດນີ້ຈົ່ງຟັງເຮົາ ແລະຢ່າພາກຈາກຖ້ອຍຄຳແຫ່ງປາກຂອງເຮົາ
8 ຈົ່ງຫລີກທາງຂອງເຈົ້າໃຫ້ໄກຈາກນາງ ຢ່າໄປໃກ້ປະຕູເຮືອນຂອງນາງ
9 ຢ້ານວ່າເຈົ້າຈະໃຫ້ກຽດຂອງເຈົ້າແກ່ຄົນອື່ນ ແລະໃຫ້ປີເດືອນຂອງເຈົ້າແກ່ຄົນໄຮ້ເມດຕາ
10 ຢ້ານວ່າແຂກແປກຫນ້າຈະກິນກຳລັງຂອງເຈົ້າຈົນອີ່ມ ແລະແຮງງານຂອງເຈົ້າຕົກໄປໃນເຮືອນຂອງຄົນຕ່າງດ້າວ
11 ແລະເຖິງບັ້ນປາຍຊີວິດຂອງເຈົ້າ ເຈົ້າຄໍ່າຄວນ ເມື່ອເນື້ອແລະກາຍຂອງເຈົ້າຖືກລ້າງຜານ
12 ແລະເຈົ້າວ່າ, “ເຮົາເຄີຍກຽດການຕີສອນ ແລະຈິດໃຈຂອງເຮົາດູຫມິ່ນການຕັກເຕືອນ
13 ເຮົາບໍ່ເຄີຍຟັງສຽງຄຣູຂອງເຮົາ ຫລືອ່ຽງຫູໃຫ້ແກ່ຜູ້ສັ່ງສອນຂອງເຮົາ
14 ເຮົາຈວນຈະລົ້ມລະລາຍສູ່ຄວາມພິນາດຢູ່ແລ້ວ ໃນຫມູ່ຄົນທີ່ປະຊຸມກັນຢູ່ນັ້ນ”
15 ຈົ່ງດື່ມນ້ຳຈາກຖັງເກັບນ້ຳຂອງເຈົ້າ ດື່ມນ້ຳໄຫລຈາກບໍ່ຂອງເຈົ້າເອງ
16 ຄວນຫລືທີ່ຈະໃຫ້ນ້ຳພຸຂອງເຈົ້າໄຫລເຝື່ອນອອກໄປນອກບ້ານ ແລະໃຫ້ທານນ້ຳນັ້ນໄຫລໄປທີ່ກາງເມືອງ
17 ຈົ່ງໃຫ້ມັນເປັນຂອງເຈົ້າແຕ່ຜູ້ດຽວ ແລະບໍ່ແມ່ນສຳລັບຄົນແປກຫນ້າດ້ວຍ
18 ຈົ່ງໃຫ້ນ້ຳພຸຂອງເຈົ້າໄດ້ຮັບພອນ ແລະຍິນດີຢູ່ກັບເມັຽຄົນທີ່ເຈົ້າໄດ້ເມື່ອຫນຸ່ມນັ້ນ
19 ເຫມືອນນາງກວາງແມ່ທີ່ຫນ້າຮັກ ແລະນີ້ມນວນ ຈົ່ງໃຫ້ສເນ່ຂອງນາງທຳໃຫ້ເຈົ້າມີຄວາມສຸກໃຈ ຈົ່ງໃຫ້ຄວາມຮັກຂອງນາງຈັບໃຈຂອງເຈົ້າໄວ້
20 ລູກເອີຍ ເປັນຫຍັງເຈົ້າຈຶ່ງຕ້ອງເອົາຄວາມຮັກຂອງເຈົ້າໃຫ້ແກ່ຍິງອື່ນ ເປັນຫຍັງເຈົ້າຈຶ່ງໄປຫາຄວາມສຸກກັບເມັຽຂອງຊາຍອື່ນ

21 ເພາະວ່າທາງຂອງຄົນກໍຢູ່ໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ແລະພຣະອົງຊົງເຝົ້າເບິ່ງວິຖີທັງສິ້ນຂອງເຂົາ
22 ຄວາມບາບຊົ່ວຂອງຄົນຊົ່ວຮ້າຍດັກຈັບເຂົາເອງ ແລະເຂົາກໍຕິດຢູ່ກັບຕາຂ່າຍບາບຂອງເຂົາ
23 ເຂົາຕາຍເພາະຂາດວິນັຍໃນຊີວິດ ແລະເພາະຄວາມໂງ່ຢ່າງຍິ່ງຂອງເຂົາ ເຂົາຈຶ່ງຫລົງຫນີໄປ

## 6. ຄຳແນະນຳຕັກເຕືອນ

1 ລູກເອີຍ ຖ້າເຈົ້າເປັນຜູ້ປະກັນເພື່ອນບ້ານຂອງເຈົ້າ ໄດ້ທຳສັນຍາໃຫ້ແກ່ຄົນອື່ນ
2 ຖ້າເຈົ້າຕິດບ້ວງເພາະຄຳຈາກປາກຂອງເຈົ້າ ແລະເຈົ້າຕິດກັບເພາະຄຳເວົ້າຂອງເຈົ້າ
3 ລູກເອີຍ ຈົ່ງທຳຢ່າງນີ້ ແລະຊ່ອຍຕົວເຈົ້າໃຫ້ລອດເຖີດ ເພາະເຈົ້າຕົກຢູ່ໃນກຳມືຂອງເພື່ອນບ້ານຂອງເຈົ້າແລ້ວ
4 ຢ່າໃຫ້ຕາຂອງເຈົ້າຫລັບລົງ ຢ່າໃຫ້ຫນັງຕາຂອງເຈົ້າງ່ວງໄປ
5 ຈົ່ງຫລີກຫນີຈາກບ້ວງແຮ້ວ ດັ່ງກວາງທີ່ປົບຫນີຈາກນາຍພານ ດັ່ງນົກຈາກມືຂອງຄົນຈັບນົກ
6 ຄົນຂີ້ຄ້ານເອີຍ ຈົ່ງເບິ່ງເອົາຊີວິດຂອງມົດ ເຈົ້າຈຶ່ງຈະເປັນຄົນສລາດ
7 ຄືມັນບໍ່ມີຜູ້ນຳ ບໍ່ມີຫົວຫນ້າ ຫລືຜູ້ປົກຄອງ
8 ແຕ່ມັນກໍຮູ້ຈັກສະສົມອາຫານໄວ້ໃນຣະດູຮ້ອນ ເພື່ອຕຽມໄວ້ສຳລັບຣະດູຫນາວ
9 ຄົນຂີ້ຄ້ານເອີຍ ເຈົ້າຈະນອນຢູ່ເຫິງປານໃດ ເມື່ອໃດຈະຕື່ນຂຶ້ນ
10 ຄົນຂີ້ຄ້ານມັກເວົ້າວ່າ, “ເຮົາຈະນອນພັກຜ່ອນຈັກຫນ່ອຍ”
11 ແຕ່ໃນຂນະທີ່ເຂົາຫລັບຢູ່ນັ້ນ ຄວາມທຸກຍາກຈະມາບຸດບຸນເຂົາເຫມືອນຄົນມາປຸ້ນ
12 ຄົນໄຮ້ຄ່າ ຄືຄົນຊົ່ວຮ້າຍ ທີ່ທ່ຽວໄປດ້ວຍວາຈາຄົດລ້ຽວ
13 ຕາຂອງເຂົາກໍຂະຫຍິບ ຕີນຂອງເຂົາກໍຂະຫຍັບ ນິ້ວຂອງເຂົາກໍຊີ້ໄປ
14 ປະດິດຄວາມຊົ່ວຮ້າຍດ້ວຍໃຈຕະລົບຕະແລງ ຫວ່ານຄວາມແຕກແຍກຢູ່ເລື້ອຍໄປ
15 ເຫດສັນນັ້ນ ຄວາມພິນາດຈະມາຫາເຖິງເຂົາຢ່າງປັດຈຸບັນທັນດ່ວນ ໃນພິບຕານັ້ນເອງເຂົາຈະແຕກຢ່າງແປງບໍ່ໄດ້
16 ມີຫົກສິ່ງຊຶ່ງພຣະຜູ້ເປັນເຈົ້າຊົງກຽດ ມີເຈັດຢ່າງ ຊຶ່ງພຣະຜູ້ເປັນເຈົ້າຊົງກຽດຊັງຫລາຍ
17 ຕາຈອງຫອງ ປາກເວົ້າຂີ້ຕົວະ ແລະມືທີ່ຂ້າຄົນຜູ້ບໍ່ມີຄວາມຜິດ
18 ຈິດໃຈທີ່ຄິດແຜນການຊົ່ວຮ້າຍ ຕີນທີ່ແລ່ນໄປທຳຊົ່ວ
19 ພຍານເວົ້າຕົວະຕໍ່ສູ້ຄົນອື່ນ ແລະຜູ້ຫາເຣື່ອງໃຫ້ຍາດພີ່ນ້ອງຜິດຖຽງກັນ

### ຕັກເຕືອນໃຫ້ລະວັງການຫລິ້ນຊູ້

20 ລູກເອີຍ ຈົ່ງຮັກສາບັນຍັດຂອງພໍ່ເຈົ້າ ແລະຢ່າປະຖິ້ມຄຳສັ່ງສອນຂອງແມ່ເຈົ້າ
21 ມັດມັນຕິດໄວ້ໃນໃຈຂອງເຈົ້າສເມີ ຜູກມັນໄວ້ທີ່ຄໍຂອງເຈົ້າ

22 ເມື່ອເຈົ້າຍ່າງ ມັນຈະນຳເຈົ້າ ເມື່ອເຈົ້ານອນລົງ ມັນຈະເຝົ້າເຈົ້າ ແລະເມື່ອເຈົ້າຕື່ນຂຶ້ນ ມັນຈະເວົ້າກັບເຈົ້າ
23 ເພາະພຣະບັນຍັດເປັນແສງປະທີບ ແລະຄຳສອນເປັນສວ່າງ ແລະຄຳຕັກເຕືອນຂອງວິນັຍເປັນທາງແຫ່ງຊີວິດ
24 ເພື່ອສງວນເຈົ້າໄວ້ຈາກຍິງຊົ່ວຮ້າຍ ຈາກລີ້ນພະເນົ້າພະນໍຂອງຍິງສັນຈອນ
25 ຢ່າປາຖນາຄວາມງາມຂອງນາງຢູ່ໃນໃຈຂອງເຈົ້າ ຢ່າໃຫ້ນາງຈັບເຈົ້າດ້ວຍຂົນຕາຂອງນາງ
26 ເພາະຈະຈ້າງຍິງແພດສະຍາດ້ວຍເຂົ້າຈີ່ກ້ອນດຽວກໍຍັງໄດ້ ແຕ່ຍິງຫລິ້ນຊູ້ລ່າເອົາຊີວິດປະເສີດຂອງຊາຍເຂົ້າໄປສ່ຽງ
27 ຜູ້ຊາຍຈະຫອບໄຟໄວ້ທີ່ເອິກຂອງເຂົາ ໂດຍບໍ່ໃຫ້ເຄື່ອງນຸ່ງຂອງເຂົາໄຫມ້ໄດ້ຫລື
28 ຫລືຜູ້ໃດຈະເດີນເທິງຖ່ານໄຟແດງແລ້ວ ໂດຍບໍ່ໃຫ້ຕີນຂອງເຂົາຖືກໄຟລວກໄດ້ຫລື
29 ບຸກຄົນຜູ້ເຂົ້າຫາເມັຽຂອງເພື່ອນບ້ານກໍເປັນຢ່າງນັ້ນແຫລະ ບໍ່ມີຜູ້ໃດທີ່ແຕະຕ້ອງນາງແລ້ວຈະບໍ່ຖືກປັບໂທດ
30 ຖ້າຂະໂມຍເຂົ້າລັກ ເພື່ອບັນເທົາຄວາມຢາກເມື່ອເຂົາຫິວ ຄົນກໍດູຫມິ່ນຂະໂມຍນັ້ນບໍ່ແມ່ນຫລື
31 ຖ້າຈັບເຂົາໄດ້ ເຂົາຕ້ອງຊຳຣະຄືນເຈັດເທົ່າ ເຂົາຈະຕ້ອງໃຫ້ສິ່ງຂອງທັງສິ້ນໃນບ້ານຂອງເຂົາ
32 ຊາຍໃດທີ່ລ່ວງປະເວນີຜົວເມັຽ ຍ່ອມບໍ່ມີສາມັນສຳນຶກ ຜູ້ໃດທີ່ກະທຳຢ່າງນັ້ນກໍທຳລາຍຕົນເອງ
33 ເຂົາໄດ້ຮັບບາດແຜແລະຄວາມອັປຍົດ ແລະຈະລ້າງຄວາມຂາຍຫນ້າຂອງຕົນກໍບໍ່ໄດ້
34 ເພາະຄວາມໂມໂຫກະທຳໃຫ້ຄົນຫຶງຫວງ ໃນວັນທີ່ເຂົາແກ້ແຄ້ນ ເຂົາຈະບໍ່ມີຂອບເຂດ
35 ເຂົາຈະບໍ່ຮັບຄ່າທຳຂວັນໃດໆ ເຖິງເຈົ້າຈະທະວີຂອງກຳນັນ ເຂົາກໍບໍ່ຍອມສງົບ

## 7. ເລ່ຫລ່ຽມມານຍາຂອງຍິງໂສເພນີ

1 ລູກເອີຍ ຈົ່ງຈົດຈຳສິ່ງທີ່ພໍ່ເວົ້າ ແລະຢ່າລືມສິ່ງທີ່ພໍ່ບອກໃຫ້ເຈົ້າທຳ ຈົ່ງທຳສິ່ງທີ່ພໍ່ບອກ ແລ້ວຊີວິດຂອງເຈົ້າຈະຮຸ່ງເຮືອງ
2 ຈົ່ງບົວລະບັດຮັກສາຄຳສອນຂອງເຮົາເຫມືອນເຈົ້າຮັກສາຕາ
3 ໃຫ້ຍຶດຖືແລະບັນທຶກຄຳສອນຂອງເຮົາໄວ້ໃນໃຈຂອງເຈົ້າຕລອດເວລາ
4 ຈົ່ງຮັກແພງປັນຍາເຫມືອນຮັກແພງນ້ອງສາວ ແລະເພື່ອນສນິດຂອງເຈົ້າ
5 ປັນຍາຈະຮັກສາບໍ່ໃຫ້ເຈົ້າໄປຫຍຸ້ງກ່ຽວກັບເມັຽຂອງຄົນອື່ນ ແລະກັບຍິງປາກຫວານໃຈຊົ່ວທັງຫລາຍ
6 ມື້ນຶ່ງ ຂ້າພະເຈົ້າໄດ້ຫລຽວອອກໄປທາງປ່ອງຢ້ຽມເຮືອນ ໄດ້ເຫັນພວກຄົນຫນຸ່ມທີ່ຍັງອ່ອນຕໍ່ໂລກຫລາຍຄົນຍ່າງໄປມາ
7 ໃນບັນດາຄົນເຫລົ່ານີ້ ຂ້າພະເຈົ້າໄດ້ເຫັນຄົນນຶ່ງໂງ່ກວ່າຫມູ່
8 ຄືຄົນນັ້ນໄດ້ຍ່າງໄປຕາມຖນົນ ເມື່ອເຖິງແຈທາງບ່ອນຍິງຄົນນຶ່ງອາໄສຢູ່ ເຂົາກໍຍ່າງກາຍໄປໃກ້ເຮືອນນາງ
9 ໃນເວລາຄ່ຳພໍມືດຊຸ່ມ ເວລາຄ່ຳຄືນ ແລະຄວາມມືດ
10 ຍິງຄົນນັ້ນກໍໄດ້ພົບຊາຍຄົນນີ້ ນາງໄດ້ແຕ່ງຕົວເຫມືອນຍິງໂສເພນີ ແລະມີອຸບາຍຫລອກລໍ້

11 ນາງເປັນແມ່ເລງບໍ່ມີຢ່າງອາຍ ແລະມັກອອກໄປຍ່າງຫລິ້ນຕາມຖນົນສເມີ
12 ນາງມັກຈະຢືນຄອຍຢູ່ແຈທາງແຍກບ່ອນໃດບ່ອນນຶ່ງ ລາງເທື່ອກໍຢູ່ຕາມຖນົນ ແລະລາງເທື່ອກໍຢູ່ໃນຕລາດ
13 ນາງໂດດກອດຊາຍຫນຸ່ມ ແລະໃຊ້ແສງຕາຫລຽວເບິ່ງຫນ້າເຂົາທັງເວົ້າວ່າ,
14 "ມື້ນີ້ນ້ອງມີອາຫານທີ່ນຳມາ ຢາກເອົາຖວາຍບູຊາພຣະຜູ້ເປັນເຈົ້າ
15 ດັ່ງນັ້ນ ນ້ອງຈຶ່ງອອກມາຄອຍຖ້າພົບກັບອ້າຍ ດຽວນີ້ນ້ອງກໍພົບອ້າຍແລ້ວ
16 ນ້ອງໄດ້ເອົາຜ້າໄຫມສີຕ່າງໆຈາກເອຢິບປູຕຽງນອນ
17 ພ້ອມກັບອົບຜ້າປູນອນດ້ວຍນ້ຳຫອມກິສນາ ແລະອົບເຊີຍ
18 ໄປເທາະ ໃຫ້ພວກເຮົາໄປມ່ວນຊື່ນກັນດ້ວຍຄວາມຮັກຕລອດຄືນ ພວກເຮົາຈະມີຄວາມສຸກຢູ່ໃນອ້ອມແຂນ ເຊິ່ງກັນແລະກັນ
19 ເພາະວ່າຜົວຂອງນ້ອງບໍ່ຢູ່ເຮືອນ ເຂົາເດີນທາງໄປໄກ
20 ພ້ອມກັບຖືເງິນໄປນຳຈຳນວນຫລາຍ ມື້ເພັງເຂົາຈຶ່ງຈະກັບມາ"
21 ນາງໄດ້ລໍ້ຊາຍຜູ້ນັ້ນດ້ວຍຄວາມອ່ອນຫວານອັນຫນ້າຮັກດັ່ງນີ້ແຫລະ ເຂົາຈຶ່ງຫລົງກົນໃນຄວາມເວົ້າອັນ ຫວານຊື່ນຂອງນາງ
22 ທັນໃດນັ້ນ ເຂົາກໍຕິດຕາມນາງໄປເຫມືອນເຂົາຈູງງົວເຖິກໄປສູ່ບ່ອນຂ້າ ຫລືເຫມືອນຕ້ອນກວາງລົງໄປໃນ ຫລຸມ
23 ໃນບ່ອນນັ້ນລູກທະນູຈະແທງທະລຸເຂົ້າໄປເຖິງຫົວໃຈຂອງມັນ ຄົນຜູ້ນັ້ນເປັນເຫມືອນນົກເຂົ້າໄປຫາຂ່າຍ ເຂົາບໍ່ຮູ້ເລີຍວ່າຊີວິດຂອງຕົນຈະເປັນອັນຕະຣາຍ
24 ພວກລູກເອີຍ ບັດນີ້ຈົ່ງຟັງພໍ່ ຈົ່ງເອົາໃຈໃສ່ໃນສິ່ງທີ່ພໍ່ບອກສອນ
25 ຢ່າໃຫ້ຜູ້ຍິງເຊັ່ນນັ້ນຊນະໃຈໄດ້ ຢ່າຫລົງເດີນໄປນຳນາງ ເພາະວ່ານາງໄດ້ເຮັດໃຫ້ຜູ້ຊາຍຈິບຫາຍໄປຫລາຍ ຄົນແລ້ວ
26 ແລະເປັນເຫດໃຫ້ຄົນຕາຍກໍຫລວງຫລາຍນັບບໍ່ຖ້ວນ
27 ການໄປຍັງເຮືອນຂອງຜູ້ຍິງເຊັ່ນນີ້ ກໍຄືເຈົ້າໄປສູ່ພິພົບຄົນຕາຍ ມັນເປັນທາງລັດສຳລັບໄປຕາຍ

## 8. ປັນຍາເປັນຂອງປະເສີດ

1 ຈົ່ງຟັງ ປັນຍາຈະເອີ້ນອອກໄປ ຄົນທັງຫລາຍຈະໄດ້ຍິນປັນຍາເອີ້ນ
2 ປັນຍາຢືນຢູ່ເທິງຈອມພູຂ້າງຖນົນ ແລະຢູ່ທີ່ສີ່ແຍກ
3 ຢູ່ທີ່ປາກປະຕູເຂົ້າເມືອງ ປັນຍາໄດ້ເອີ້ນວ່າ,
4 "ມະນຸດເອີຍ ຈົ່ງຟັງສຽງຮ້ອງຂອງເຮົາ ເຮົາເອີ້ນມະນຸດທຸກຄົນໃນໂລກ
5 ພວກເຈົ້າຍັງເປັນເດັກນ້ອຍຢູ່ບໍ ຖ້າຢ່າງນັ້ນຈົ່ງຮຽນເປັນຜູ້ໃຫຍ່ສາ ພວກເຈົ້າໂງ່ບໍ ຈົ່ງຮ່ຳຮຽນໃຫ້ສລາດ ສາ

6 ຈົ່ງຟັງຖ້ອຍຄຳອັນລ້ຳຄ່າຂອງເຮົາ ຖ້ອຍຄຳທັງປວງທີ່ເຮົາບອກເຈົ້ານັ້ນຖືກຕ້ອງ

7 ສິ່ງທີ່ເຮົາເວົ້າເປັນຄວາມຈິງທັງນັ້ນຄວາມໂຫດຮ້າຍເປັນສິ່ງຫນ້າກຽດຊັງຕໍ່ຮີມຝີປາກຂອງເຮົາ

8 ບັນດາຄຳປາກຂອງເຮົານັ້ນຊອບທັມ  ໃນນັ້ນບໍ່ມີອັນໃດບໍ່ຈິງ ຫລືທຳໃຫ້ຫລົງທາງ

9 ສຳລັບຜູ້ທີ່ເຂົ້າໃຈກໍແຈ່ມແຈ້ງ ແລະສຳລັບຜູ້ມີຄວາມຮູ້ກໍງ່າຍດີ

10 ຈົ່ງຊອກຫາຄຳສອນຂອງເຮົາຫລາຍກວ່າຊອກຫາເງິນ ແລະຊອກຫາຄວາມຮູ້ຫລາຍກວ່າຊອກຫາຄຳ

11 ເພາະວ່າປັນຍາປະເສີດກວ່າເພັດ ສິ່ງທີ່ເຈົ້າປາຖນານັ້ນຈະທຽບເທົ່າກັບປັນຍາບໍ່ໄດ້

12 ເຮົາມີຄວາມຮອບຮູ້ແລະເຫັນແຈ້ງງທຸກຢ່າງ

13 ການກຽດຊັງຄວາມຊົ່ວຄືການຢຳເກງພຣະຜູ້ເປັນເຈົ້າ ເຮົາກຽດຊັງຄວາມທະເຍີທະຍານ ກຽດຊັງຄວາມຊົ່ວຮ້າຍແລະຄຳຕົວະ

14 ເຮົາມີແຜນການ ແລະດຳເນີນຕາມແຜນການນັ້ນ ມີຄວາມເຂົ້າໃຈແລະມີກຳລັງ

15 ເຮົາຊ່ອຍໃຫ້ກະສັດທັງຫລາຍໄດ້ຄອບຄອງເມືອງ ແລະຊ່ອຍພວກປົກຄອງອອກກົດຫມາຍຢ່າງຍຸດຕິທັມ

16 ພວກເຂົາໃນທົ່ວໂລກໄດ້ປົກຄອງຍ້ອນເຮົາຊ່ອຍເຫລືອ ພວກບຸຣຸດ ແລະເຈົ້າຂຸນມູນນາຍກໍເຫມືອນກັນ

17 ເຮົາຮັກຜູ້ທີ່ຮັກເຮົາ ໃຜກໍຕາມທີ່ສແວງຫາເຮົາກໍຈະພົບເຮົາ

18 ເຮົາມີຊັບສົມບັດ ແລະກຽດຕິຍົດ ມີຄວາມຈະເຣີນຮຸ່ງເຮືອງ ແລະທຳທຸກຢ່າງສຳເຣັດຜົນ

19 ຫມາກຜົນທີ່ເຈົ້າໄດ້ຈາກເຮົານັ້ນດີກວ່າເງິນຄຳບໍຣິສຸດ

20 ເຮົາດຳເນີນຊີວິດໃນທາງຊອບທັມ ແລະເຄັ່ງຄັດຢູ່ໃນຄວາມຍຸດຕິທັມ

21 ໃຫ້ຊັບສົມບັດແກ່ຜູ້ທີ່ເຮົາຮັກ ແລະບັນຈຸຊັບໄວ້ເຕັມເຮືອນຂອງເຂົາ

22 ພຣະຜູ້ເປັນເຈົ້າຊົງສ້າງເຮົາກ່ອນທຸກສິ່ງ ເປັນພຣະຣາຊກິຈເບື້ອງຕົ້ນຂອງພຣະອົງຕັ້ງແຕ່ເຫິງມາແລ້ວ

23 ເຮົາຖືກສ້າງໄວ້ຕັ້ງແຕ່ໃດໆມາ ຕັ້ງແຕ່ກ່ອນເລີ້ມສ້າງໂລກ

24 ເຮົາເກີດກ່ອນມະຫາສະຫມຸດ ແລະບໍ່ນ້ຳ

25 ກ່ອນພູນ້ອຍ ພູໃຫຍ່ທັງຫລາຍ

26 ກ່ອນພຣະເຈົ້າຊົງສ້າງໂລກ ແລະພື້ນດິນ ຫລືກ່ອນດິນແດນເມັດທຳອິດ

27 ເມື່ອພຣະອົງຊົງສ້າງທ້ອງຟ້າ ຊົງຄຶງຂອບຟ້າຂ້າມມະຫາສະຫມຸດ

28 ຊົງບັນຈຸເມກໃສ່ໃນທ້ອງຟ້າ ຊົງໄຂຮູນ້ຳບາດານ

29 ຊົງສັ່ງໃຫ້ນ້ຳທະເລຢູ່ເປັນທີ່ເປັນບ່ອນ ແລະເມື່ອຊົງວາງສີລາລຶກຂອງໂລກ ເຮົາຢູ່ທີ່ນັ້ນແລ້ວ

30 ເຮົາເຫມືອນນາຍຊ່າງຢູ່ຄຽງຂ້າງພຣະອົງ ທຸກໆວັນເຮົາທຳໃຫ້ພຣະອົງປິຕິຍິນດີ

31 ເຮົາຫລິ້ນຢ່າງມີຄວາມສຸກຢູ່ນຳພຣະອົງ ຢູ່ນຳໂລກ ແລະມະນຸດຊາດທັງປວງ

32 ພວກຄົນຫນຸ່ມເອີຍ ບັດນີ້ຈົ່ງຟັງເຮົາ ຈົ່ງດຳເນີນຕາມທາງຂອງເຮົາ ແລ້ວພວກເຈົ້າຈະມີຄວາມສຸກ

33 ໃຫ້ຟັງຄຳສັ່ງສອນ ຢ່າລະເລີຍ ແລະໃຫ້ສລາດ

34 ຄົນຜູ້ທີ່ຟັງເຮົາ ຜູ້ທີ່ຢູ່ໃນປະຕູ ແລະຢູ່ທາງເຂົ້າເຮືອນຂອງເຮົາທຸກວັນຈະມີຄວາມສຸກ

35 ຜູ້ທີ່ພົບເຫັນເຮົາກໍພົບຊີວິດ ແລະພຣະຜູ້ເປັນເຈົ້າຈະຊົງພໍພຣະທັຍຜູ້ນັ້ນ
36 ຜູ້ທີ່ທຳຜິດຕໍ່ເຮົາກໍທຳຮ້າຍຕົວເອງ ຜູ້ໃດຊັງເຮົາ ຜູ້ນັ້ນຮັກຄວາມຕາຍ

## 9. ການເຊີນຊວນຂອງປັນຍາແລະຄວາມໂງ່

1 ປັນຍາໄດ້ສ້າງເຮືອນຂອງຕົນແລ້ວ ນາງໄດ້ຕັ້ງເສົາເຈັດຕົ້ນ
2 ປັນຍາໄດ້ຂ້າສັດຂອງນາງ ໄດ້ປະສົມເຫລົ້າອະງຸ່ນຂອງນາງ ໄດ້ຈັດໂຕະຂອງນາງແລ້ວ
3 ແລະໄດ້ສົ່ງສາວໃຊ້ຂອງນາງອອກໄປ ສົ່ງສຽງເອີ້ນຈາກທີ່ສູງໃນເມືອງ
4 ວ່າ, "ຜູ້ໃດທີ່ເປັນຄົນໂງ່ ໃຫ້ເຂົາຫັນເຂົ້າມາທາງນີ້" ນາງເວົ້າກັບຜູ້ທີ່ໄຮ້ສາມັນສຳນຶກວ່າ
5 "ມາເຖີດ ມາຮັບປະທານເຂົ້າຈີ່ຂອງເຮົາ ແລະດື່ມເຫລົ້າອະງຸ່ນທີ່ເຮົາໄດ້ປະສົມ
6 ຈົ່ງຖິ້ມຄວາມໂງ່ເສັຽ ແລະດຳຣົງຊີວິດຢູ່ ດຳເນີນໃນທາງຂອງຄວາມຮອບຮູ້ນັ້ນເຖີດ"
7 ຜູ້ທີ່ວ່າກ່າວຄົນມັກເຍາະເຍີ້ຍ ຈະໄດ້ຮັບການດູຫມິ່ນ ແລະຜູ້ທີ່ຕັກເຕືອນຄົນຊົ່ວຮ້າຍຈະຖືກກ່າວຫຍາບຊ້າ
8 ຢ່າຕັກເຕືອນຄົນມັກເຍາະເຍີ້ຍ ເພາະເຂົາຈະກຽດຊັງເຈົ້າ ຈົ່ງຕັກເຕືອນຄົນມີປັນຍາ ແລະເຂົາຈະຮັກເຈົ້າ
9 ຈົ່ງໃຫ້ຄຳສັ່ງສອນແກ່ຄົນມີປັນຍາ ແລະເຂົາຈະສລາດຍິ່ງຂຶ້ນ ຈົ່ງສອນຄົນຊອບທັມ ແລະເຂົາຈະເພີ້ມການຮຽນຮູ້ຫລາຍຂຶ້ນ
10 ຄວາມຢຳເກງພຣະເຈົ້າ ເປັນທີ່ເລີ້ມຕົ້ນຂອງປັນຍາ ແລະຊຶ່ງຮູ້ຈັກອົງບໍຣິສຸດ ເປັນຄວາມຮອບຮູ້
11 ເນື່ອງຈາກເຮົາ ວັນຄືນຂອງເຈົ້າຈະເພີ້ມທະວີຄູນ ແລະປີເດືອນແຫ່ງຊີວິດຂອງເຈົ້າຈະເພີ້ມພູນ
12 ຖ້າເຈົ້າສລາດ ເຈົ້າກໍສລາດເພື່ອຕົນເອງ ຖ້າເຈົ້າເຍາະເຍີ້ຍ ເຈົ້າກໍຈະທົນແຕ່ລຳພັງ
13 ຍິງໂງ່ນັ້ນສຽງປາກດັງ ນາງປ່ອຍຕົວ ແລະບໍ່ຮູ້ຈັກອາຍ
14 ນາງນັ່ງທີ່ປະຕູເຮືອນຂອງນາງ ແລະໃນທີ່ສູງໃນເມືອງ
15 ແລະເອີ້ນໃສ່ບັນດາຜູ້ທີ່ຜ່ານໄປ ຜູ້ເດີນຊື່ໄປຕາມທາງຂອງເຂົາ
16 ວ່າ, "ຜູ້ໃດທີ່ເປັນຄົນໂງ່ ໃຫ້ເຂົາຫັນເຂົ້າມາທີ່ນີ້" ນາງເວົ້າກັບເຂົາຜູ້ໄຮ້ສາມັນສຳນຶກ
17 ວ່າ, "ນ້ຳທີ່ຂະໂມຍມາຫວານດີ ແລະຂະຫນົມທີ່ຮັບປະທານໃນທີ່ລັບກໍແຊບ"
18 ແຕ່ເຂົາບໍ່ຮູ້ວ່າຄົນຕາຍຢູ່ທີ່ນັ້ນ ແລະແຂກຂອງນາງກໍຢູ່ໃນຫ້ອງເລິກຂອງແດນຜູ້ຕາຍ

## 10. ປຽບທຽບຄົນທ່ຽງທັມກັບຄົນຊົ່ວຮ້າຍ

1 ສຸພາສິດຂອງໂຊໂລໂມນ ບຸດຊາຍທີ່ສລາດກະທຳໃຫ້ບິດາຍິນດີ ແຕ່ບຸດຊາຍທີ່ໂງ່ເປັນຄວາມໂສກຂອງມານດາເຂົາ
2 ຄັງຊັບອະທັມບໍ່ເປັນກຳໄຣ ແຕ່ຄວາມຊອບທັມຊ່ອຍກູ້ຈາກຄວາມຕາຍ
3 ພຣະຜູ້ເປັນເຈົ້າບໍ່ໄດ້ຊົງປ່ອຍໃຫ້ຄົນຊອບທັມຫິວ ແຕ່ພຣະອົງຊົງຂັດຂວາງຄວາມຢາກຂອງຄົນຊົ່ວຮ້າຍ
4 ມືທີ່ຢ່ອນເປັນເຫດໃຫ້ເກີດຄວາມຍາກຈົນ ແຕ່ມືທີ່ຂະຫຍັນຂັນແຂງກະທຳໃຫ້ຮັ່ງມີ

5 ບຸດຊາຍທີ່ສະສົມໄວ້ໃນຣະດູແລ້ງກໍເປັນຄົນຫຍັ່ງຮູ້ ແຕ່ບຸດຊາຍຜູ້ຫລັບໃນຣະດູກ່ຽວກໍນໍາຄວາມອັບອາຍມາ

6 ພຣະພອນຢູ່ເທິງຫົວຂອງຜູ້ຊອບທັມ ແຕ່ຄວາມທາຣຸນຖ້ວມປາກຄົນຊົ່ວຮ້າຍ

7 ການຣະລຶກເຖິງຂອງຄົນຊອບທັມເປັນພຣະພອນ ແຕ່ຊື່ສຽງຂອງຄົນຊົ່ວຮ້າຍຈະເນົ່າເສັຽ

8 ໃຈທີ່ປະກອບດ້ວຍປັນຍາຈະສົນໃຈໃນບັນຍັດ ແຕ່ຄົນທີ່ເວົ້າໂງ່ຈະເຖິງຄວາມພິນາດ

9 ຜູ້ໃດທີ່ດໍາເນີນໃນຄວາມຊື່ສັດກໍດໍາເນີນຢ່າງຫມັ້ນຄົງດີ ແຕ່ຜູ້ທີ່ທໍາທາງຂອງຕົນໃຫ້ຊົ່ວກໍຈະປາກົດແຈ້ງແກ່ຄົນອື່ນ

10 ຜູ້ທີ່ຂະຫຍິບຕາກໍກວນຄວາມຫຍຸ້ງຍາກ ແຕ່ຜູ້ທີ່ຕັກເຕືອນຢ່າງກ້າຫານຈະສ້າງສັນຕິພາບ

11 ປາກຂອງຄົນຊອບທັມເປັນບໍ່ນໍ້າຊີວິດ ແຕ່ປາກຂອງຄົນຊົ່ວຮ້າຍປິດບັງຄວາມທາຣຸນ

12 ຄວາມກຽດຊັງກະຕຸ້ນໃຫ້ເກີດຄວາມວິວາດ ແຕ່ຄວາມຮັກຄອບງໍາບັນດາການທໍຣະຍົດເສັຽ

13 ທີ່ຮີມຝີປາກຂອງຜູ້ທີ່ມີຄວາມເຂົ້າໃຈຈະພົບປັນຍາ ແຕ່ໄມ້ແສ້ກໍເຫມາະສໍາລັບຫລັງຂອງຄົນໂງ່ນໍາຄວາມພິນາດມາໃກ້

14 ຄົນມີປັນຍາກໍສະສົມຄວາມຮູ້ໄວ້ ແຕ່ປາກຂອງຄົນໂງ່ນໍາຄວາມເດືອດຮ້ອນມາໃກ້

15 ຊັບສົມບັດຂອງຄົນຮັ່ງມີ ຄືເມືອງເຂັ້ມແຂງຂອງເຂົາ ແຕ່ຄວາມຍາກຈົນຂອງຄົນຈົນ ຄືຄວາມທຸກລໍາບາກຂອງເຂົາ

16 ຜົນງານຂອງຄົນຊອບທັມນໍາໄປເຖິງຊີວິດ ແຕ່ຂອງຄົນຊົ່ວຮ້າຍນໍາໄປເຖິງບາບ

17 ເຂົາຜູ້ສົນໃຈໃນຄໍາສັ່ງສອນກໍຢູ່ໃນວິຖີແຫ່ງຊີວິດ ແຕ່ເຂົາຜູ້ປະຕິເສດຄໍາເຕືອນສະຕິກໍຫລົງຫນີໄປ

18 ເຂົາຜູ້ປິດບັງຄວາມກຽດຊັງມີຮີມຝີປາກມຸສາ ແລະເຂົາຜູ້ອອກປາກໃສ່ຮ້າຍເປັນຄົນໂງ່

19 ການເວົ້າຫລາຍກໍສະສົມການທໍຣະຍົດ ແຕ່ເຂົາຜູ້ຢັບຢັ້ງຮີມຝີປາກຂອງຕົນເປັນຜູ້ຫຍັ່ງຮູ້

20 ລີ້ນຂອງຄົນຊອບທັມ ຄືເງິນເນື້ອບໍຣິສຸດ ຄວາມຄິດຂອງຄົນຊົ່ວຮ້າຍມີຄ່າແຕ່ຫນ້ອຍ

21 ຮີມຝີປາກຂອງຄົນຊອບທັມລ້ຽງຄົນເປັນອັນມາກ ແຕ່ຄົນໂງ່ຕາຍເພາະຂາດສາມັນສໍານຶກ

22 ພຣະພອນຂອງພຣະຜູ້ເປັນເຈົ້າກະທໍາໃຫ້ຮັ່ງມີ ແລະພຣະອົງບໍ່ໄດ້ແຖມຄວາມໂສກເສົ້າໄວ້ດ້ວຍ

23 ຄົນໂງ່ກະທໍາຄວາມຜິດເຫມືອນການຫລິ້ນສນຸກ ແຕ່ຄວາມປະພຶດອັນປະກອບດ້ວຍປັນຍາ ເປັນຄວາມເພີດເພີນແກ່ຄົນທີ່ມີຄວາມເຂົ້າໃຈ

24 ສິ່ງໃດທີ່ຄົນຊົ່ວຮ້າຍຄິດຢ້ານກົວ ມັນຈະມາເຖິງເຂົາ ແຕ່ສິ່ງໃດທີ່ຄົນຊອບທັມປາຖນາ ພຣະອົງຊົງທໍາຕາມໃຫ້

25 ເມື່ອພະຍຸຮ້າຍຜ່ານໄປແລ້ວ ຄົນຊົ່ວກໍບໍ່ມີອີກ ແຕ່ຄົນຊອບທັມຈະໄດ້ຮັບການສະຖາປະນາໄວ້ເປັນນິດ

26 ຢ່າງນໍ້າສົ້ມກັບແຂ້ວ ແລະຄວັນກັບຕາເປັນສັນໃດ ຄົນຂີ້ຄ້ານກັບຜູ້ທີ່ໃຊ້ເຂົາກໍເປັນສັນນັ້ນ

27 ຄວາມຢໍາເກງພຣະຜູ້ເປັນເຈົ້ານັ້ນຍືດຊີວິດໃຫ້ຍາວໄປ ແຕ່ປີເດືອນຂອງຄົນຊົ່ວຮ້າຍນັ້ນຈະສັ້ນເຂົ້າ

28 ຄວາມຫວັງຂອງຄວາມຊອບທັມຈົບລົງໃນຄວາມຍິນດີ ແຕ່ຄວາມມຸ່ງຫວັງຂອງຄວາມຊົ່ວຮ້າຍກໍສູນເປົ່າ

29 ພຣະເຈົ້າຊົງເປັນທີ່ກໍາບັງເຂັ້ມແຂງແກ່ຜູ້ປະພຶດຢ່າງທ່ຽງທັມ ແຕ່ຜູ້ກະທໍາຊົ່ວພຣະອົງຊົງທໍາລາຍ

30 ຜູ້ຊອບທັມຈະບໍ່ຖືກກຳຈັດເລີຍ ແຕ່ຄົນຊົ່ວຮ້າຍຈະບໍ່ໄດ້ຢູ່ໃນແຜ່ນດິນ
31 ປາກຂອງຄົນຊອບທັມນຳປັນຍາອອກມາ ແຕ່ລີ້ນຂອງຄົນຕະລົບຕະແລງຈະຖືກຕັດອອກ
32 ຮີມຝີປາກຂອງຄົນຊອບທັມຮູ້ວ່າອັນໃດພໍຫູຄົນ ແຕ່ປາກຂອງຄົນຊົ່ວຮ້າຍຮູ້ວ່າສິ່ງໃດຕະລົບຕະແລງ

## 11.

1 ຕາຊັ່ງຂີ້ລັກນັ້ນເປັນທີ່ກຽດຊັງຕໍ່ພຣະຜູ້ເປັນເຈົ້າ ແຕ່ລູກຕຸ້ມທີ່ຍຸດຕິທັມເປັນທີ່ປິຕິຍິນດີແດ່ພຣະອົງ
2 ເມື່ອຄວາມເຍີ້ຍິ່ງມາເຖິງ ຄວາມຫຍາມນໍ້າຫນ້າກໍມາດ້ວຍ ແຕ່ປັນຍາຢູ່ກັບຄົນຖ່ອມໃຈ
3 ຄວາມສັດຊື່ຂອງຄົນທີ່ທ່ຽງທັມຍ່ອມນຳເຂົາ ແຕ່ຄວາມຄົດໂກງຂອງຄົນທໍຣະຍົດຍ່ອມທຳລາຍເຂົາ
4 ຄວາມຮັ່ງມີບໍ່ອຳນວຍກຳໄຣໃນວັນຊົງພຣະພິໂຣດ ແຕ່ຄວາມຊອບທັມຊ່ອຍກູ້ໃຫ້ພົ້ນຄວາມມໍຣະນາ
5 ຄວາມຊອບທັມຂອງຄົນທີ່ບໍ່ມີຕຳຫນິຍ່ອມຮັກສາທາງຂອງເຂົາໃຫ້ຊື່ ແຕ່ຄົນຊົ່ວຮ້າຍກໍລົ້ມລົງດ້ວຍຄວາມຊົ່ວຮ້າຍ່ຂອງເຂົາເອງ
6 ຄວາມຊອບທັມຂອງຄົນທ່ຽງທັມຍ່ອມຊ່ອຍກູ້ເຂົາ ແຕ່ຄົນທໍຣະຍົດຈະຖືກຣາຄະຂອງເຂົາຈັບເປັນຊະເລີຍ
7 ເມື່ອຄົນຊົ່ວຮ້າຍຕາຍ ຄວາມຫວັງຂອງເຂົາກໍພິນາດ ແລະຄວາມມຸ່ງຫວັງຂອງຄົນຊົ່ວຊ້າກໍສູນເປົ່າ
8 ຄວາມຊອບທັມຮັບການຊ່ອຍເຫລືອໃຫ້ພົ້ນຄວາມລຳບາກ ແລະຄົນຊົ່ວຮ້າຍເຂົ້າໄປແທນທີ່
9 ຄົນບໍ່ຮູ້ພຣະເຈົ້າທຳລາຍເພື່ອນບ້ານຂອງເຂົາດ້ວຍປາກ ແຕ່ຄົນຊອບທັມໄດ້ຮັບການຊ່ອຍໃຫ້ພົ້ນດ້ວຍອາໄສຄວາມຮູ້
10 ເມື່ອຄົນຊອບທັມຢູ່ເຢັນເປັນສຸກບ້ານເມືອງກໍຊົມຊື່ນຍິນດີ ແລະເມື່ອຄົນຊົ່ວຮ້າຍພິນາດ ກໍມີສຽງໂຮ່ຮ້ອງດ້ວຍຄວາມຍິນດີ
11 ໂດຍພອນຂອງຄົນທ່ຽງທັມບ້ານເມືອງກໍເປັນທີ່ຍົກຍ້ອງ ແຕ່ວ່າມັນຄວ່ຳລົງໂດຍປາກຂອງຄົນຊົ່ວຮ້າຍ
12 ບຸກຄົນດູຖູກເພື່ອນບ້ານຂອງຕົນຍ່ອມຂາດສາມັນສຳນຶກ ແຕ່ຄົນທີ່ມີຄວາມເຂົ້າໃຈກໍຍັງມິດງຽບຢູ່
13 ບຸກຄົນທີ່ທ່ຽວຊຸບຊິບກໍເຜີຍຄວາມລັບ ແຕ່ບຸກຄົນທີ່ໄວ້ວາງໃຈໄດ້ຍ່ອມປົດບັງສິ່ງນຶ່ງສິ່ງໃດໄວ້ໄດ້
14 ທີ່ໃດທີ່ບໍ່ມີການນຳ ປະຊາຊົນກໍລົ້ມລົງ ແຕ່ໃນທີ່ຊຶ່ງມີທີ່ປຶກສາຫລາຍຍ່ອມມີຄວາມປອດພັຍ
15 ບຸກຄົນຜູ້ຮັບປະກັນຄົນອື່ນຈະຕ້ອງທົນທຸກ ແຕ່ຄົນທີ່ກຽດການຮັບປະກັນຍ່ອມປອດພັຍ
16 ສະຕຣີງາມສງ່າຍ່ອມໄດ້ຮັບກຽດ ແລະຊາຍຫນ້າເລືອດຍ່ອມຮັ່ງມີ
17 ຊາຍຜູ້ມີຄວາມເອັນດູຍ່ອມໃຫ້ປໂຍດແກ່ຕົນ ແຕ່ຊາຍທີ່ດຸຮ້າຍຍ່ອມທຳໃຫ້ຕົວເອງເຈັບ
18 ຊາຍຊົ່ວຮ້າຍໄດ້ຜົນຈ້າງທີ່ຫລອກລວງ ແຕ່ບຸກຄົນທີ່ຫວ່ານຄວາມຊອບທັມຈະໄດ້ບຳເຫນັດທີ່ແນ່ນອນ
19 ບຸກຄົນຜູ້ຕັ້ງຫມັ້ນຢູ່ໃນຄວາມຊອບທັມຈະມີຊີວິດຢູ່ ແຕ່ບຸກຄົນຜູ້ຕິດຕາມຄວາມຊົ່ວຮ້າຍຈະເຖິງຄວາມຕາຍ
20 ຄົນທີ່ຄວາມຄິດຕະລົບຕະແລງເປັນທີ່ຫນ້າກຽດຊັງແດ່ພຣະຜູ້ເປັນເຈົ້າ ແຕ່ຄົນທີ່ມີທາງໄຮ້ຕຳຫນິຍ່ອມເປັນທີ່ປິຕິຍິນດີຂອງພຣະອົງ

21 ຈົ່ງແນ່ໃຈເຖີດ ຄົນຊົ່ວຮ້າຍຈະຕ້ອງຖືກທຳລາຍຢ່າງແນ່ນອນ ແຕ່ບັນດາຜູ້ທີ່ເປັນຄົນຊອບທັມຈະໄດ້ຮັບ
ການຊ່ອຍກູ້
22 ສະຕຣີງາມທີ່ປາສຈາກຄວາມສລຽວສລາດກໍເຫມືອນຮ່ວງຄຳທີ່ດັງຂອງຫມູ
23 ຄວາມປາຖນາຂອງຄົນຊອບທັມຈົບລົງໃນຄວາມດີເທົ່ານັ້ນ ຄວາມມຸ່ງຫວັງຂອງຄົນຊົ່ວຮ້າຍຈົບລົງໃນ
ຄວາມພິໂຣດ
24 ບາງຄົນຍິ່ງຈຳຫນ່າຍຍິ່ງຮັ່ງມີ ບາງຄົນຍິ່ງຍຶດສິ່ງທີ່ຄວນຈຳຫນ່າຍໄວ້ຍິ່ງຂັດສົນກໍມີ
25 ບຸກຄົນທີ່ໃຈກວ້າງຂວາງຍ່ອມໄດ້ຮັບຄວາມມັ່ງຄັ່ງ ບຸກຄົນທີ່ຫົດນ້ຳ ເຂົາເອງຈະຮັບການຫົດນ້ຳ
26 ປະຊາຊົນສາບແຊ່ງຜູ້ທີ່ກັກເຂົ້າ ແຕ່ພຣະພອນຢູ່ເທິງຫົວຂອງຜູ້ທີ່ຂາຍເຂົ້າ
27 ບຸກຄົນຜູ້ສແວງຄວາມດີ ກໍສແວງຄວາມພໍໃຈ ແຕ່ຄວາມເດືອດຮ້ອນມາເຖິງຜູ້ທີ່ສແວງຫາທຳຄວາມຊົ່ວ
28 ບຸກຄົນຜູ້ວາງໃຈໃນຄວາມຮັ່ງມີຈະລົ້ມລະລາຍ ແຕ່ຄົນຊອບທັມຈະຮຸ່ງເຮືອງຢ່າງໃບໄມ້ຂຽວ
29 ບຸກຄົນຜູ້ທຳໃຫ້ຄົວເຮືອນຂອງເຂົາລຳບາກຈະຮັບລົມເປັນມໍຣະດົກ ແລະຄົນໂງ່ຈະເປັນຄົນໃຊ້ຂອງຄົນສ
ລາດ
30 ຜົນຂອງຄົນຊອບທັມເປັນຕົ້ນໄມ້ແຫ່ງຊີວິດ ການຝ່າຝືນກົດຫມາຍຍ່ອມທຳລາຍຊີວິດ
31 ເບິ່ງແມ່, ແມ້ຄົນຊອບທັມອາດຈະຖືກທຳໂທດໃນແຜ່ນດິນໂລກ ຄົນຊົ່ວຮ້າຍແລະຄົນບາບຈະຍິ່ງກວ່ານັ້ນ
ສັກເທົ່າໃດ

## 12.

1 ຜູ້ໃດທີ່ຮັກວິນັຍກໍຮັກຄວາມຮູ້ ແຕ່ບຸກຄົນທີ່ກຽດຊັງການຕັກເຕືອນກໍເປັນຄົນໂງ່ຈ້າ
2 ຄົນດີເປັນທີ່ພໍພຣະທັຍຂອງພຣະເຈົ້າ ແຕ່ຄົນທີ່ຄິດການຊົ່ວຮ້າຍພຣະອົງຊົງລົງໂທດ
3 ຄົນຈະຕັ້ງຢູ່ດ້ວຍຄວາມໂຫດຮ້າຍບໍ່ໄດ້ ແຕ່ຮາກຂອງຄົນຊອບທັມຈະບໍ່ຮູ້ຈັກເຄື່ອນຍ້າຍ
4 ເມັຽດີເປັນມົງກຸດຂອງຜົວຕົນ ແຕ່ນາງຜູ້ທີ່ນຳຄວາມອັບອາຍມາກໍເຫມືອນຄວາມເນົ່າເປື່ອຍໃນກະດູກຜົວ
5 ຄວາມຄິດຂອງຄົນຊອບທັມນັ້ນຍຸດຕິທັມ ແຕ່ຄຳຫາຣືຂອງຄົນຊົ່ວຮ້າຍນັ້ນທໍຣະຍົດ
6 ຖ້ອຍຄຳຂອງຄົນຊົ່ວຮ້າຍຫມອບຄອຍປະຫັດປະຫານ ແຕ່ປາກຂອງຄົນທ່ຽງທັມຊ່ອຍຄົນໃຫ້ລອດ
7 ຄົນຊົ່ວຮ້າຍຄວ່ຳແລ້ວແລະບໍ່ມີອີກ ແຕ່ເຮືອນຂອງຄົນຊອບທັມຍັງດຳຣົງຢູ່
8 ຄົນຈະໄດ້ຄຳຊົມເຊີຍຕາມສາມັນສຳນຶກທີ່ດີຂອງເຂົາ ແຕ່ຄົນທີ່ຄວາມຄິດຕະລົບຕະແລງກໍເປັນທີ່ດູຫມິ່ນ
9 ຜູ້ນ້ອຍທີ່ທຳມາຫາກິນເອງ ກໍດີກວ່າຄົນທີ່ທຳທີ່ວ່າເປັນຜູ້ຍິ່ງໃຫຍ່ແຕ່ຂາດອາຫານ
10 ຄົນຊອບທັມຍ່ອມເຫັນແກ່ຊີວິດສັດຂອງເຂົາ ແຕ່ຄວາມກະຣຸນາຂອງຄົນໂຫດຮ້າຍຄືຄວາມດຸຮ້າຍ
11 ບຸກຄົນທີ່ໄຖນາຂອງຕົນຈະມີອາຫານອຸດົມ ແຕ່ບຸກຄົນທີ່ຕິດຕາມການງານທີ່ໄຮ້ຄ່າຍ່ອມບໍ່ມີສາມັນສຳນຶກ
12 ທໍຄອຍແຂງແຮງຂອງຄົນຊົ່ວຮ້າຍຫັກພັງລົງ ແຕ່ຮາກຖານຂອງຄົນຊອບທັມຕັ້ງຫມັ້ນຄົງຢູ່

13 ຄົນຊົ່ວຮ້າຍຍ່ອມຕິດບ້ວງໂດຍການລະເມີດແຫ່ງຮີມຝີປາກຂອງຕົນ ແຕ່ຄົນຊອບທັມຫນີພົ້ນຈາກຄວາມລຳບາກ
14 ຈາກຜົນແຫ່ງຖ້ອຍຄຳຂອງຕົນຄົນກໍອີ່ມໃຈໃນຄວາມດີ ແລະຜົນງານແຫ່ງມືຂອງເຂົາກໍກັບມາຫາເຂົາ
15 ທາງຂອງຄົນໂງ່ນັ້ນຖືກຕ້ອງໃນສາຍຕາຂອງເຂົາເອງ ແຕ່ຄົນມີປັນຍາຍ່ອມຟັງຄຳແນະນຳ
16 ຈະຮູ້ຄວາມຮ້ອນໃຈຂອງຄົນໂງ່ໄດ້ທັນທີ ແຕ່ຄົນທີ່ຫຍັ່ງຮູ້ຍ່ອມບໍ່ສົນໃຈຕໍ່ການດູຫມິ່ນ
17 ບຸກຄົນຜູ້ໃດເວົ້າຄວາມຈິງໃຫ້ຫລັກຖານທີ່ຊື່ຕົງ ແຕ່ພຍານເທັດກ່າວຄຳຫລອກລວງ
18 ມີບາງຄົນທີ່ຄຳເວົ້າບໍ່ຈິງຂອງເຂົາເຫມືອນດາບແທງ ແຕ່ລີ້ນຂອງຄົນມີປັນຍານຳການຮັກສາມາໃຫ້
19 ຮີມຝີປາກທີ່ເວົ້າຈິງທົນຢູ່ໄດ້ເປັນນິດ ແຕ່ລີ້ນທີ່ເວົ້າຕົວະຢູ່ໄດ້ພຽງຊົ່ວຄາວ
20 ຄວາມຫລອກລວງຢູ່ໃນໃຈຂອງບັນດາຜູ້ຄິດແຜນການຊົ່ວຮ້າຍ ແຕ່ບັນດາຜູ້ກະແຜນງານທີ່ດີມີຄວາມຊື່ນບານ
21 ບໍ່ມີຄວາມຊົ່ວຕົກຢູ່ກັບຄົນຊອບທັມ ແຕ່ຄົນຊົ່ວຮ້າຍເຕັມດ້ວຍຄວາມລຳບາກ
22 ຮີມຝີປາກທີ່ເວົ້າມຸສາເປັນທີ່ຫນ້າກຽດຊັງແກ່ພຣະຜູ້ເປັນເຈົ້າ ແຕ່ບັນດາຜູ້ທີ່ປະພຶດຄວາມຊື່ສັດເປັນທີ່ປິຕິຍິນດີແດ່ພຣະອົງ
23 ຄົນທີ່ຫຍັ່ງຮູ້ຍ່ອມເກັບຄວາມຮູ້ໄວ້ ແຕ່ຄົນໂງ່ປ່າວຮ້ອງຄວາມໂງ່ຂອງຕົນ
24 ມືຂອງຄົນທີ່ດຸຫມັ່ນຈະຄອບຄອງ ຝ່າຍຄົນຂີ້ຄ້ານຈະຖືກບັງຄັບໃຫ້ທຳງານເປັນທາດ
25 ຄວາມກະວົນກະວາຍຂອງຄົນຖ່ວງເຂົາລົງ ແຕ່ຖ້ອຍຄຳທີ່ດີກະທຳໃຫ້ເຂົາຊື່ນຊົມ
26 ຄົນຊອບທັມຫັນຈາກທາງຊົ່ວຮ້າຍ ແຕ່ທາງຂອງຄົນຊົ່ວຮ້າຍນຳເຂົາເອງໃຫ້ຫນີໄປ
27 ຄົນຂີ້ຄ້ານຈະຈັບເຫຍື່ອຂອງເຂົາບໍ່ໄດ້ ແຕ່ຄົນດຸຫມັ່ນຈະໄດ້ຊັບສົມບັດປະເສີດ
28 ໃນວິຖີຂອງຄວາມຊອບທັມເປັນຊີວິດ ແຕ່ທາງຂອງຄວາມຜິດນຳໄປເຖິງຄວາມມໍຣະນາ

## 13.

1 ບຸດຊາຍທີ່ສລາດຍ່ອມເອົາໃຈໃສ່ເມື່ອບິດາບອກສອນ ແຕ່ບຸດທີ່ໂງ່ບໍ່ຍ່ອມຮັບຟັງ
2 ຄົນດີຈະໄດ້ຮັບຣາງວັນຍ້ອນການເວົ້າດີ ແຕ່ຄົນໃຈຊົ່ວຕ້ອງການຄວາມໂຫດຮ້າຍ
3 ໃຫ້ລະມັດລະວັງສິ່ງທີ່ເຈົ້າເວົ້າ ເພື່ອຮັກສາຊີວິດຂອງຕົນ ເພາະຄົນທີ່ເວົ້າບໍ່ລະມັດລະວັງກໍທຳລາຍຕົນເອງ
4 ຄົນຂີ້ຄ້ານອາດຢາກໄດ້ສິ່ງໃດສິ່ງນຶ່ງຢ່າງແຮງກ້າ ແຕ່ເຂົາຈະບໍ່ໄດ້ມັນ ຄົນດຸຫມັ່ນຈະໄດ້ທຸກສິ່ງຕາມຄວາມຕ້ອງການ
5 ຄົນສັດຊື່ກຽດຊັງການຕົວະ ຄຳເວົ້າຂອງຄົນຊົ່ວບໍ່ມີຄຸນຄ່າ ແລະເປັນຫນ້າລະອາຍ
6 ຄວາມຊອບທັມຍ່ອມຮັກສາຄົນຊອບທັມ ຄົນອະທັມຍ່ອມເຊື່ອມເສັຽຍ້ອນຄວາມອະທັມ
7 ບາງຄົນສະແດງຕົນວ່າເປັນຄົນຮັ່ງມີ ແຕ່ວ່າບໍ່ມີຫຍັງເລີຍ ບາງຄົນສະແດງຕົນວ່າເປັນຄົນທຸກຍາກ ແຕ່ມີຊັບສົມບັດຢ່າງຫລວງຫລາຍ

8 ຄົນຮັ່ງມີໃຊ້ເງິນໄຖ່ເອົາຊີວິດໄວ້ ແຕ່ຄົນທຸກຍາກຈະບໍ່ຖືກຂູ່ເຂັນຍ້ອນເງິນ

9 ຄົນຊອບທັມເປັນເຫມືອນດວງອາທິດທີ່ສອ່ງແສງຮຸ່ງເຮືອງ ຄົນຊົ່ວຮ້າຍເປັນເຫມືອນຕະກຽງທີ່ໃກ້ຈະມອດແລ້ວ

10 ການຍອມຮັບຟັງຄວາມຄິດເຫັນຂອງຄົນອື່ນເປັນການສລາດ ແຕ່ການບໍ່ຍອມຟັງຄວາມຄິດເຫັນຂອງຄົນອື່ນເປັນການບໍ່ດີ ເພາະມັນເປັນເຫດໃຫ້ຄົນເຮົາຜິດຖຽງກັນ

11 ຊັບສົມບັດທີ່ເຈົ້າຫາມາໄດ້ດ້ວຍວິທີງ່າຍໆນັ້ນ ບໍ່ເທິງມັນກໍຈະສູນເສັຽຫມົດ ແຕ່ຊັບທີ່ໄດ້ມາດ້ວຍເຫື່ອແຮງຂອງເຈົ້າຈະພາໃຫ້ເຈົ້າຈະເຣີນຂຶ້ນ

12 ເມື່ອຫມົດຫວັງຫົວໃຈກໍເຈັບຊ້ຳ ແຕ່ເມື່ອໄດ້ມາສົມຄວາມປາຖນາກໍຊົມຊື່ນຍິນດີ

13 ການບໍ່ຍອມຮັບເອົາຄຳແນະນຳທີ່ດີ ກໍຄືເຈົ້າແກວ່ງຕີນຫາສ້ຽນ ຖ້າເຈົ້າປະພຶດຕາມຄຳແນະນຳຂອງພຣະເຈົ້າ ເຈົ້າກໍຈະປອດພັຍ

14 ຄຳສອນຂອງນັກປາດເປັນບໍ່ເກີດແຫ່ງຊີວິດ ມັນຈະຊ່ອຍໃຫ້ເຈົ້າຫລີກຫນີໄປໄດ້ເມື່ອຕົກຢູ່ໃນອັນຕະຣາຍ

15 ຜູ້ສລາດຮອບຄອບຍ່ອມໄດ້ຮັບຄວາມເຄົາຣົບນັບຖື ແຕ່ຄົນໃຈຄົດຍ່ອມນຳໄພວິບັດມາສູ່ຕົນເອງ

16 ຄົນຜູ້ມີປັນຍາຍ່ອມຄິດກ່ອນສເມີຈຶ່ງກະທຳ ແຕ່ຄົນໂງ່ກໍອວດຄວາມໂງ່ຂອງຕົນ

17 ທູດທີ່ບໍ່ສັດຊື່ຍ່ອມນຳຄວາມຍາກລຳບາກມາໃຫ້ ແຕ່ຜູ້ທີ່ສັດຊື່ກໍນຳສັນຕິມາ

18 ຄົນທີ່ບໍ່ສຶກສາຮ່ຳຮຽນຈະຍາກຈົນແລະໄຮ້ກຽດ ຜູ້ທີ່ເຊື່ອຟັງຄຳຕັກເຕືອນຈະໄດ້ຮັບການຍ້ອງຍໍ

19 ການໄດ້ມາສົມຄວາມປາຖນາກໍດີແທ້ ສະນັ້ນຄົນໂງ່ຈຶ່ງບໍ່ຍອມປະຄວາມປາຖນາຊົ່ວ

20 ເມື່ອເຈົ້າຄົບກັບຄົນດີກໍມີສີແກ່ຕົວ ເມື່ອຄົບກັບຄົນຊົ່ວກໍພາຕົວເສົ້າຫມອງ

21 ຄວາມເຄາະຮ້າຍຕາມຕິດຄົນບາບ ແຕ່ຄວາມຈະເຣີນຮ່◌ຸງເຮືອງໃຫ້ບຳເຫນັດແກ່ຄົນຊອບທັມ

22 ຄົນດີປະມໍຣະດົກໄວ້ໃຫ້ແກ່ຫລານໆ ແຕ່ຊັບສົມບັດຂອງຄົນບາບນັ້ນສະສົມໄວ້ໃຫ້ຄົນຊອບທັມ

23 ດິນຂອງຄົນຍາກຈົນທີ່ໄຖ່ຖິ້ມໄວ້ກໍເກີດຜົນອຸດົມ ແຕ່ມັນຖືກກວາດໄປຕາມຄວາມອະຍຸດຕິທັມ

24 (ຮັກງົວໃຫ້ຜູກ ຮັກລູກໃຫ້ແອບສອນ) ບຸກຄົນທີ່ສງວນໄມ້ແສ້ກໍກຽດຊັງບຸດຂອງຕົນ ແຕ່ຜູ້ທີ່ຮັກເຂົາພຍາຍາມຕີສອນເຂົາ

25 ຄົນຊອບທັມຮັບປະທານໄດ້ຈົນພໍໃຈ ແຕ່ທ້ອງຂອງຄົນຊົ່ວຮ້າຍກໍຫິວ

## 14.

1 ປັນຍາສ້າງເຮືອນຂອງນາງຂຶ້ນ ແຕ່ຄວາມໂງ່ມ້າງມັນລົງດ້ວຍມືຂອງຕົນ

2 ບຸກຄົນຜູ້ທີ່ດຳເນີນໃນຄອນທ່ຽງທັມ ຢຳເກງພຣະຜູ້ເປັນເຈົ້າ ແຕ່ບຸກຄົນທີ່ຄົດລ້ຽວໃນທາງຂອງເຂົາກໍດູຫມິ່ນພຣະອົງ

3 ໃນປາກຂອງຄົນໂງ່ມີໄມ້ແສ້ສຳລັບຫລັງຂອງເຂົາ ແຕ່ຮີມຝີປາກຂອງນັກປາດຈະສງວນເຂົາໄວ້

4 ທີ່ໃດທີ່ບໍ່ມີງົວເຖິກ ທີ່ນັ້ນບໍ່ມີເຂົ້າ ແຕ່ພືດຜົນອຸດົມໄດ້ມາດ້ວຍແຮງງົວ

5 ພານທີ່ຊື່ສັດບໍ່ຕົວະ ແຕ່ພຍານເທັດຫາຍໃຈຄຳຕົວະອອກມາ
6 ຄົນມັກເຍາະເຍີ້ຍສແວງປັນຍາເສັຽເປົ່າ ແຕ່ຄວາມຮູ້ນັ້ນກໍງ່າຍແກ່ຄົນທີ່ມີຄວາມເຂົ້າໃຈ
7 ຈົ່ງໄປໃຫ້ພົ້ນໜ້າຄົນໂງ່ ເພາະທີ່ນັ້ນເຈົ້າບໍ່ພົບຖ້ອຍຄຳແຫ່ງຄວາມຮູ້
8 ປັນຍາຂອງຄົນຫຍັ່ງຮູ້ຄືການເຂົ້າໃຈທາງຂອງເຂົາ ແຕ່ຄວາມໂງ່ຂອງຄົນໂງ່ເປັນທີ່ຫລອກລວງ
9 ພຣະເຈົ້າຊົງເຍາະເຍີ້ຍຄົນຊົ່ວຮ້າຍ ແຕ່ຄົນທ່ຽງທັມຊື່ນບານໃນຄວາມໂປດປານຂອງພຣະອົງ
10 ຈິດໃຈຮູ້ຄວາມຂົມຂື່ນຂອງໃຈເອງ ແລະບໍ່ມີໃຜອື່ນມາເຂົ້າສ່ວນຄວາມຊື່ນບານຂອງມັນ
11 ເຮືອນຂອງຄົນຊົ່ວຮ້າຍຈະຖືກທຳລາຍ ແຕ່ເຕັນຂອງຄົນທ່ຽງທັມຈະຮຸ່ງເຮືອງ
12 ມີທາງນຶ່ງຊຶ່ງຄົນເຮົາເບິ່ງເຫມືອນຖືກ ແຕ່ມັນສິ້ນສຸດລົງທີ່ທາງຂອງຄວາມມໍຣະນາ
13 ແມ້ໃຈຂອງຄົນທີ່ຫົວເລາະກໍເສົ້າ ແລະທີ່ສຸດຂອງຄວາມຊື່ນບານຄືຄວາມໂສກສລົດ
14 ຄົນຕະລົບຕະແລງຈະໄດ້ຜົນຈາກທາງຂອງເຂົາຈົນເຕັມ ແລະຄົນດີກໍຈະໄດ້ຜົນແຫ່ງການກະທຳຂອງເຂົາ
15 ຄົນໂງ່ເຊື່ອຖືທຸກຢ່າງ ແຕ່ຄົນຫຍັ່ງຮູ້ມອງເບິ່ງວ່າເຂົາກຳລັງໄປທາງໃດ
16 ຄົນມີປັນຍາກໍລະວັງຕົວ ແລະຫັນເສັຽຈາກຄວາມຊົ່ວຮ້າຍ ແຕ່ຄົນໂງ່ຂາດຄວາມຍັບຍັ້ງແລະຈຶ່ງລົງມືທຳໄປ
ຢ່າງວ່ອງໄວ
17 ຄົນໂມໂຫຮ້າຍປະພຶດໂງ່ຈ້າ ແຕ່ຄົນສລຽວສລາດນັ້ນອົດທົນ
18 ຄົນຈ້າໄດ້ຄວາມໂງ່ ແຕ່ຄົນຫຍັ່ງຮູ້ກໍມີຄວາມຮູ້ເປັນມົງກຸດ
19 ຄົນຊົ່ວຮ້າຍກົ້ມຂາບຄົນດີ ຄົນຊົ່ວຮ້າຍກົ້ມຂາບຢູ່ທີ່ປະຕູເມືອງຂອງຄົນຊອບທັມ
20 ຄົນຍາກຈົນນັ້ນແມ້ເພື່ອນບ້ານຂອງຕົນກໍລັງກຽດ ແຕ່ຄົນຮັ່ງມີກໍມີສະຫາຍມາກມາຍ
21 ບຸກຄົນທີ່ດູຫມິ່ນເພື່ອນບ້ານຂອງຕົນກໍເປັນຄົນບາບ ແຕ່ບຸກຄົນທີ່ເອັນດູຄົນຍາກຈົນກໍເປັນສຸກ
22 ຄົນທີ່ຄິດການຊົ່ວນັ້ນບໍ່ຜິດຫລື ບັນດາຜູ້ທີ່ຄິດການດີກໍພົບຄວາມຈົ່ງຮັກພັກດີ ແລະຄວາມຊື່ສັດ
23 ມີກຳໄຣຢູ່ໃນງານທຸກຢ່າງ ການພຽງແຕ່ເວົ້ານັ້ນໂນ້ມໄປທາງທຸກລຳບາກ
24 ມົງກຸດຂອງນັກປາດຄືປັນຍາ ແຕ່ຄວາມໂງ່ເປັນພວງມາລັຍຂອງຄົນໂງ່
25 ພຍານຊື່ສັດຊ່ອຍຊີວິດໃຫ້ລອດ ແຕ່ຜູ້ທີ່ເປົ່ງຄຳຕົວະເປັນຄົນຂາຍຄົນ
26 ຄວາມຢຳເກງພຣະຜູ້ເປັນເຈົ້າທຳໃຫ້ຄົນຢູ່ຢ່າງອຸ່ນໃຈ ລູກຫລານຂອງເຂົາຈະມີທີ່ເພິ່ງ
27 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນນ້ຳພຸແຫ່ງຊີວິດ ເພື່ອຜູ້ນຶ່ງຜູ້ໃດຈະຫລີກຈາກບ້ວງຂອງຄວາມມໍຣະນາໄດ້
28 ໃນມວນປະຊາຊົນກໍມີສັກສີຂອງກະສັດ ແຕ່ໄຮ້ປະຊາຊົນເຈົ້ານາຍກໍໄຮ້ຄ່າ
29 ບຸກຄົນທີ່ໂກດຊ້າກໍມີຄວາມເຂົ້າໃຈຫລາຍ ແຕ່ບຸກຄົນທີ່ໂມໂຫໄວກໍຍົກຍ້ອງຄວາມໂງ່
30 ໃຈທີ່ສງົບໃຫ້ຊີວິດແກ່ເນື້ອຫນັງ ແຕ່ກິເລດກະທຳໃຫ້ກະດູກຜຸ
31 ບຸກຄົນຜູ້ບີບບັງຄັບຄົນຍາກຈົນ ດູຖູກພຣະຜູ້ສ້າງຂອງເຂົາ ແຕ່ບຸກຄົນທີ່ເອັນດູຕໍ່ຄົນຂັດສົນກໍຖວາຍກຽດ
ແດ່ພຣະອົງ

32 ຄົນຊົ່ວຮ້າຍກໍຖືກຄວ່ຳລົງຕາມການກະທຳຊົ່ວຮ້າຍຂອງເຂົາ ແຕ່ຄົນຊອບທັມພົບທີ່ລີ້ພັຍດ້ວຍໃຈແນ່ວແນ່ຂອງເຂົາ
33 ປັນຍາອາໄສຢູ່ໃນຄວາມຄິດຂອງຄົນທີ່ມີຄວາມເຂົ້າໃຈ ແຕ່ປັນຍານັ້ນບໍ່ປະຈັກໃນໃຈຂອງຄົນໂງ່
34 ຄວມຊອບທັມເຊີດຊູປະຊາຊາດນຶ່ງໆ ແຕ່ຄວາມບາບເປັນເຫດໃຫ້ຊົນຊາດນຶ່ງໆຖືກຕຳໜິ
35 ຂ້າຣາຊການຜູ້ປະກອບກິຈຢ່າງສລຽວສລາດກໍໄດ້ຮັບຄວາມໂປດປານຈາກພຣະຣາຊາ ແຕ່ພຣະພິໂຣດຂອງພຣະອົງກໍຕົກລົງເທິງຜູ້ທີ່ປະພຶດໜ້າລະອາຍ

## 15.

1 ຄຳຕອບອ່ອນຫວານຊ່ວຍລະງັບຄວາມໂກດຮ້າຍໃຫ້ຫາຍໄປ ແຕ່ຄຳຫຍາບຄາຍຍົວະໃຫ້ເກີດຄວາມໂກດ
2 ລີ້ນຂອງນັກປາດແຈກຈ່າຍຄວາມຮູ້ ແຕ່ປາກຂອງຄົນໂງ່ພົ່ນຄວາມໂງ່ອອກມາ
3 ພຣະຜູ້ເປັນເຈົ້າຊົງເຫັນທຸກສິ່ງໃນທຸກໆບ່ອນ ພຣະອົງຊົງເຫັນທັງຜູ້ທຳດີແລະທຳຊົ່ວ
4 ຄຳເວົ້າທີ່ສຸພາບອ່ອນຫວານທຳໃຫ້ມີຊີວິດຊີວາ ແຕ່ຄຳເວົ້າທີ່ຫຍາບຄາຍທຳໃຫ້ຈິດໃຈຂອງມະນຸດແຕກສະລາຍ
5 ຄົນໂງ່ຍ່ອມລະເລີຍຕໍ່ສິ່ງທີ່ບິດາສອນ ແຕ່ຄົນສລາດຈະຮັບເອົາຄຳຕັກເຕືອນຂອງບິດາ
6 ເມື່ອປະສົບຄວາມຍາກລຳບາກ ຄົນຊອບທັມຍ່ອມຮັກສາຊັບສົມບັດຂອງຕົນໄວ້ໄດ້ ແຕ່ຄົນອະທັມຍ່ອມທຳໃຫ້ມັນສູນເສັຽໄປ
7 ຮິມຝີປາກຂອງນັກປາດແພ່ຜາຍຄວາມຮູ້ອອກໄປ ແຕ່ພວກຄົນໂງ່ບໍ່ສາມາດທຳໄດ້
8 ເມື່ອຄົນດີອ້ອນວອນພຣະຜູ້ເປັນເຈົ້າຊົງພໍພຣະທັຍ ແຕ່ເມື່ອຄົນຊົ່ວຖວາຍບູຊາພຣະອົງຊົງກຽດຊັງ
9 ພຣະຜູ້ເປັນເຈົ້າຊົງກຽດຊັງຄວາມປະພຶດຂອງຄົນຊົ່ວ ແຕ່ຊົງພໍພຣະທັຍຄົນທີ່ທຳໃນທາງຊອບທັມ
10 ມີໂທດໜັກສຳລັບຜູ້ທີ່ປະຖິ້ມທາງດີ ບຸກຄົນຜູ້ກຽດຊັງຄຳເຕືອນສະຕິຈະຕາຍເປົ່າ
11 ແດນຜູ້ຕາຍແລະແດນພິນາດກໍປະຈັກແຈ້ງຢູ່ຕໍ່ພຣະເຈົ້າ ໃຈຂອງມະນຸດຈະແຈ້ງຕໍ່ພຣະອົງຍິ່ງກວ່ານັ້ນສັກເທົ່າໃດ
12 ຄົນມັກເຍາະເຍີ້ຍບໍ່ມັກຖືກຕັກເຕືອນ ເຂົາຈະບໍ່ໄປຫານັກປາດ
13 ໃຈທີ່ຍິນດີທຳໃຫ້ໃບໜ້າສົດຊື່ນ ແຕ່ໂດຍຄວາມເສັຽໃຈດວງຈິດກໍສລາຍລົງ
14 ຄວາມຄິດຂອງບຸກຄົນຜູ້ມີຄວາມເຂົ້າໃຈກໍສແວງຫາຄວາມຮູ້ ແຕ່ປາກຂອງຄົນໂງ່ກິນຄວາມໂງ່ເປັນອາຫານ
15 ທຸກໆມື້ຂອງຄົນທີ່ທຸກໃຈກໍຮ້າຍ ແຕ່ໃຈເປັນສຸກກໍຊື່ນໃຈໄປເລື້ອຍໆ
16 ມີຊັບໜ້ອຍແຕ່ມີຄວາມຢຳເກງພຣະຜູ້ເປັນເຈົ້າ ດີກວ່າມີຄັງຊັບໃຫຍ່ ແຕ່ມີຄວາມລຳບາກຢູ່ດ້ວຍ
17 ກິນຜັກເປັນອາຫານໃນທີ່ມີຄວາມຮັກ ກໍດີກວ່າກິນເນື້ອງົວອ້ວນພ້ອມກັບຄວາມກຽດຊັງຢູ່ດ້ວຍ
18 ຄົນໃຈຮ້ອນກໍ່ໃຫ້ເກີດການວິວາດ ແຕ່ບຸກຄົນຜູ້ໂກດຊ້າກໍລະງັບການຊິງດີ
19 ທາງຂອງຄົນຂີ້ຄ້ານມີຕົ້ນໜາມງອກຢູ່ເຕັມ ແຕ່ວິຖີຂອງຄົນທ່ຽງທັມເປັນທາງຫລວງຮາບສເມີ

20 ບຸດຊາຍທີ່ສລາດກະທຳໃຫ້ບິດາຍິນດີ ແຕ່ຄົນໂງ່ດູຖູກມານດາຂອງຕົນ
21 ຄວາມໂງ່ເປັນຄວາມຊື່ນບານແກ່ບຸກຄົນຜູ້ບໍ່ມີສາມັນສຳນຶກ ແຕ່ຄົນທີ່ມີຄວາມເຂົ້າໃຈຈະເດີນຕົງໄປ
22 ປາສຈາກການປຶກສາຫາລື ແຜນງານກໍລົ້ມເຫລວ ແຕ່ມີຜູ້ແນະນຳຫລາຍໆແຜນງານນັ້ນກໍສຳເຣັດ
23 ທີ່ຈະຕອບໃຫ້ເຫມາະສົມກໍເປັນຄວາມຊື່ນບານແກ່ຄົນ ຄຳດຽວທີ່ຖືກກາລະກໍດີແທ້
24 ທາງຂອງຄົນສລາດນຳຂຶ້ນໄປສູ່ຊີວິດ ເພື່ອເຂົາຈະໄດ້ຫລີກຫນີຈາກແດນຜູ້ຕາຍເບື້ອງລຸ່ມ
25 ພຣະຜູ້ເປັນເຈົ້າຊົງມ້າງເຮືອນຂອງຄົນເຍີ່ຍິ່ງ ແຕ່ໃຫ້ຂອບເຂດຂອງຍິງຫມ້າຍຄົງຢູ່
26 ຄວາມຄິດຂອງຄົນຊົ່ວຮ້າຍເປັນສິ່ງທີ່ຫນ້າກຽດຊັງແກ່ພຣະຜູ້ເປັນເຈົ້າ ແຕ່ຖ້ອຍຄຳຂອງຄົນບໍຣິສຸດເປັນທີ່ພໍພຣະທັຍຂອງພຣະອົງ
27 ບຸກຄົນຜູ້ທີ່ຫາກຳໄຣໃນທາງລັດກໍກະທຳຄວາມລຳບາກມາສູ່ຄອບຄົວຂອງຕົນ ແຕ່ບຸກຄົນຜູ້ກຽດຊັງສິນບົນຈະມີຊີວິດຢູ່
28 ໃຈຂອງຄົນຊອບທັມຮຳພຶງວ່າຈະຕອບຢ່າງໃດ ແຕ່ປາກຂອງຄົນຊົ່ວຮ້າຍຕອບສິ່ງຊົ່ວຮ້າຍອອກ
29 ພຣະຜູ້ເປັນເຈົ້າຊົງຢູ່ຫ່າງໄກຈາກຄົນຊົ່ວຮ້າຍ ແຕ່ພຣະອົງຊົງໄດ້ຍິນຄຳອ້ອນວອນຂອງຄົນຊອບທັມ
30 ສວ່າງຂອງຕາທຳໃຫ້ໃຈຍິນດີ ແລະຂ່າວດີກະທຳໃຫ້ມີຈິດໃຈສະບາຍຂຶ້ນ
31 ຫູທີ່ຟັງຄຳຕັກເຕືອນທີ່ໃຫ້ຊີວິດຈະຢູ່ຖ້າມກາງນັກປາດ
32 ບຸກຄົນຜູ້ເມີນເສີຍຕໍ່ຄຳຕັກເຕືອນສະຕິກໍດູຫມິ່ນຕົນເອງ ແຕ່ບຸກຄົນຜູ້ສົນໃຈການທັກທ້ວງກໍໄດ້ຄວາມເຂົ້າໃຈ
33 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນການສອນໃຫ້ເກີດປັນຍາ ແລະຄວາມຖ່ອມໃຈເດີນຢູ່ຂ້າງຫນ້າກຽດ

## 16.

1 ແຜນງານຂອງດວງຄວາມຄິດເປັນຂອງມະນຸດ ແຕ່ຄຳຕອບຂອງລີ້ນມາຈາກພຣະຜູ້ເປັນເຈົ້າ
2 ທາງທັງສິ້ນຂອງມະນຸດກໍບໍຣິສຸດໃນສາຍຕາຂອງເຂົາ ແຕ່ພຣະຜູ້ເປັນເຈົ້າຊົງຊັ່ງຈິດໃຈ
3 ຈົ່ງມອບງານຂອງເຈົ້າໄວ້ກັບພຣະຜູ້ເປັນເຈົ້າ ແລະແຜນງານຂອງເຈົ້າຈະໄດ້ຮັບການສຳເຣັດຜົນ
4 ພຣະຜູ້ເປັນເຈົ້າຊົງກະທຳໃຫ້ທຸກສິ່ງມີເປົ້າຫມາຍຂອງມັນ ແມ້ຊະຕາກຳຄົນຊົ່ວຮ້າຍກໍຄືຄວາມພິນາດ
5 ທຸກຄົນຜູ້ຈອງຫອງເປັນທີ່ຫນ້າກຽດຊັງແກ່ພຣະຜູ້ເປັນເຈົ້າ ຈົ່ງແນ່ໃຈເຖີດ ເຂົາຈະພົ້ນໂທດກໍບໍ່ໄດ້
6 ຄວາມຈົ່ງຮັກພັກດີ ແລະຄວາມຊື່ສັດໄດ້ລ້າງມົນທິນບາບຊົ່ວ ແລະຄົນຫລີກຈາກຄວາມຊົ່ວຮ້າຍໄດ້ໂດຍຄວາມຢຳເກງພຣະຜູ້ເປັນເຈົ້າ
7 ເມື່ອທາງຂອງມະນຸດເປັນທີ່ພໍພຣະທັຍແກ່ພຣະຜູ້ເປັນເຈົ້າ ແມ້ສັດຕຣູຂອງເຂົານັ້ນພຣະອົງກໍຊົງກະທຳໃຫ້ຄືນດີກັບເຂົາໄດ້
8 ມີແຕ່ຫນ້ອຍແຕ່ມີຄວາມຊອບທັມ ກໍດີກວ່າມີຣາຍໄດ້ຫລາຍດ້ວຍອະຍຸດຕິທັມ
9 ໃຈຂອງມະນຸດກະແຜນງານທາງຂອງເຂົາ ແຕ່ພຣະຜູ້ເປັນເຈົ້າຊົງນຳບາດກ້າວຂອງເຂົາ

10 ຄຳຕັດສິນອັນມາຈາກພຣະຜູ້ເປັນເຈົ້າຢູ່ທີ່ຣິມຝີພຣະໂອດຂອງພຣະຣາຊາ ພຣະໂອດຂອງພຣະອົງບໍ່ບາບ
ໃນການພິພາກສາ
11 ຕາຊູ ແລະຕາຊັ່ງທ່ຽງຕົງເປັນຂອງພຣະຜູ້ເປັນເຈົ້າ ລູກຕຸ້ມທັງສິ້ນໃນຖົງເປັນພຣະຣາຊກິຈຂອງພຣະອົງ
12 ການກະທຳຄວາມຊົ່ວຮ້າຍເປັນສິ່ງຫນ້າກຽດຊັງຕໍ່ພຣະຣາຊາ ເພາະວ່າພຣະທີ່ນັ່ງນັ້ນຖືກສະຖາປະນາໄວ້
ດ້ວຍຄວາມຊອບທັມ
13 ຣິມຝີປາກທີ່ຊອບທັມເປັນທີ່ປິຕິຍິນດີແກ່ພຣະຣາຊາ ແລະພຣະອົງຊົງຮັກບຸກຄົນຜູ້ເວົ້າສິ່ງທີ່ຖືກຕ້ອງ
14 ພຣະພິໂຣດຂອງພຣະຣາຊາເປັນຜູ້ນຳຂ່າວຂອງຄວາມມໍຣະນາ ແຕ່ນັກປາດຈະຣະງັບເສັຽໄດ້
15 ມີຊີວິດໃນສວ່າງແຫ່ງພຣະພັກຂອງພຣະຣາຊາ ແລະໃນຄວາມພໍພຣະທັຍຂອງພຣະອົງກໍເຫມືອນເມກທີ່ນຳ
ຝົນຫນັກປາຍຣະດູມາ
16 ໄດ້ປັນຍາກໍດີກວ່າໄດ້ຄຳຕັ້ງຫລວງຫລາຍ ທີ່ຈະເລືອກເອົາຄວາມຮອບຮູ້ກໍດີກວ່າເງິນ
17 ທາງເດີນຂອງຄົນຊອບທັມຫລີກອອກຈາກຄວາມຊົ່ວຮ້າຍ ບຸກຄົນຜູ້ລະມັດລະວັງທາງຂອງຕົນກໍສງວນຊີ
ວິດຂອງເຂົາໄວ້
18 ຄວາມເຍີ້ຍິ່ງເດີນຫນ້າການຖືກທຳລາຍ ແລະຈິດໃຈທີ່ຍະໂສນຳຫນ້າການລົ້ມ
19 ທີ່ຈະເປັນຄົນມີໃຈຖ່ອມຢູ່ກັບຄົນຍາກຈົນ ກໍດີກວ່າແບ່ງຂອງທີ່ຍຶດມາໄດ້ກັບຄົນເຍີ້ຍິ່ງ
20 ບຸກຄົນຜູ້ສົນໃຈໃນພຣະວັຈນະຈະພົບຂອງດີ ແລະຄົນທີ່ວາງໃຈໃນພຣະຜູ້ເປັນເຈົ້າຈະສຸກສະບາຍ
21 ຄົນໃຈສລາດເອີ້ນວ່າເປັນຄົນມີຄວາມພິນິດ ແລະຄຳເວົ້າທີ່ຫນ້າຮັກເພີ້ມອຳນາດການສັ່ງສອນ
22 ປັນຍາເປັນນ້ຳພຸແຫ່ງຊີວິດ ແກ່ຜູ້ທີ່ມີປັນຍາ ແຕ່ຄວາມໂງ່ເປັນການລົງໂທດແກ່ຄົນໂງ່
23 ໃຈຂອງນັກປາດກະທຳໃຫ້ວາຈາຂອງເຂົາສຸຂຸມ ແລະເພີ້ມອຳນາດໃນການສັ່ງສອນແກ່ຣິມຝີປາກຂອງເຂົາ
24 ຄຳເວົ້າທີ່ດີເຫມືອນດັ່ງນ້ຳເຜີ້ງ ເປັນຄວາມຫວານແກ່ວິນຍານຈິດແລະເປັນອານາມັຍແກ່ຮ່າງກາຍ
25 ມີທາງນຶ່ງຊຶ່ງຄົນເຮົາຄິດວ່າຖືກ ແຕ່ມັນສິ້ນສຸດລົງທີ່ທາງຂອງຄວາມມໍຣະນາ
26 ຄວາມຫິວຂອງຄົນງານທຳງານໃຫ້ເຂົາ ເພາະປາກຂອງເຂົາກະຕຸ້ນເຂົາໄປ
27 ຄົນໄຮ້ຄ່າ ປອງທຳຄວາມຊົ່ວ ວາຈາຂອງເຂົາເຫມືອນຢ່າງໄຟລວກ
28 ຄົນຕະລົບຕະແລງແພ່ການວິວາດ ແລະຜູ້ກະຊິບກໍແຍກເພື່ອນສນິດອອກຈາກກັນ
29 ຄົນທາຣຸນລໍ້ຊວນເພື່ອນບ້ານຂອງເຂົາ ແລະນຳເຂົາໄປໃນທາງທີ່ບໍ່ດີ
30 ບຸກຄົນຜູ້ຂະຫຍິບຕາກະແຜນງານທີ່ຈະທຳລາຍ ບຸກຄົນຜູ້ເມັ້ມຣິມຝີປາກຂອງເຂົານຳຄວາມຊົ່ວຮ້າຍໃຫ້ເກີດ
ຂຶ້ນ
31 ຫົວທີ່ມີຜົມຫງອກເປັນມົງກຸດແຫ່ງສັກສີ ຜູ້ດຳເນີນຊີວິດດ້ວຍຄວາມຊອບທັມຈຶ່ງຈະຫາພົບໄດ້
32 ບຸກຄົນຜູ້ໂກດຊ້າກໍດີກວ່າຄົນມີກຳລັງຫລາຍ ແລະບຸກຄົນຜູ້ປົກຄອງຈິດໃຈຂອງຕົນເອງກໍດີກວ່າຜູ້ທີ່ຕີເມືອງ
ໄດ້
33 ສລາກນັ້ນເຂົາປະລົງທີ່ຕັກ ແຕ່ການຕັດສິນມາຈາກພຣະຜູ້ເປັນເຈົ້າທັງສິ້ນ

## 17.

1 ສະບຽງແຫ້ງຫນ້ອຍນຶ່ງພ້ອມກັບຄວາມສງົບ ກໍດີກວ່າເຮືອນທີ່ມີການລ້ຽງເຕັມພ້ອມກັບການວິວາດ
2 ທາດທີ່ກະທຳການງານສລຽວສລາດຈະປົກຄອງບຸດຊາຍຜູ້ປະພຶດຄວາມອັບອາຍ ແລະຈະໄດ້ສ່ວນແບ່ງມໍຣະດົກເທົ່າກັບພວກພີ່ນ້ອງ
3 ເບົ້າມີໄວ້ສຳລັບເງິນ ເຕົາຖະລຸງມີໄວ້ສຳລັບທອງຄຳ ແລະພຣະຜູ້ເປັນເຈົ້າຊົງທົດລອງໃຈ
4 ຜູ້ກະທຳຄວາມຊົ່ວຟັງຮີມຝີປາກຊົ່ວຮ້າຍ ແລະຄົນຕົວະໃຫ້ຄວາມສົນໃຈແກ່ລີ້ນທີ່ຕົວະຕົ້ມ
5 ບຸກຄົນທີ່ເຍີ້ຍຫຍັນຄົນຍາກຈົນກໍດູຫມິ່ນພຣະຜູ້ສ້າງຂອງເຂົາ ບຸກຄົນທີ່ຍິນດີເມື່ອມີຄວາມທຸກລຳບາກ ກໍຈະໄດ້ຮັບໂທດ
6 ຫລານໆເປັນມົງກຸດຂອງຄົນເຖົ້າ ແລະສັກສີຂອງບຸດຊາຍຄືບິດາຂອງເຂົາ
7 ຄຳເວົ້າຄົນຫນ້ານັບຖືເວົ້າຕົວະບໍ່ໄດ້ສັນໃດ ຄົນໂງ່ຈ້າກໍເວົ້າບໍ່ເປັນຕາຟັງສັນນັ້ນ
8 ສິນບົນເຫມືອນອຳນາດວິເສດໃນສາຍຕາຂອງຜູ້ໃຫ້ ເຂົາຈະຫັນໄປທາງໃດກໍຈະເຣີນຮຸ່ງເຮືອງທາງນັ້ນ
9 ບຸກຄົນຜູ້ໃຫ້ອະພັຍການທໍຣະຍົດກໍມຸ່ງຈະສ້າງມິດຕະພາບ ແຕ່ຄົນປາກໂປ້ງຈະທຳລາຍຄວາມເປັນມິດ
10 ຄຳຂະຫນາບເຂົ້າໄປໃນຄົນທີ່ມີຄວາມເຂົ້າໃຈເລິກກວ່າຊຽນຕີຄົນໂງ່ຮ້ອຍເທື່ອ
11 ຄົນຊົ່ວຮ້າຍກໍສແວງແຕ່ການກະບົດ ແຕ່ຈະມີຜູ້ນຳຂ່າວດຸຮ້າຍໄປສູ້ເຂົາ
12 ໃຫ້ຄົນໄປພົບແມ່ຫມີທີ່ລູກຖືກຂະໂມຍໄປ ຍັງດີກວ່າໄປພົບຄົນໂງ່ໃນຄວາມໂງ່ຂອງເຂົາ
13 ຖ້າຄົນນຶ່ງຄົນໃດທຳຊົ່ວຕອບແທນຄວາມດີ ຄວາມຊົ່ວຈະບໍ່ພາກຈາກເຮືອນຂອງຄົນນັ້ນ
14 ເມື່ອເລີ້ມຕົ້ນວິວາດກໍເຫມືອນປ່ອຍໃຫ້ນ້ຳໄຫລ ສະນັ້ນຈົ່ງເລີກເສັຽກ່ອນເກີດການວິວາດ
15 ບຸກຄົນທີ່ປ່ອຍຜູ້ກະທຳຜິດແລະບຸກຄົນທີ່ລົງໂທດຄົນຊອບທັມ ທັງສອງກໍເປັນທີ່ຫນ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
16 ເປັນຫຍັງຄົນໂງ່ຈຶ່ງມີເງິນໃນມືເພື່ອຊື້ປັນຍາ ໃນເມື່ອເຂົາບໍ່ມີຄວາມຄິດ
17 ມິດສະຫາຍກໍມີຄວາມຮັກຢູ່ທຸກເວລາ ແລະພີ່ນ້ອງກໍເກີດມາເພື່ອຊ່ອຍເຫລືອກັນໃນຍາມທຸກຍາກ
18 ຄົນທີ່ບໍ່ມີສາມັນສຳນຶກກໍໃຫ້ຄຳປະຕິຍານ ແລະເປັນຜູ້ຮັບປະກັນຕໍ່ຫນ້າເພື່ອນບ້ານຂອງຕົນ
19 ບຸກຄົນຜູ້ຮັກການທໍຣະຍົດກໍຮັກການວິວາດ ບຸກຄົນຜູ້ທຳປະຕູເຮືອນຂອງເຂົາໃຫ້ສູງ ກໍສແວງການທຳລາຍ
20 ຜູ້ນຶ່ງຜູ້ໃດມີໃຈຄົດກໍບໍ່ຈະເຣີນຮຸ່ງເຮືອງ ແລະຜູ້ທີ່ລີ້ນຕະລົບຕະແລງກໍຕົກຢູ່ໃນຄວາມຍາກລຳບາກ
21 ບິດາທີ່ມີບຸດຊາຍທີ່ທຳຊົ່ວ ກໍມີຄວາມໂສກເສົ້າ ແລະບິດາຂອງຄົນໂງ່ບໍ່ມີຄວາມຊື່ນບານ
22 ໃຈຮ່າເຣີງເປັນຢາຢ່າງດີ ແຕ່ຈິດໃຈທີ່ຫມົດມານະທຳໃຫ້ກະດູກແຫ້ງ
23 ຄົນຊົ່ວຮ້າຍຮັບສິນບົນຈາກເອິກເສື້ອ ເພື່ອປ່ຽນແປງທາງແຫ່ງຄວາມຍຸດຕິທັມ
24 ຄົນທີ່ມີຄວາມເຂົ້າໃຈມຸ່ງຫນ້າຂອງເຂົາຕົງໄປສູ່ປັນຍາ ແຕ່ຕາຂອງຄົນໂງ່ຢູ່ທີ່ສຸດປາຍແຜ່ນດິນໂລກ
25 ບຸດຊາຍໂງ່ເປັນທີ່ໂສກສລົດແກ່ບິດາ ແລະເປັນຄວາມຂົມຂື່ນແກ່ສະຕຣີຜູ້ໃຫ້ກຳເນີດ

26 ທີ່ຈະລົງໂທດຄົນຊອບທັມກໍບໍ່ດີ ທີ່ຈະຕີຄົນດີກໍຜິດ

27 ບຸກຄົນທີ່ຍັບຍັ້ງຖ້ອຍຄຳຂອງເຂົາເປັນຄົນມີຄວາມຮູ້ ແລະບຸກຄົນຜູ້ມີຈິດໃຈເຢືອກເຢັນເປັນຄົນມີຄວາມເຂົ້າໃຈ

28 ເຖິງຄົນໂງ່ຫາກມິດເສັ່ງກໍນັບວ່າເປັນຄົນສລາດ ເມື່ອເຂົາຫຸບຮີມຝີປາກຂອງເຂົາກໍນັບວ່າເຂົາມີຄວາມຄິດ

## 18.

1 ຄົນທີ່ຫລີກຫນີໄປຈາກຜູ້ອື່ນຈົງໃຈກະທຳຕາມໃຈຕົນເອງ ແລະຄ້ານຄະຕິແຫ່ງສະຕິປັນຍາທັງຫລາຍ

2 ຄົນໂງ່ບໍ່ເພີດເພີນໃນຄວາມເຂົ້າໃຈ ແຕ່ເພີດເພີນໃນການສະແດງຄວາມຄິດເຫັນຂອງຕົນເທົ່ານັ້ນ

3 ເມື່ອຄວາມຊົ່ວຮ້າຍມາເຖິງ ຄວາມຫມິ່ນປມາດກໍມາດ້ວຍ ແລະຄວາມອັດສູມາກັບຄວາມໄຮ້ກຽດ

4 ຄຳປາກຂອງຄົນເຮົາເປັນນ້ຳເລິກ ນ້ຳພຸແຫ່ງປັນຍາເຫມືອນລຳທານນ້ຳໄຫລ

5 ທີ່ຈະລຳອຽງເຂົ້າຂ້າງຄົນຊົ່ວຮ້າຍນັ້ນບໍ່ດີ ຫລືຈະບັງຄັບຄົນຊອບທັມເຣື່ອງຄວາມຊອບທັມກໍບໍ່ດີເຫມືອນກັນ

6 ຮີມຝີປາກຂອງຄົນໂງ່ນຳການວິວາດມາ ແລະປາກຂອງເຂົາກໍເຊື້ອເຊີນການຊົກຕ່ອຍ

7 ປາກຂອງຄົນໂງ່ເປັນສິ່ງທຳລາຍຕົວຂອງເຂົາເອງ ແລະຮີມຝີປາກຂອງເຂົາກໍເປັນບ້ວງດັກຕົນເອງ

8 ຄຳເວົ້າຂອງຜູ້ກະຊິບນິນທາກໍເຫມືອນຊີ້ນອາຫານແຊບ ມັນລ່ວງເຂົ້າໄປໃນສ່ວນຕ່າງໆຂອງຮ່າງກາຍ

9 ບຸກຄົນທີ່ຂີ້ຄ້ານໃນການງານ ກໍເປັນພີ່ນ້ອງກັບຄົນທີ່ທຳລາຍ

10 ພຣະນາມຂອງພຣະຜູ້ເປັນເຈົ້າເປັນປ້ອມເຂັ້ມແຂງ ຄົນຊອບທັມແລ່ນເຂົ້າໄປໃນນັ້ນ ແລະປອດພັຍ

11 ຊັບສົມບັດຂອງເສດຖີເປັນເມືອງເຂັ້ມແຂງຂອງເຂົາ ແລະເປັນເຫມືອນກຳແພງສູງຕາມຄວາມຄິດເຫັນຂອງເຂົາ

12 ໃຈຂອງຄົນກໍຈອງຫອງກ່ອນເຖິງການຖືກທຳລາຍ ແຕ່ຄວາມຖ່ອມໃຈເດີນຢູ່ຫນ້າກຽດ

13 ຖ້າຄົນນຶ່ງຄົນໃດຕອບກ່ອນທີ່ເຂົາໄດ້ຍິນ ກໍເປັນຄວາມໂງ່ແລະຄວາມອັບອາຍຂອງເຂົາ

14 ຈິດໃຈຂອງຄົນຈະທົນຕໍ່ຄວາມເຈັບປ່ວຍໄດ້ ແຕ່ຈິດໃຈທີ່ຊອກຊ້ຳໃຜຈະທົນໄດ້ຫນໍ

15 ໃຈທີ່ມີຄວາມຄິດຍ່ອມຫາຄວາມຮູ້ ແລະຫູຂອງນັກປາດສແວງຫາຄວາມຮູ້

16 ຂອງກຳນັນຂອງຜູ້ນຶ່ງຜູ້ໃດຍ່ອມເປີດທາງໃຫ້ຜູ້ນັ້ນ ແລະນຳເຂົາມາເຖິງຄົນໃຫຍ່ຄົນໂຕ

17 ບຸກຄົນຜູ້ຖແລງຄະດີຂອງຕົນກ່ອນກໍເບິ່ງເຫມືອນເປັນຝ່າຍຖືກ ຈົນກວ່າຝ່າຍກົງກັນຂ້າມຈະມາສອບສວນເຂົາ

18 ການຈັບສລາກກະທຳໃຫ້ການທະເລາະສິ້ນສຸດ ແລະຕັດສິນຄູ່ໂຕ້ແຍ້ງທີ່ມີກຳລັງ

19 ພີ່ນ້ອງທີ່ໄດ້ຮັບຄວາມຊ່ອຍເຫລືອກໍເຫມືອນເມືອງທີ່ເຂັ້ມແຂງ ແລະການທະເລາະວິວາດເຫມືອນດ່ານທີ່ອັດຕັນຕົນໄວ້

20 ທ້ອງຈະອີ່ມກໍຈາກຜົນແຫ່ງປາກຂອງເຂົາ ເຂົາຫນຳໃຈເພາະຜົນອັນເກີດຈາກຮີມຝີປາກຂອງຕົນ

21 ຄວາມຕາຍຄວາມເປັນຢູ່ທີ່ອຳນາດຂອງລີ້ນ ແລະບັນດາຜູ້ທີ່ຮັກມັນກໍຈະກິນຜົນຂອງມັນ

22 ບຸກຄົນທີ່ພົບເມັຽກໍພົບຂອງດີ ແລະໄດ້ຄວາມໂປດປານຈາກພຣະຜູ້ເປັນເຈົ້າ
23 ຄວາມຍາກຈົນໃຊ້ຄໍາວິງວອນ ແຕ່ຄົນຮັ່ງຕອບສຽງຫ້ວນໆ
24 ມີຫມູ່ທີ່ແກ້ງເຮັດເປັນຫມູ່ ແຕ່ມີມິດບາງຄົນທີໃກ້ຊິດຍິ່ງກວ່າພີ່ນ້ອງ

## 19.

1 ຄົນຍາກຈົນຜູ່ດໍາເນີນໃນຄວາມສັດຊື່ຂອງເຂົາ ດີກວ່າຄົນຕະລົບຕະແລງຊຶ່ງເປັນຄົນໂງ່
2 ຄົນທີ່ບໍ່ມີຄວາມຮູ້ກໍບໍ່ດີ ແລະບຸກຄົນທີ່ເລັ່ງຝີຕີນຫນັກກໍມັກພາດຜິດ
3 ເມື່ອຄວາມໂງ່ຂອງຄົນໃດນໍາຄວາມພິນາດມາເຖິງເຂົາ ໃຈຂອງເຂົາກໍກັງວົນກາດຕໍ່ພຣະຜູ້ເປັນເຈົ້າ
4 ຊັບສົມບັດເພີ້ມເພື່ອນເປັນຈໍານວນຫລາຍ ແຕ່ຄົນຍາກຈົນກໍຖືກເພື່ອນບ້ານຂອງເຂົາປະໄປ
5 ພຍານເທັດຈະໄດ້ຮັບໂທດ ແລະບຸກຄົນທີ່ເປັ່ງຄໍາຕົວະຈະຫນີບໍ່ພົ້ນ
6 ຄົນເປັນຈໍານວນຫລາຍເອົາອົກເອົາໃຈຄົນໃຈກວ້າງ ແລະທຸກຄົນກໍເປັນມິດກັບຄົນທີ່ໃຫ້ຂອງກໍານັນ
7 ພວກພີ່ນ້ອງຂອງຄົນຍາກຈົນກໍຍັງກຽດຊັງເຂົາ ມິດຂອງເຂົາຈະຍິ່ງໄກຈາກເຂົາຈັກເທົ່າໃດ ເຂົາພຍາຍາມເວົ້າ ແຕ່ບໍ່ມີໃຜຍອມຟັງ
8 ບຸກຄົນທີ່ມີປັນຍາກໍຮັກຕົນເອງ ບຸກຄົນຜູ້ຮັກສາຄວາມເຂົ້າໃຈໄວ້ຈະຈໍາເຣີນຮຸ່ງເຮືອງ
9 ພຍານເທັດຈະໄດ້ຮັບໂທດ ແລະບຸກຄົນທີ່ເປັ່ງຄໍາຕົວະຈະພິນາດ
10 ທີ່ຄົນໂງ່ຈະຢູ່ຢ່າງຟຸ່ມເຟືອຍກໍບໍ່ເຫມາະຢູ່ແລ້ວ ທີ່ທາດຈະປົກຄອງເຈົ້ານາຍກໍຍິ່ງບໍ່ເຫມາະສົມຫລາຍກວ່ານັ້ນອີກ
11 ສາມັນສໍານຶກທີ່ດີກະທໍາໃຫ້ຄົນໂກດຊ້າ ແລະທີ່ມອງຂ້າມການທໍຣະຍົດໄປເສັຽກໍເປັນສັກສີແກ່ເຂົາ
12 ພຣະພິໂຣດຂອງພຣະຣາຊາເຫມືອນສຽງຄໍາຣາມຂອງສິງຫນຸ່ມ ແຕ່ຄວາມໂປດປານຂອງພຣະອົງເຫມືອນນໍ້າຄ້າງເທິງຜັກຫຍ້າ
13 ບຸດໂງ່ຈ້າເປັນຄວາມພິນາດຂອງບິດາຂອງເຂົາ ແລະການທະເລາະວິວາດຂອງເມັຽກໍເຫມືອນນໍ້າຝົນຍ້ອຍຢົດບໍ່ຢຸດ
14 ເຮືອນແລະຊັບສົມບັດເປັນມໍຣະດົກມາຈາກບິດາ ແຕ່ເມັຽທີ່ຢັ່ງຮູ້ກໍມາຈາກພຣະຜູ້ເປັນເຈົ້າ
15 ຄວາມຂີ້ຄ້ານທໍາໃຫ້ຫລັບສນິດ ແລະຄົນຂີ້ຄ້ານຈະຕ້ອງຫິວ
16 ບຸກຄົນທີ່ຮັກສາພຣະບັນຍັດກໍຮັກສາຊີວິດຂອງຕົນ ບຸກຄົນທີ່ດູຫມິ່ນພຣະວັຈນະກໍຈະເຖິງຕາຍ
17 ບຸກຄົນທີ່ເອັນດູຄົນຍາກຈົນກໍໃຫ້ພຣະຜູ້ເປັນເຈົ້າຊົ່ງຢືມ ແລະພຣະອົງຈະຊົງຕອບແທນແກ່ການກະທໍາຂອງເຂົາ
18 ຈົ່ງຕີສອນບຸດຂອງຕົນເມື່ອຍັງມີຄວາມຫວັງ ຢ່າຈົ່ງໃຈໃຫ້ເຂົາເຖິງພິນາດໄປ
19 ຄົນທີ່ໂມໂຫຈະຕ້ອງໄດ້ຮັບໂທດ ເພາະຖ້າເຈົ້າຊ່ອຍກູ້ເຂົາແລ້ວ ກໍຕ້ອງຊ່ອຍກູ້ເຂົາອີກ
20 ຈົ່ງຟັງຄໍາແນະນໍາແລະຮັບຄໍາເຕືອນສະຕິ ເພື່ອເຈົ້າຈະໄດ້ປັນຍາສໍາລັບອານາຄົດ

21 ໃນໃຈຂອງມະນຸດມີແຜນງານຢ່າງຫລວງຫລາຍ ແຕ່ພຣະປະສົງຂອງພຣະຜູ້ເປັນເຈົ້າ ນັ້ນແຫລະ ຈະດຳ
ຣົງຢູ່ໄດ້
22 ສິ່ງທີ່ຫນ້າປາຖນາໃນຕົວມະນຸດຄື ຄວາມຈົ່ງຮັກພັກດີ ແລະຄົນຍາກຈົນຍັງດີກວ່າຄົນຕົວະ
23 ຄວາມຢຳເກງພຣະຜູ້ເປັນເຈົ້ານຳໄປສູ່ຊີວິດ ແລະບຸກຄົນຜູ້ໄດ້ຮັບແລ້ວກໍຢຸດດ້ວຍຄວາມພໍໃຈ ຈະບໍ່ມີອັນຕະ
ຣາຍໃດມາຫາເຂົາ
24 ຄົນຂີ້ຄ້ານຝັງມືຂອງຕົນໄວ້ໃນຊາມ ແລະບໍ່ຍອມແມ້ແຕ່ຈະອາຫານມາສູ່ປາກຂອງຕົນ
25 ຈົ່ງຕີຄົນທີ່ມັກເຍາະເຍີ້ຍ ແລະຄົນໂງ່ຈະຮຽນຄວາມຢັ່ງຮູ້ເອງ ຈົ່ງຕັກເຕືອນຄົນທີ່ມີຄວາມເຂົ້າໃຈ ແລະເຂົາ
ຈະໄດ້ຄວາມຮູ້
26 ບຸກຄົນຜູ້ທຳທາຣຸນແກ່ບິດາຂອງເຂົາ ແລະຂັບໄລ່ມານດາຂອງເຂົາໄປເສັຽ ເປັນບຸດຊາຍຜູ້ກໍ່ໃຫ້ເກີດຄວາມ
ອັບອາຍແລະການຖືກຕຳຫນິ
27 ລູກເອີຍ ຜູ້ທີ່ເລີກຮັກສາຄຳສັ່ງສອນຂອງບິດາ ຈະຫລົງໄປຈາກຄຳທີ່ມີປັນຍາ
28 ພຍານທີ່ໄຮ້ຄ່າກໍເຍາະເຍີ້ຍຄວາມຍຸດຕິທັມ ແລະປາກຂອງຄົນຊົ່ວຮ້າຍກໍກືນກິນແຕ່ຄວາມບາບຜິດ
29 ການປັບໂທດມີພ້ອມຢູ່ສຳລັບຄົນມັກເຍາະເຍີ້ຍ ແລະການໂບຍຕີກໍສຳລັບຫລັງຂອງຄົນໂງ່

## 20.

1 ເຫລົ້າທຸກຊະນິດທຳໃຫ້ເຈົ້າເປັນຄົນເກເລ ແລະເສັຽສະຕິ ຄົນເມົາເຫລົ້າຄືຄົນໂງ່
2 ຈົ່ງຢ້ານຄວາມໂກດຂອງພຣະຣາຊາເຫມືອນຢ້ານສິງກຳຣາບ ການທຳໃຫ້ພຣະຣາຊາໂກດກໍຄືການຂ້າຕົວ
ເອງ
3 ຄົນໂງ່ຈະທຳໃຫ້ເກີດການວິວາດຜິດຖຽງກັນ ແຕ່ຜູ້ຫລີກຫນີຈາກບ່ອນຜິດຖຽງກັນຈະໄດ້ຮັບກຽດ
4 ຜູ້ຂີ້ຄ້ານທຳນາຈະບໍ່ໄດ້ຫຍັງໃນຍາມເກັບກ່ຽວ
5 ຄວາມຄິດໃນໃຈຂອງມະນຸດເຫມືອນນ້ຳໃນສ້າງເລິກ ແຕ່ຄົນທີ່ມີປັນຍາກໍສາມາດຢັ່ງຮູ້ໄດ້
6 ທຸກຄົນເວົ້າເຖິງຄວາມຈົ່ງຮັກພັກດີ ແລະຄວາມສັດຊື່ຂອງຕົນເອງ ແຕ່ຈະພົບຄົນທີ່ສັດຊື່ອີຫລີຈັກຄົນນຶ່ງກໍ
ຍາກທີ່ສຸດ
7 ຖ້າບຸດມີບິດາທີ່ສັດຊື່ ແລະທຳສິ່ງທີ່ຊອບທັມ ບຸດທັງຫລາຍກໍມີຄວາມສຸກ
8 ພຣະຣາຊາຜູ້ປະທັບເທິງບັນລັງພິພາກສາ ຍ່ອມຊົງປັດຄວາມຊົ່ວອອກດ້ວຍພຣະເນດຂອງພຣະອົງ
9 ຜູ້ໃດຈະກ່າວໄດ້ວ່າ, “ຂ້າພະເຈົ້າໄດ້ກະທຳໃຈຂອງຂ້າພະເຈົ້າໃຫ້ສະອາດແລ້ວ ຂ້າພະເຈົ້າບໍຣິສຸດພົ້ນ
ບາບຂອງຂ້າພະເຈົ້າ”
10 ລູກຕຸ້ມສໍ້ ແລະເຄື່ອງຕວງໂກງ ທັງສອງເປັນທີ່ຫນ້າກຽດຊັງແກ່ພຣະຜູ້ເປັນເຈົ້າເຫມືອນກັນ
11 ເຖິງເດັກນ້ອຍກໍສະແດງຕົວໂດຍການປະພຶດຂອງເຂົາວ່າສິ່ງທີ່ເຂົາກະທຳຈະບໍຣິສຸດ ແລະຖືກຕ້ອງຫລືບໍ່
12 ຫູທີ່ຟັງໄດ້ ແລະຕາທີ່ມອງເຫັນ ພຣະຜູ້ເປັນເຈົ້າຊົງສ້າງມັນທັງສອງ

13 ຢ່າຮັກການຫລັບໄຫລ ຢ້ານວ່າເຈົ້າຈະມາເຖິງຄວາມຍາກຈົນ ຈົ່ງລືມຕາຂອງເຈົ້າ ແລະເຈົ້າຈະໄດ້ກິນອີ່ມ
14 ຜູ້ຊື້ເວົ້າວ່າ, "ແພງ ແພງ" ແຕ່ເມື່ອເຂົາໄປແລ້ວເຂົາຈຶ່ງອວດ
15 ມີຄຳ ແລະທັບທິມມີຄ່າເປັນຈຳນວນຫລາຍ ແຕ່ຮິມຝີປາກທີ່ມີຄວາມຮູ້ເປັນເພັດນິນຈິນດາປະເສີດ
16 ຈົ່ງຍຶດເສື້ອຜ້າຂອງເຂົາໄວ້ ເມື່ອເຂົາເປັນປະກັນໃຫ້ຄົນອື່ນ ແລະຍຶດຕົວເຂົາໄວ້ ເມື່ອເຂົາປະກັນຄົນຕ່າງດ້າວ
17 ອາຫານທີ່ໄດ້ມາດ້ວຍການຫລອກລວງມີຣົດຫວານແກ່ຜູ້ໄດ້ມາ ແຕ່ພາຍຫລັງປາກຂອງເຂົາຈະມີແຕ່ຂີ້ຊາຍ
18 ແຜນງານດຳຣົງຢູ່ໄດ້ດ້ວຍການປຶກສາຫາລື ຈົ່ງທຳສົງຄາມດ້ວຍມີການນຳທີ່ສລາດ
19 ບຸກຄົນທີ່ທ່ຽວຊຸບຊິບໄປກໍເຜີຍຄວາມລັບໃຫ້ກະຈາຍ ສະນັ້ນຢ່າເຂົ້າສັງຄົມກັບຄົນປາກ
20 ຖ້າຄົນນຶ່ງຄົນໃດແຊ່ງບິດາ ຫລືມານດາຂອງຕົນ ປະທີບຂອງເຂົາຈະດັບມືດມິດ
21 ມໍຣະດົກທີ່ໄດ້ຮັບມາຢ່າງຊີງສຸກກ່ອນຫາມ ທີ່ສຸດປາຍກໍບໍ່ເປັນມົງຄົນ
22 ຢ່າເວົ້າວ່າ, "ຂ້າພະເຈົ້າຈະແກ້ແຄ້ນຄວາມຊົ່ວ" ຈົ່ງລໍຄອຍພຣະຜູ້ເປັນເຈົ້າ ພຣະອົງຈະຊົງຊ່ອຍເຈົ້າ
23 ລູກຕຸ້ມສໍ້ສົນເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ ແລະຕຣາຊູທີ່ໂກງກໍຊົ່ວພໍໆກັນ
24 ຍ່າງບາດກ້າວຂອງມະນຸດນັ້ນພຣະຜູ້ເປັນເຈົ້າຊົງເປັນຜູ້ສັ່ງ ແລ້ວຄົນຈະເຂົ້າໃຈທາງຂອງເຂົາເອງໄດ້ຢ່າງໃດ
25 ທີ່ຄົນຈະເວົ້າພ່ອຍໆວ່າ, "ນີ້ເປັນຂອງບໍຣິສຸດ" ກໍເປັນບ້ວງດັກຕົນເອງ ແລ້ວຈະມາຄຶດໄດ້ເມື່ອສັນຍາໄປແລ້ວ
26 ກະສັດທີ່ສລາດຍ່ອມປັດຄວາມຊົ່ວຮ້າຍ ແລ້ວຊົງຂັບກົງຈັກທັບເຂົາ
27 ມະໂນທັມຂອງມະນຸດເປັນປະທີບຂອງພຣະຜູ້ເປັນເຈົ້າ ສ່ອງເບິ່ງສ່ວນເລິກທີ່ສຸດຂອງເຂົາທັງສິ້ນ
28 ຄວາມຈົ່ງຮັກພັກດີ ແລະຄວາມຊື່ສັດສຽວນກະສັດໄວ້ ແລະຄວາມຊອບທັມກໍເຊີດຊູພຣະທີ່ນັ່ງຂອງພຣະອົງໄວ້
29 ສັກສີຂອງຄົນໜຸ່ມ ຄືກຳລັງຂອງເຂົາ ແຕ່ຄວາມງາມຂອງຄົນແກ່ຄືຜົມຫງອກຂອງເຂົາ
30 ການຊ້ຽນທີ່ໃຫ້ເປັນບາດແຜ ກໍຊຳຮະຄວາມຊົ່ວເສັຽ ການໂບຍຕີກະທຳໃຫ້ສ່ວນເລິກທີ່ສຸດສະອາດ

## 21.

1 ພຣະທັຍພຣະຣາຊາເປັນເໝືອນທານນ້ຳໃນພຣະຫັດຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຈະຫັນໄປທາງໃດໆຕາມແຕ່ພຣະອົງຊົງໂຜດ
2 ທາງຂອງຄົນທຸກທາງກໍຖືກຕ້ອງໃນສາຍຕາຂອງຕົນ ແຕ່ພຣະຜູ້ເປັນເຈົ້າຊົງຊັ່ງໃຈ
3 ທີ່ຈະກະທຳຄວາມຊອບທັມ ແລະຄວາມຍຸດຕິທັມ ກໍເປັນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າຫລາຍກວ່າເຄື່ອງສັກກາຣະບູຊາ
4 ຕາຍະໂສ ແລະໃຈເຍີ້ຍິ່ງ ປະທີບຂອງຄົນຊົ່ວຮ້າຍເປັນບາບ

5 ແຜນງານຂອງຄົນດຸຫມັ່ນນຳສູ່ຄວາມອຸດົມແນ່ນອນ ແຕ່ບຸກຄົນທີ່ເລັ່ງຮ້ອນກໍມາສູ່ຄວາມຂັດສົນເທົ່ານັ້ນ

6 ການໄດ້ຄັງຊັບມາດ້ວຍລີ້ນມຸສາ ກໍຄືການໄລ່ຈັບຂອງອະນິຈັງຈົນຕິດບ້ວງຄວາມຕາຍ

7 ຄວາມທາຣຸນຂອງຄົນຊົ່ວຮ້າຍຈະກວາດເຂົາໄປ ເພາະເຂົາປະຕິເສດບໍ່ຍອມທຳສິ່ງທີ່ຍຸດຕິທັມ

8 ທາງຂອງຄົນທີ່ມີກັມຊົ່ວນັ້ນຄົດ ແຕ່ຄວາມປະພຶດຂອງຜູ້ບໍຣິສຸດນັ້ນຖືກຕ້ອງ

9 ຢູ່ທີ່ແຈມຸມເທິງຫລັງຄາເຮືອນດີກວ່າຢູ່ໃນເຮືອນຮ່ວມກັບຍິງທີ່ຈູ້ຈີ້

10 ວິນຍານຂອງຄົນຊົ່ວຮ້າຍປາຖນາຄວາມຊົ່ວ ເພື່ອນບ້ານຂອງເຂົາບໍ່ມີຄວາມກະຣຸນາໃນຫນ່ວຍສາຍຕາຂອງ
ເຂົາ

11 ເມື່ອຄົນມັກເຍາະເຍີ້ຍຖືກລົງໂທດ ຄົນໂງ່ກໍສລາດຂຶ້ນ ເມື່ອນັກປາດໄດ້ຮັບການສັ່ງສອນເຂົາກໍໄດ້ຄວາມຮູ້

12 ຄົນຊອບທັມສັງເກດຮູ້ເບິ່ງເຮືອນຂອງຄົນຊົ່ວຮ້າຍ ຄົນຊົ່ວຮ້າຍກໍຖືກແກວ່ງລົງເຖິງຄວາມພິນາດ

13 ບຸກຄົນຜູ້ອຸດຫູບໍ່ຟັງສຽງຮ້ອງຂອງຄົນຍາກຈົນ ຕົວເຂົາເອງຈະຮ້ອງແລະບໍ່ມີໃຜໄດ້ຍິນ

14 ໃຫ້ຂອງກຳນັນໃນທີ່ລັບລີ້ຍ່ອມແປປ່ຽນຄວາມໂກດ ໃຫ້ສິນບົນໃນເອິກກໍແປປ່ຽນຄວາມຄຽດຮ້າຍ

15 ເມື່ອກະທຳການຍຸດຕິທັມ ກໍເປັນການຊື່ນບານແກ່ຄົນຊອບທັມ ແຕ່ເປັນຄວາມພິນາດແກ່ຄົນກະທຳຊົ່ວ

16 ຜູ້ໃດຫັນຫນີໄປຈາກທາງແຫ່ງຄວາມເຂົ້າໃຈ ຈະພັກຢູ່ໃນທີ່ປະຊຸມຂອງຄົນຕາຍ

17 ບຸກຄົນທີ່ຮັກຄວາມເພີດເພີນຈະເປັນຄົນຍາກຈົນບຸກຄົນທີ່ຮັກເຫລົ້າອະງຸ່ນແລະນ້ຳມັນ ຈະບໍ່ຮັ່ງມີ

18 ຄົນຊົ່ວຮ້າຍເປັນຄ່າໄຖ່ສຳລັບຄົນຊອບທັມ ແລະຄົນທີ່ບໍ່ເຊື່ອກໍສຳລັບຄົນທ່ຽງທັມ

19 ຢູ່ໃນແຜ່ນດິນກັນດານ ດີກວ່າຢູ່ກັບຜູ້ຍິງທີ່ຈູ້ຈີ້ ແລະມັກຈົ່ມ

20 ຊັບສົມບັດປະເສີດ ແລະນ້ຳມັນມີຢູ່ໃນທີ່ອາໄສຂອງຄົນສລາດ ແຕ່ຄົນໂງ່ກິນມັນຫມົດ

21 ບຸກຄົນຜູ້ຕິດຕາມຄວາມຊອບທັມ ແລະຄວາມເອັນດູຈະພົບຊີວິດ ແລະຄວາມຊອບທັມກັບກຽດຕິຍົດ

22 ນັກປາດທີ່ປີນເຂົ້າໄປໃນເມືອງຂອງຄົນທີ່ມີກຳລັງ ແລະພັງທະລາຍທີ່ກຳບັງເຂັ້ມແຂງທີ່ເຂົາໄວ້ວາງໃຈ

23 ບຸກຄົນທີ່ຮັກສາປາກ ແລະລີ້ນຂອງຕົນ ກໍຮັກສາຕົວເຂົາເອງໃຫ້ພົ້ນຄວາມລຳບາກ

24 “ຄົນມັກເຍາະເຍີ້ຍ” ເປັນຊື່ຂອງຄົນເຍີ່ຍິ່ງ ແລະຄົນຈອງຫອງ ຜູ້ປະພຶດຕົວດ້ວຍຄວາມເຍີ່ຍິ່ງຍະໂສ

25 ຄວາມປາຖນາຂອງຄົນຂີ້ຄ້ານຂ້າຕົວເຂົາເອງ ເພາະມືຂອງເຂົາປະຕິເສດບໍ່ທຳງານ

26 ຄົນໂລບກໍໂລບຢູ່ຕລອດວັນ ແຕ່ຄົນຊອບທັມໃຫ້ແລະບໍ່ຫນ່ວງຫນ່ຽວໄວ້

27 ເຄື່ອງສັກກາຣະບູຊາຂອງຄົນຊົ່ວຮ້າຍເປັນສິ່ງທີ່ຫນ້າກຽດຊັງ ເມື່ອເຂົານຳມາດ້ວຍຄວາມຕັ້ງໃຈຊົ່ວຈະ
ຍິ່ງກວ່ານັ້ນຈັກເທົ່າໃດ

28 ພຍານເທັດຈະຕ້ອງພິນາດ ແຕ່ຖ້ອຍຄຳຂອງຄົນທີ່ເຊື່ອຟັງຈະຍັງຄົງຢູ່

29 ຄົນຊົ່ວຮ້າຍທຳໃຫ້ຫນ້າຂອງຕົນດ້ານໄປ ແຕ່ຄົນທ່ຽງທັມ “ພິເຄາະດູທາງຂອງຕົນ”

30 ປັນຍາກໍດີ ຄວາມເຂົ້າໃຈກໍດີ ຄຳປຶກສາກໍດີ ຈະເອົາຊະນະພຣະຜູ້ເປັນເຈົ້າບໍ່ໄດ້

31 ມ້າກໍຕຽມໄວ້ພ້ອມແລ້ວສຳລັບວັນສົງຄາມ ແຕ່ຄວາມມີຊັຍເປັນຂອງພຣະຜູ້ເປັນເຈົ້າ

## 22.

1 ຖ້າເຈົ້າຈະຕ້ອງເລືອກເອົາລະຫວ່າງຊື່ສຽງດີກັບຄວາມຮັ່ງມີ ກໍຂໍໃຫ້ເລືອກເອົາຊື່ສຽງດີ

2 ຄົນຮັ່ງມີກັບຄົນທຸກຍາກບໍ່ແຕກຕ່າງກັນຫຍັງ ເພາະວ່າຄົນສອງປະເພດນີ້ ແມ່ນພຣະຜູ້ເປັນເຈົ້າຊົງສ້າງເຫມືອນກັນ

3 ຄົນຜູ້ສລາດຮອບຄອບຍ່ອມຮູ້ອັນຕະຣາຍຈະເກີດຂຶ້ນ ແລ້ວຫລົບຫລີກເສັຽ ແຕ່ຄົນທໍາມະດາສາມັນຈະເດີນເລື້ອຍໄປ ແລ້ວກໍເປັນທຸກໃນພາຍຫລັງ

4 ຈົ່ງຖ່ອມຕົວ ແລະຢໍາເກງພຣະຜູ້ເປັນເຈົ້າ ແລ້ວເຈົ້າຈະຮັ່ງມີ ຈະມີກຽດ ແລະມີຊີວິດຍືນຍາວ

5 ຖ້າເຈົ້າຮັກຊີວິດຂອງເຈົ້າ ຈົ່ງຫລີກຫນີຈາກທາງຂອງຄົນຊົ່ວທີ່ມີບ້ວງແຮ້ວຫ້າງໄວ້

6 ຈົ່ງສັ່ງສອນລູກໃຫ້ຮູ້ຈັກທາງດໍາເນີນຊີວິດ ເພື່ອເຂົາຈະຈົດຈໍາໄວ້ຕລອດຊີວິດ

7 ຄົນຮັ່ງມີປົກຄອງເຫນືອຄົນຍາກຈົນ ແລະຄົນມັກຢືມກໍເປັນທາດຂອງຄົນໃຫ້ຢືມ

8 ບຸກຄົນຜູ້ຫວ່ານອະຍຸດຕິທັມ ຈະກ່ຽວຄວາມຫາຍຍະນະ ແລະໄມ້ຄ້ອນແຫ່ງຄວາມດຸເດືອດຂອງເຂົາຈະລົ້ມເຫລວ

9 ບຸກຄົນທີ່ມີຕາສະແດງໃຈກວ້າງຂວາງກໍຈະຮັບພອນ ເພາະເຂົາແບ່ງສ່ວນອາຫານຂອງເຂົາແກ່ຄົນຍາກຈົນ

10 ຈົ່ງໄລ່ຄົນມັກເຍາະເຍີ້ຍອອກໄປເສັຽແລ້ວການວິວາດຈະຫມົດໄປ ການວິວາດແລະການດູຫມິ່ນຈະຢຸດລົງ

11 ບຸກຄົນທີ່ຮັກໃຈບໍຣິສຸດ ແລະວາຈາຂອງເຂົາມີຄວາມກະຣຸນາຄຸນ ຈະໄດ້ພຣະຣາຊາເປັນມິດ

12 ພຣະເນດຂອງພຣະຜູ້ເປັນເຈົ້າເຝົ້າຢູ່ເຫນືອຄວາມຮູ້ ແຕ່ພຣະອົງຊົງຄວ່ໍາຖ້ອຍຄໍາຂອງຄົນໄຮ້ຄວາມເຊື່ອເສັຽ

13 ຄົນຂີ້ຄ້ານກ່າວວ່າ, "ມີສິງຢູ່ທາງນອກ ຂ້າພະເຈົ້າຈະຖືກຂ້າຢູ່ກາງເມືອງ"

14 ປາກຂອງຍິງຊົ່ວເປັນຫລຸມເລິກ ບຸກຄົນຊຶ່ງພຣະຜູ້ເປັນເຈົ້າຊົງພຣະພິໂຣດຈະຕົກລົງໃນທີ່ນັ້ນ

15 ຄວາມໂງ່ມັກຢູ່ໃນໃຈຂອງເດັກນ້ອຍ ແຕ່ໄມ້ແສ້ທີ່ຕີສອນກໍໄລ່ມັນໃຫ້ຫ່າງໄປຈາກເຂົາ

16 ບຸກຄົນຜູ້ບີບບັງຄັບຄົນຍາກຈົນເພີ້ມຊັບສົມບັດຂອງຕົນ ຫລືເພີ້ມໃຫ້ແກ່ຄົນຮັ່ງມີ ຈະມາເຖິງຄວາມຂັດສົນເທົ່ານັ້ນ

### ຫລັກທັມແລະຄໍາຕັກເຕືອນ

17 ອ່ຽງຫູຂອງເຈົ້າແລະຟັງຖ້ອຍຄໍາຂອງນັກປາດ ແລະເອົາໃຈໃສ່ຄວາມຮູ້ຂອງເຮົາ

18 ເພາະຖ້າເຈົ້າຮັກສາຖ້ອຍຄໍາແລະຄວາມຮູ້ນັ້ນໄວ້ໃນຕົວເຈົ້າ ແລະພ້ອມທີ່ຈະເວົ້າຄໍາເຫລົ່ານັ້ນສເມີ ມັນຈະເປັນຄວາມຊື່ນໃຈແກ່ໃຈ

19 ເພື່ອຄວາມໄວ້ວາງໃຈຂອງເຈົ້າຈະຢູ່ໃນພຣະຜູ້ເປັນເຈົ້າ ເຮົາໃຫ້ແຈ້ງປະຈັກແກ່ເຈົ້າໃນວັນນີ້ແມ້ແກ່ຕົວເຈົ້າເອງ

20 ເຮົາໄດ້ຂຽນໃຫ້ເຈົ້າເຖິງສາມຂໍ້ ເຖິງເຣື່ອງການທັກທ້ວງແລະຄວາມຮູ້ແລ້ວບໍ່ແມ່ນຫລື

21 ເພື່ອສໍາແດງແກ່ເຈົ້າວ່າສິ່ງໃດຖືກແລະຈິງ ເພື່ອເຈົ້າຈະໄດ້ໃຫ້ຄໍາຕອບທີ່ຈິງແກ່ຜູ້ທີ່ໃຊ້ເຈົ້າໄປ

22 ຢ່າປຸ້ນຄົນຍາກຈົນ ເພາະເຂົາເປັນຄົນຍາກຈົນ ຫລືບີບຄັ້ນຄົນທຸກໃຈທີ່ປະຕູເມືອງ

23 ເພາະວ່າພຣະຜູ້ເປັນເຈົ້າຈະຊົງວ່າຄວາມແທນເຂົາ ແລະຂົ່ມຂູ່ເອົາຊີວິດຂອງຜູ້ທີ່ຂົ່ມຂູ່ເຂົາ
24 ຢ່າເປັນມິດກັບຄົນທີ່ມັກໂກດ ຫລືໄປກັບຄົນມັກໂມໂຫ
25 ຢ້ານວ່າເຈົ້າຈະຮຽນຮູ້ທາງຂອງເຂົາ ແລະພົວພັນຕົວເຈົ້າເຂົ້າໃນບ້ວງ
26 ຢ່າເປັນພວກທີ່ຕົກປາກລົງຄຳ ຢ່າເປັນພວກຜູ້ປະກັນຫນີ້ສິນ
27 ຖ້າເຈົ້າບໍ່ສິ່ງໃດຊຳຣະເຂົາ ເປັນຫຍັງຈຶ່ງຄວນໃຫ້ເຂົາເອົາບ່ອນນອນໄປຈາກໃຕ້ຕົວເຈົ້າ
28 ຢ່າຍ້າຍຫລັກເຂດເກົ່າແກ່ຊຶ່ງບັນພະບຸຣຸດຂອງເຈົ້າໄດ້ປັກໄວ້
29 ເຈົ້າເຫັນຄົນທີ່ມີຝີມືໃນງານຂອງເຂົາ ຫລື ເຂົາຈະໄດ້ເຂົ້າເຝົ້າພຣະຣາຊາ ເຂົາຈະຢືນຢູ່ຕໍ່ຫນ້າຄົນທີ່ມີຊື່ສຽງ

## 23.

1 ເມື່ອເຈົ້ານັ່ງລົງຮັບປະທານກັບຜູ້ປົກຄອງບ້ານເມືອງ ຈົ່ງສັງເກດໃຫ້ດີວ່າສິ່ງໃດຢູ່ຂ້າງຫນ້າເຈົ້າ
2 ຖ້າເຈົ້າເປັນຄົນຕະກະ ເຈົ້າຈົ່ງຈໍ່ມີດໄວ້ທີ່ຄໍຂອງເຈົ້າ
3 ຢ່າປາຖນາໃນອາຫານທີ່ຄົນຍໍມາໃຫ້ ເພາະມັນເປັນອາຫານທີ່ຫລອກລວງ
4 ຢ່າທຳງານເພື່ອເຫັນແກ່ຊັບສົມບັດ ຈົ່ງສລາດພໍທີ່ຈະຢັບຢັ້ງໄວ້
5 ເຈົ້າຈະເພ່ງຕາຂອງເຈົ້າຢູ່ທີ່ຂອງອະນິຈັງ ຫລື ເພາະວ່າເງິນຂອງເຈົ້າມັນສູນເສັຽໄປໄດ້ໃນຊົ່ວພິບຕາດຽວ
ເຫມືອນກັບວ່າມັນມີປີກບິນໄດ້ເຫມືອນນົກອິນຊີ
6 ຢ່າກິນອາຫານຂອງຄົນທີ່ຂີ້ຖີ່ ຢ່າປາຖນາໃນອາຫານດີຂອງເຂົາ
7 ເພາະເຂົາເປັນເຫມືອນຄົນທີ່ຄອຍນັບຢູ່ທາງໃນ ເຂົາເວົ້າກັບເຈ◌ົ◌້າວ່າ, “ຈົ່ງກິນແລະດື່ມເຖີດ” ແຕ່ໃຈຂອງ
ເຂົາບໍ່ໄດ້ຢູ່ກັບເຈົ້າ
8 ເຈົ້າຈະຕ້ອງຮາກອາຫານຊຶ່ງເຈົ້າໄດ້ກິນເຂົ້າໄປນັ້ນອອກມາ ແລະເສັຽຖ້ອຍຄຳຍິ້ມແຍ້ມຂອງເຈົ້າເສັຽເປົ່າ
9 ຢ່າເວົ້າໃຫ້ຄົນໂງ່ໄດ້ຍິນ ເພາະເຂົາຈະດູຫມິ່ນປັນຍາແຫ່ງຖ້ອຍຄຳຂອງເຈົ້າ
10 ຢ່າໂຍກຍ້າຍຫລັກເຂດແດນເດີມ ຫລືຍຶດເອົາທີ່ດິນຂອງລູກກຳພ້າ
11 ເພາະວ່າພຣະຜູ້ເປັນເຈົ້າຊົງເປັນອົງຄຸ້ມຄອງທີ່ມີອຳນາດຍິ່ງໃຫຍ່ຂອງພວກເຂົາ ພຣະອົງຈະຊົງສູ້ຄວາມກັບ
ເຈົ້າແທນເຂົາ
12 ຈົ່ງເອົາໃຈຂອງເຈົ້າຮັບຄຳສັ່ງສອນ ແລະເອົາຫູຂອງເຈົ້າຮັບຖ້ອຍຄຳແຫ່ງຄວາມຮູ້
13 ຢ່າຢັບຢັ້ງການຕີສອນເສັຽຈາກເດັກນ້ອຍ ຖ້າເຈົ້າຕີເຂົາດ້ວຍໄມ້ແສ້ ເຂົາຈະບໍ່ຕາຍ
14 ຖ້າເຈົ້າຕີເຂົາດ້ວຍໄມ້ແສ້ ເຈົ້າຈະຊ່ອຍຊີວິດຂອງເຂົາໃຫ້ລອດຈາກແດນຜູ້ຕາຍ
15 ລູກເອີຍ ຖ້າໃຈຂອງເຈົ້າສລາດ ໃຈຂອງເຮົາເອງກໍຍິນດີ
16 ວິນຍານຂອງເຮົາຈະຊົມຊື່ນຍິນດີ ເມື່ອຮີມຝີປາກຂອງເຈົ້າເວົ້າສິ່ງທີ່ຖືກຕ້ອງ
17 ຢ່າໃຫ້ໃຈຂອງເຈົ້າອິດສາຄົນບາບ ແຕ່ຈົ່ງດຳເນີນໃນຄວາມຢຳເກງພຣະຜູ້ເປັນເຈົ້າຕລອດວັນ
18 ມີອານາຄົດທີ່ແນ່ນອນ ແລະຄວາມຫວັງຂອງເຈົ້າຈະບໍ່ຖືກຕັດອອກ

19 ຈົ່ງຟັງເທີນລູກເອີຍ ຈົ່ງສລາດແລະຄິດໃຫ້ຄັກແນ່ໃນທາງທີ່ເຈົ້າດຳເນີນນັ້ນ
20 ຢ່າຢູ່ໃກ້ບຸກຄົນທີ່ເມົາເຫລົ້າ ຫລືຜູ້ກິນຫລາຍ ຄົນຂີ້ເມົາແລະຄົນຂີ້ໂລບຈະຍາກຈົນລົງ
21 ຖ້າພວກເຈົ້າທັງປວງມີແຕ່ກິນ ແລະນອນເທົ່ານັ້ນ ບໍ່ເຫິງດອກພວກເຈົ້າກໍຈະນຸ່ງຜ້າຂາດ
22 ຈົ່ງຟັງຄວາມບິດາຂອງເຈົ້າຖ້າບໍ່ມີທ່ານເຈົ້າກໍຈະບໍ່ມີຊີວິດ ເມື່ອມານດາຂອງເຈົ້າເຖົ້າ ຈົ່ງຮູ້ຈັກຕອບແທນ
ບຸນຄຸນທ່ານ
23 ເພາະວ່າຄວາມຈິງປັນຍາ ຄຳສັ່ງສອນ ແລະຄວາມເຂົ້າໃຈທີ່ໄດ້ຈາກທ່ານນັ້ນມີຄຸນຄ່າຫລາຍ ມັນເປັນສິ່ງທີ່
ເຈົ້າສົມຄວນຊື້ໄວ້ ແຕ່ບໍ່ສົມຄວນຂາຍ
24 ຖ້າລູກເປັນຄົນຊອບທັມ ບິດາກໍມີຄວາມສຸກ ແລະຖ້າເປັນຄົນສລາດບິດາກໍພາກພູມໃຈ
25 ຈົ່ງທຳໃຫ້ບິດາມານດາຂອງເຈົ້າພາກພູມໃຈໃນຕົວເຈົ້າ ແລະທຳໃຫ້ມານດາມີຄວາມສຸກ
26 ລູກເອີຍ ຂໍໃຈຂອງເຈົ້າໃຫ້ເຮົາເຖີດ ແລະໃຫ້ຕາຂອງເຈົ້າສັງເກດເບິ່ງທາງຂອງເຮົາ
27 ເພາະຍິງແພດສະຍາເປັນຫລຸມເລິກ ແລະຍິງສັນຈອນເປັນເຫມືອນບໍ່ແຄບ
28 ນາງຫມອບຄອຍຢູ່ເຫມືອນໂຈນ ແລະເພີ່ມຄົນທີ່ບໍ່ຊື່ຂຶ້ນຖ້າມກາງມະນຸດ
29 ໃຜທີ່ຮ້ອງໂອຍ ໃຜທີ່ຮ້ອງອຸຍ ໃຜທີ່ມີການວິວາດ ໃຜທີ່ມີການຮ້ອງຄາງ ໃຜທີ່ມີບາດແຜປາສຈາກສາເຫດ
ໃຜທີ່ມີຕາແດງ
30 ຄືຜູ້ດື່ມເຫລົ້າຈະມີຄວາມລຳບາກໃຈ ແລະມີສຽງຮ້ອງຄາງສເມີ ຕາຂອງເຂົາຈະແດງກ່ຳ ແລະມີບາດແຜ
ຕາມຕົນຕົວ
31 ສະນັ້ນ ຢ່າຄິດສະອອນເຫລົ້າອະງຸ່ນເລີຍ ເພາະວ່າເຖິງແມ່ນມັນຈະງາມໃນເວລາເຈົ້າສັ່ນ ແລະເປັນສີແດງ
ໃສສະອາດຈົນສ່ອງເຫັນເງົາກໍຕາມ
32 ແຕ່ເມື່ອເຈົ້າດື່ມແລ້ວ ສຸດທ້າຍເຈົ້າກໍຈະຮູ້ສຶກເຈັບເຫມືອນຖືກງູພິດຕອດ
33 ຕາຂອງເຈົ້າຈະເຫັນສິ່ງແປກໆ ແລະໃຈຂອງເຈົ້າຈະເວົ້າຕະລົບຕະແລງ
34 ເຈົ້າຈະເປັນເຫມືອນຄົນທີ່ນອນຢູ່ກາງທະເລຢ່າງຄົນທີ່ນອນຢູ່ເທິງເສົາກາງເຮືອ
35 ເຈົ້າຈະວ່າ, “ເຂົາຕີຂ້າພະເຈົ້າ ແຕ່ຂ້າພະເຈົ້າບໍ່ເຈັບ ເຂົາທຸບຂ້າພະເຈົ້າ ແຕ່ຂ້າພະເຈົ້າບໍ່ຮູ້ສຶກ ຂ້າພະເຈົ້າ
ຈະຕື່ນເມື່ອໃດຫນໍ ຂ້າພະເຈົ້າຈະສແວງການດື່ມອີກ”

## 24.

1 ຢ່າຄິດອິສຍາຄົນຊົ່ວ ຫລືປາຖນາຢູ່ຮ່ວມກັບເຂົາ
2 ເພາະວ່າໃຈຂອງເຂົາຄິດປະກອບການທາຣຸນ ແລະຮິມຝີປາກຂອງເຂົາເວົ້າໃຫ້ຄົນເຈັບໃຈ
3 ມີປັນຍາ ແລະມີຄວາມເຂົ້າໃຈຈຶ່ງສ້າງເຮືອນໄດ້
4 ມີຄວາມຮູ້ຈຶ່ງໄດ້ຂອງມີຄ່າແລະຂອງງົດງາມເຕັມຢູ່ໃນຫ້ອງ
5 ຄົນສລາດມີກຳລັງຫລາຍ ແລະຄົນມີຄວາມຮູ້ກໍເພີ່ມກຳລັງຂຶ້ນ

6 ຄືໂດຍການນຳທີ່ສລາດ ເຈົ້າກໍເຂົ້າສະໜາມຮົບ ໄດ້ ແລະດ້ວຍມີທີ່ປຶກສາຫລາຍໆກໍມີຊັຍຊະນະ
7 ສຳລັບຄົນໂງ່ນັ້ນປັນຍາສູງເກີນໄປ ທີ່ປະຕູເມືອງເຂົາບໍ່ອ້າປາກເວົ້າ
8 ບຸກຄົນຜູ້ກະແຜນງານທຳຄວາມຊົ່ວ ເຂົາເອີ້ນກັນວ່າຄົນເຈົ້າເລ່
9 ການຄິດປະດິດຄວາມໂງ່ເປັນບາບ ແລະຄົນມັກເຍາະເຍີ້ຍເປັນທີ່ໜ້າກຽດຊັງແກ່ມະນຸດ
10 ຖ້າເຈົ້າທໍ້ຖອຍໃຈໃນວັນເຄາະຮ້າຍ ກຳລັງຂອງເຈົ້າກໍໜ້ອຍ
11 ຈົ່ງຊ່ອຍບັນດາຜູ້ທີ່ຖືກນຳໄປສູ່ຄວາມມໍຣະນາ ຈົ່ງຊ່ອຍຢຶດບັນດາຜູ້ທີ່ພວມໄປເພື່ອຖືກຂ້າ
12 ຖ້າເຈົ້າຈະວ່າ, “ເບິ່ງແມ່, ເຮົາບໍ່ຮູ້ເຣື່ອງນີ້ເລີຍ” ພຣະອົງຜູ້ຊົງຊັ່ງໃຈຈະບໍ່ຊົງເຫັນຫລື ພຣະອົງຜູ້ຊົງເຝົ້າວິນ
ຍານຢູ່ເໜືອເຈົ້າຈະບໍ່ຊາບຫລື ແລະພຣະອົງຈະບໍ່ຊົງເອີ້ນເອົາຈາກຄົນຕາມການກະທຳຂອງເຂົາຫລື
13 ລູກເອີຍ ຈົ່ງຮັບປະທານນໍ້າເຜີ້ງເພາະເປັນຂອງດີ ແລະນໍ້າເຜີ້ງທີ່ຢົດຈາກຮັງນັ້ນມີຣົດຫວານ
14 ຈົ່ງຮູ້ເຖີດວ່າປັນຍາກໍເປັນເຊັ່ນນັ້ນແກ່ວິນຍານ ຖ້າເຈົ້າພົບປັນຍາກໍຈະມີອານາຄົດ ແລະຄວາມຫວັງຂອງ
ເຈົ້າຈະບໍ່ຖືກຕັດອອກ
15 ຢ່າໝອບຄອຍຢ່າງຄົນຊົ່ວຮ້າຍເພື່ອຕໍ່ສູ້ກັບທີ່ອາໄສຂອງຄົນຊອບທັມ ຢ່າທຳທາຣຸນແກ່ເຮືອນຂອງເຂົາ
16 ເພາະຄົນຊອບທັມລົ້ມລົງເຈັດຄັ້ງແລ້ວກໍລຸກຂຶ້ນອີກ ແຕ່ຄົນຊົ່ວຮ້າຍຈະຖືກຄວາມຈິບຫາຍທຳລາຍລົງເລີຍ
16 ຢ່າດີໃຈເມື່ອສັດຕຣູຂອງເຈົ້າໄດ້ຮັບໄພວິບັດ ຖ້າເຈົ້າດີໃຈ ພຣະຜູ້ເປັນເຈົ້າຈະຊົງຊາບແລະຈະບໍ່ຊົງພໍພຣະ
ທັຍ
17 ແລ້ວພຣະອົງອາດຊົງປ່ຽນພຣະທັຍບໍ່ຊົງລົງໂທດສັດຕຣູຂອງເຈົ້າ
18 ຢ່າອຸກໃຈຍ້ອນຄົນຊົ່ວ ແລະຢ່າອິດສາບັງບຽດເຂົາ
19 ເພາະວ່າຄົນຊົ່ວຈະບໍ່ໄດ້ຫຍັງໃນອານາຄົດ ຕະກຽງຂອງຄົນຊົ່ວຮ້າຍຈະຖືກດັບເສັຽ
20 ລູກເອີຍ ຈົ່ງຢຳເກງພຣະຜູ້ເປັນເຈົ້າ ແລະພຣະຣາຊາ ຢ່າຂັດຂືນພຣະທັຍຂອງທັງສອງພຣະອົງເລີຍ
21 ເພາະໄພວິບັດຈາກພຣະອົງທັງສອງຈະອຸບັດຂຶ້ນໂດຍໄວ ແລະຜູ້ໃດຈະຊາບເຖິງຄວາມພິນາດທີ່ຈະມາຈາກ
ພຣະອົງທັງສອງ
22 ຂໍ້ຄວາມເຫລົ່ານີ້ເປັນຄຳກ່າວຂອງນັກປາດດ້ວຍ ການລຳອຽງໃນການຕັດສິນນັ້ນບໍ່ດີເລີຍ
23 ບຸກຄົນຜູ້ກ່າວແກ່ຄົນຊົ່ວຮ້າຍວ່າ, “ເຈົ້າໄຮ້ຄວາມຜິດ” ຈະຖືກຊົນຊາດທັງຫລາຍແຊ່ງ ແລະປະຊາຊົນລັງ
ກຽດ
24 ແຕ່ບັນດາຜູ້ຂະໜາບເຂົາຈະມີຄວາມປິຕິຍິນດີ ແລະພອນອັນດີຈະມີຢູ່ກັບເຂົາ
25 ຜູ້ໃຫ້ຄຳຕອບທີ່ຖືກ ຈະຈູບຮີມຝີປາກ
26 ຈົ່ງຕຽມງານຂອງເຈົ້າທີ່ພາຍນອກ ທຳທຸກຢ່າງຂອງເຈົ້າໃຫ້ພ້ອມທີ່ໃນນາແລະຫລັງຈາກນັ້ນກໍຈົ່ງສ້າງເຮືອນ
ຂອງເຈົ້າ
27 ຢ່າເປັນພຍານບໍ່ຈິງຕໍ່ເພື່ອນບ້ານຂອງເຈົ້າຢ່າງບໍ່ມີສາເຫດ ແລະຢ່າລໍ້ລວງດ້ວຍຮີມຝີປາກຂອງເຈົ້າ

28 ຢ່າກ່າວວ່າ, “ຂ້າພະເຈົ້າກະທຳແກ່ເຂົາຢ່າງທີ່ເຂົາໄດ້ທຳແລ້ວແກ່ຂ້າພະເຈົ້າ ຂ້າພະເຈົ້າຈະທຳຕອບແກ່ເຂົາຢ່າງທີ່ເຂົາໄດ້ກະທຳ”

29 ເຮົາຜ່ານໄປທີ່ໄຮ່ນາຂອງຄົນທີ່ຂີ້ຄ້ານ ຂ້າງສວນອະງຸ່ນຂອງຄົນທີ່ໄຮ້ສາມັນສຳນຶກ

30 ແລະນີ້ແຫລະ ມີຟຸ່ມຫນາມເຕັມໄປຫມົດ ແລະແຜ່ນດິນກໍເຕັມໄປດ້ວຍຫຍ້າປົ່ງຂຶ້ນທົ່ວໄປ ແລະກຳແພງຫີນຂອງມັນກໍເພພັງລົງ

31 ແລ້ວເຮົາໄດ້ເຫັນ ແລະພິເຄາະເບິ່ງ ເຮົາມອງເບິ່ງແລະໄດ້ຮັບຄຳສັ່ງສອນ

32 “ນ້ອຍຫລັບໄປພັກນຶ່ງພໍຢຽດເສັ້ນຢຽດເອັນ ແລະພັກຜ່ອນຍ່ອນອາລົມໃຫ້ສະບາຍ”

33 ແລ້ວຄວາມຈົນຈະມາຫາເຈົ້າຢ່າງຂະໂມຍ ຄວາມຂັດສົນຢ່າງຄົນຖືອາວຸດ

## 25. ສຸພາສິດໂຊໂລໂມນ

1 ຕໍ່ໄປນີ້ເປັນສຸພາສິດຂອງໂຊໂລໂມນເຫມືອນກັນ ຊຶ່ງຄົນຂອງເຮເຊກີຢາ ພຣະຣາຊາແຫ່ງຢູດາໄດ້ກ່າຍອອກໄວ້

2 ຄວາມຍິ່ງໃຫຍ່ຂອງພຣະເຈົ້າຄືການເຊື່ອງສິ່ງຕ່າງໆໄວ້ ແຕ່ສັກສີຂອງພຣະຣາຊາຄືການຄົ້ນສິ່ງຕ່າງໆໃຫ້ປາກົດ

3 ຟ້າສວັນສູງສັນໃດ ແລະແຜ່ນດິນເລິກສັນໃດ ພຣະທັຍຂອງພຣະຣາຊາກໍເຫລືອຈະຫຍັ່ງຮູ້ສັນນັ້ນ

4 ຈົ່ງໄລ່ສິ່ງເປິເປື້ອນອອກຈາກເງິນເສັຽ ແລ້ວຈະມີວັດຖຸສຳລັບຊ່າງທຳຂັນ

5 ຈົ່ງຄົນຊົ່ວຮ້າຍອອກໄປເສັຽຈາກພຣະພັກພຣະຣາຊາ ແລະພຣະທີ່ນັ່ງຂອງພຣະອົງຈະສະຖາປະນາໄວ້ດ້ວຍຄວາມຊອບທັມ

6 ຢ່າເອົາຕົວເຈົ້າຂຶ້ນມາຂ້າງຫນ້າຕໍ່ພຣະພັກພຣະຣາຊາ ຫລືຢືນຢູ່ໃນທີ່ຂອງຜູ້ຫລັກຜູ້ໃຫຍ່

7 ເພາະທີ່ຈະໃຫ້ເຂົາວ່າ, “ເຊີນມາທີ່ນີ້” ກໍດີກວ່າຖືກໄລ່ລົງໄປທີ່ຕ່ຳຕໍ່ຫນ້າເຈົ້ານາຍ ສິ່ງທີ່ຕາຂອງເຈົ້ານາຍເຫັນ

8 ຢ່າຟ້າວດ່ວນນຳເຂົ້າມາຍັງໂຮງສານ ເພາະເມື່ອເພື່ອນບ້ານຂອງເຈົ້າທຳໃຫ້ເຈົ້າໄດ້ອາຍແລ້ວ ໃນທີ່ສຸດເຈົ້າຈະທຳຢ່າງໃດ

9 ຈົ່ງຕົກລົງເຣື່ອງຂອງເຈົ້າກັບເພື່ອນບ້ານຂອງເຈົ້າ ແລະຢ່າທຳໃຫ້ເຜີຍຄວາມລັບຂອງເຂົາ

10 ຢ້ານວ່າຜູ້ທີ່ໄດ້ຍິນຈະນຳຄວາມອາຍມາສູ່ເຈົ້າ ແລະຊື່ສຽງຂອງເຈົ້າຈະມົວຫມອງຢູ່ນານ

2 ຄຳເວົ້າອັນຖືກຕ້ອງເຫມືອນລາຍຄຳປະດັບຢູ່ໃນເງິນ

3 ຖ້ອຍຄຳທີ່ຄົນສລາດເຕືອນຜູ້ຍອມທຳຕາມກໍມີຄຸນຄ່າເທົ່າກັບແຫວນ ຫລືເຄື່ອງເອ້ທີ່ທຳດ້ວຍຄຳບໍຣິສຸດ

4 ຜູ້ສົ່ງຂ່າວທີ່ຊື່ສັດຍ່ອມທຳໃຫ້ຜູ້ໃຊ້ເຂົາໄປໄດ້ຮັບຄວາມຊື່ນບານເຫມືອນນ້ຳເຢັນໃນຍາມຮ້ອນ

5 ບຸກຄົນຜູ້ສັນຍາວ່າຈະໃຫ້ແຕ່ບໍ່ໃຫ້ກໍເຫມືອນເມກແລະລົມທີ່ບໍ່ມີຝົນ

6 ຄວາມພາກພຽນອາດຈະຊັກຈູງຜູ້ຄອງໄດ້ ແລະລີ້ນທີ່ອ່ອນຫວານອາດຈະໂນ້ມນ້າວຈິດໃຈໃຫ້ອ່ອນລົງໄດ້

7 ຖ້າເຈົ້າພົບນ້ຳເຜີ້ງ ຈົ່ງກິນແຕ່ພໍດີ ຢ້ານວ່າເຈົ້າຈະອີ່ມແລະອາຈຽນອອກມາ
8 ຈົ່ງໃຫ້ຕີນຂອງເຈົ້າຢູ່ໃນເຮືອນເພື່ອນບ້ານຂອງເຈົ້າດົນໆເທື່ອນຶ່ງ ຢ້ານວ່າເຂົາຈະເມື່ອຍເພາະເຈົ້າ ແລະ ກຽດຊັງເຈົ້າ
9 ຄົນໃດທີ່ເປັນພຍານເທັດກ່າວໂທດເພື່ອນບ້ານຂອງເຂົາ ກໍເຫມືອນກະບອງເສິກ ຫລືດາບ ຫລືລູກທະນູທີ່ຄົມ
10 ການວາງໃຈໃນຄົນທີ່ບໍ່ຊື່ໃນຍາມລຳບາກ ກໍເຫມືອນແຂ້ວທີ່ເສັຽຫລືຕີນທີ່ຫລຸດໂບກ
11 ບັນດາຄົນທີ່ຮ້ອງເພງໃຫ້ຄົນຫນັກໃຈຟັງ ກໍເຫມືອນຄົນຖອດເຄື່ອງແຕ່ງກາຍອອກໃນວັນທີ່ອາກາດຫນາວ ແລະເຫມືອນເອົານ້ຳສົ້ມມາແປະໃສ່ແຜ
12 ຖ້າສັດຕຣູຂອງເຈົ້າຫິວເຂົ້າ ຈົ່ງໃຫ້ເຂົາກິນ ຖ້າເຂົາຫິວນ້ຳ ຈົ່ງໃຫ້ເຂົາດື່ມ
13 ແລ້ວຜົນທີ່ເຈົ້າທຳນັ້ນຈະທຳໃຫ້ເຂົາໄດ້ຮັບຄວາມອັບອາຍຂາຍຫນ້າທີ່ສຸດ ແລະພຣະຜູ້ເປັນເຈົ້າຈະຊົງປະທານຣາງວັນໃຫ້ແກ່ເຈົ້າ
14 ລົມເຫນືອນຳຝົນມາສັນໃດ ລີ້ນທີ່ສໍ່ສຽດກໍນຳຄວາມໂກດສັນນັ້ນ
15 ຢູ່ທີ່ແຈມຸມເທິງຫລັງຄາເຮືອນດີກວ່າຢູ່ໃນເຮືອນຮ່ວມກັບຍິງທີ່ຈູ້ຈີ້
16 ຂ່າວດີຈາກເມືອງໄກ ກໍເຫມືອນນ້ຳເຢັນທີ່ໃຫ້ແກ່ຄົນຫິວ
17 ຄົນຊອບທັມທີ່ຍ່ອມແພ້ແກ່ຄົນຊົ່ວຮ້າຍ ກໍເຫມືອນນ້ຳພຸມີຂີ້ຕົມ ຫລືເຫມືອນນ້ຳບໍ່ທີ່ສົກກະປົກ
18 ທີ່ຈະກິນນ້ຳເຜີ້ງຫລາຍກໍບໍ່ດີ ສະນັ້ນຈົ່ງຄວນປະຫຍັດຄຳເວົ້າຊົມເຊີຍ
19 ຄົນທີ່ປາສຈາກການປົກຄອງຕົນເອງ ກໍເຫມືອນເມືອງທີ່ປັກຫັກພັງແລະບໍ່ມີກຳແພງ

## 26.

1 ກຽດຕິຍົດບໍ່ເຫມາະສົມກັບຄົນໂງ່ເຊັ່ນດຽວກັບຫິມະໃນຣະດູຮ້ອນ ແລະຝົນໃນຣະດູກ່ຽວ
2 ຄຳສາບແຊ່ງທີ່ໄຮ້ເຫດຜົນຍ່ອມບໍ່ມາເກາະ ເຊັ່ນດຽວກັບນົກຈອກທີ່ກຳລັງບິນໄປມາ ແລະນົກນາງແອ່ນທີ່ກຳລັງບິນ
3 ແສ້ສຳລັບມ້າ ບັງຫຽນສຳລັບລໍ ແລະໄມ້ແສ້ສຳລັບຫລັງຄົນໂງ່
4 ຢ່າຕອບຄົນໂງ່ຕາມຄວາມໂງ່ຂອງເຂົາ ຢ້ານວ່າເຈົ້າເອງຈະເປັນເຫມືອນເຂົາ
5 ຈົ່ງຕອບຄົນໂງ່ຕາມຄວາມໂງ່ຂອງເຂົາ ຢ້ານວ່າເຂົາຈະສລາດໃນສາຍຕາຂອງເຂົາເອງ
6 ບຸກຄົນທີ່ສົ່ງຂ່າວໄປດ້ວຍມືຂອງຄົນໂງ່ກໍຕັດຕີນຂອງເຂົາເອງອອກ ແລະດື່ມຄວາມເສັຽຫາຍ
7 ສຸພາສິດທີ່ຢູ່ໃນປາກຂອງຄົນໂງ່ ກໍເຫມືອນຂາຂອງຄົນພິການທີ່ຫ້ອຍລົງມາຢ່າງໄຮ້ປໂຍດ
8 ບຸກຄົນຜູ້ໃຫ້ກຽດແກ່ຄົນໂງ່ ກໍເຫມືອນຜູ້ທີ່ມັດກ້ອນຫີນໄວ້ກັບສລິ່ງ
9 ສຸພາສິດທີ່ຢູ່ໃນປາກຂອງຄົນໂງ່ ກໍເຫມືອນຫນາມຢູ່ໃນມືຄົນຂີ້ເມົາ
10 ບຸກຄົນທີ່ຈ້າງຄົນໂງ່ ຫລືຄົນຂີ້ເມົາທີ່ຜ່ານໄປ ກໍເຫມືອນນັກທະນູທີ່ຍິງຄົນທຸກຄົນບໍ່ເລືອກຫນ້າ

11 ຄົນໂງ່ທີ່ທຳຄວາມໂງ່ຊ້ຳແລ້ວຊ້ຳອີກ ກໍເຫມືອນຫມາທີ່ກັບຄືນໄປຫາສິ່ງທີ່ມັນຮາກອອກມາ
12 ທ່ານເຫັນຄົນທີ່ຄິດວ່າຕົນເອງສລາດ ຫລືຍັງມີຫວັງໃນຄົນໂງ່ໄດ້ຫລາຍກວ່າໃນຄົນເຊັ່ນນັ້ນ
13 ຄົນຂີ້ຄ້ານເວົ້າວ່າ, "ມີຣາຊສີຢູ່ທີ່ຖນົນ ມີສິງຢູ່ທີ່ກາງເມືອງ"
14 ປະຕູຫັນໄປມາດ້ວຍບານພັບຂອງມັນສັນໃດ ຄົນຂີ້ຄ້ານກໍທຳເຊັ່ນນັ້ນຢູ່ເທິງຕຽງນອນຂອງເຂົາ
15 ຄົນກຽດຄ້ານຝັງມືຂອງເຂົາໄວ້ໃນຊາມ ເຂົາເມື່ອຍທີ່ຈະນຳມືກັບມາທີ່ປາກຂອງຕົນ
16 ຄົນຂີ້ຄ້ານເຫັນວ່າຕົວເອງສລາດກວ່າຄົນເຈັດຄົນທີ່ຕອບໄດ້ຢ່າງຫລັກແຫລມ
17 ບຸກຄົນທີ່ເຂົ້າຫຍຸ້ງໃນການທະເລາະວິວາດ ຊຶ່ງບໍ່ແມ່ນເຣື່ອງຂອງເຂົາເອງ ກໍເຫມືອນຄົນຈັບຫູຫມາຕົວທີ່ກຳລັງຜ່ານໄປ
18 ເຫມືອນກັບຄົນບ້າທີ່ໂຍນດັ້ງໄຟ ລູກທະນູ ແລະຄວາມຕາຍອອກໄປ
19 ຄົນລໍ້ລວງເພື່ອນບ້ານຂອງເຂົາ ແລະກ່າວວ່າ, "ຂ້າພະເຈົ້າລໍ້ຫລິ້ນເທົ່ານັ້ນເອງ"
20 ເພາະຂາດຟືນ ໄຟກໍດັບ ແລະທີ່ໃດທີ່ບໍ່ມີຄົນຊຸບຊິບການທະເລາະວິວາດກໍຢຸດໄປ
21 ຖ່ານເປັນເຊື້ອເພີງ ແລະຟືນເປັນເຊື້ອໄຟສັນໃດ ຄົນທີ່ມັກທະເລາະວິວາດກໍເປັນເຊື້ອການວິວາດສັນນັ້ນ
22 ຖ້ອຍຄຳຂອງຄົນປາກບອນເປັນອາຫານທີ່ແຊບ ມັນລົງໄປຍັງສ່ວນຂ້າງໃນຂອງຮ່າງກາຍ
23 ຮີມຝີປາກທີ່ລາບຣື່ນກັບໃຈທີ່ຊົ່ວຮ້າຍ ກໍເຫມືອນນ້ຳຢາເຄືອບທີ່ອາບຢູ່ເທິງພາຊນະດິນ
24 ບຸກຄົນທີ່ກຽດຜູ້ອື່ນ ກໍສໍພໍດ້ວຍລີ້ນຂອງຕົນ ແລະຕໍແຫລຢູ່ໃນໃຈ
25 ເມື່ອເຂົາເວົ້າຢ່າງໃຈກະຣຸນາຢ່າເຊື່ອເຂົາ ເພາະມີສິ່ງຫນ້າກຽດຫນ້າຊັງຮ້ອຍແປດຢູ່ໃນໃຈຂອງເຂົາ
26 ເຖິງແມ່ນວ່າເຂົາຈະປິດຄວາມກຽດຊັງຂອງເຂົາໄວ້ດ້ວຍເລ່ ຄວາມຊົ່ວຮ້າຍຂອງເຂົາເຜີຍອອກໃນທີ່ປະຊຸມ
27 ບຸກຄົນທີ່ຂຸດຫລຸມພາງ ເຂົາຈະຕົກລົງໄປເອງ ຜູ້ໃດໃຫ້ກ້ອນຫີນກິ້ງມາ ມັນຈະກັບທັບເຂົາເອງ
28 ລີ້ນທີ່ມຸສາກຽດຊັງຜູ້ທີ່ມັນທຳລາຍ ແລະປາກທີ່ປ້ອຍກໍທຳຄວາມພິນາດ

## 27.

1 ຢ່າໂອ້ອວດເຣື່ອງມື້ອື່ນ ເພາະເຈົ້າບໍ່ຮູ້ດອກວ່າແມ່ນຫຍັງຈະເກີດຂຶ້ນໃນບັດນີ້ແລະຕໍ່ໄປ
2 ຈົ່ງທຳໃຫ້ຄົນອື່ນຍ້ອງຍໍເຈົ້າ ເຖິງແມ່ນເຂົາເປັນຄົນຕ່າງປະເທດກໍຕາມ ແຕ່ຢ່າຍ້ອງຍໍຕົວເອງ
3 ຄວາມຫຍຸ້ງຍາກທີ່ຄົນໂງ່ກໍ່ຂຶ້ນຫນັກກວ່າຫີນແລະຊາຍ
4 ຄວາມໂກດນັ້ນໂຫດຮ້າຍແລະເປັນອັນຕະຣາຍ ແຕ່ຄວາມອິດສາບັງບຽດແຮງຮ້າຍກວ່ານັ້ນອີກ
5 ບອກສອນກັນຢ່າງເປີດເຜີຍດີກວ່າໃຫ້ຜູ້ນັ້ນຄິດວ່າເຈົ້າບໍ່ຄິດເຖິງເຂົາເລີຍ
6 ເພື່ອນຮັກແພງກັນທຳໃຫ້ເຈົ້າເຈັບໃຈບໍ່ສຳຄັນຫຍັງ ແຕ່ຖ້າສັດຕຣູເອົາແຂນກ່າຍບ່າຂອງເຈົ້າຕ້ອງລະວັງໃຫ້ດີ
7 ບຸກຄົນທີ່ອີ່ມແລ້ວ ນ້ຳເຜິ້ງກໍຫນ້າເບື່ອ ແຕ່ສຳລັບຜູ້ທີ່ຫິວ ທຸກສິ່ງທີ່ຂົມກໍກັບຫວານ
8 ຄົນທີ່ຫນີໄປຈາກບ້ານຂອງຕົນ ກໍເຫມືອນນົກທີ່ຫນີໄປຈາກຮັງຂອງມັນ

9 ນ້ຳມັນແລະນ້ຳຫອມກະທຳໃຫ້ໃຈຍິນດີ ແລະຄຳເຕືອນສະຕິອັນອ່ອນຫວານຂອງເພື່ອນກໍເປັນທີ່ໃຫ້ຊື່ນໃຈ
10 ຢ່າປະຖິ້ມມິດຂອງເຈົ້າ ແລະມິດຂອງບິດາເຈົ້າ ແລະຢ່າໄປທີ່ເຮືອນພີ່ນ້ອງຂອງເຈົ້າໃນວັນລຳບາກຍາກ
ເຢັນຂອງເຈົ້າ
11 ລູກເອີຍ ຈົ່ງສລາດ ແລະກະທຳໃຈຂອງເຮົາໃຫ້ຍິນດີ ເພື່ອເຮົາຈະຕອບບຸກຄົນທີ່ຕຳໜິເຮົາໄດ້
12 ຄົນຫຍັ່ງຮູ້ ເຫັນອັນຕະລາຍ ແລະເຊື່ອງຕົວຂອງເຂົາເສັຽ ແຕ່ຄົນໂງ່ເດີນເລື້ອຍໄປ ແລະຮັບອັນຕະລາຍ
ນັ້ນ
13 ຈົ່ງຍຶດເສື້ອຜ້າຂອງເຂົາໄວ້ ເມື່ອເຂົາເປັນປະກັນໃຫ້ຄົນອື່ນ ແລະຍຶດຕົວເຂົາໄວ້ ເມື່ອເຂົາຮັບປະກັນຍິງ
ຕ່າງດ້າວ
14 ບຸກຄົນທີ່ຕື່ນແຕ່ເຊົ້າມືດໄປອວຍພອນເພື່ອນບ້ານດ້ວຍສຽງດັງ ເຂົາກັບຈະເຫັນວ່າເປັນຄຳສາບແຊ່ງ
15 ຝົນຍ້ອຍແປະໆບໍ່ຢຸດໃນຣະດູຝົນສັນໃດ ຜູ້ຍິງທີ່ຈູ້ຈີ້ກໍເຫມືອນກັນສັນນັ້ນ
16 ທີ່ຈະຍັບຍັ້ງນາງກໍເຫມືອນຍັງຍັ້ງລົມ ຫລືກຳນ້ຳມັນດ້ວຍມືຂວາ
17 ເຫລັກລັບເຫລັກໄດ້ ຄົນນຶ່ງກໍຮັບເພື່ອນບ້ານຂອງຕົນໄດ້
18 ບຸກຄົນທີ່ດູແລຕົ້ນຫມາກເດື່ອຈະໄດ້ກິນຜົນຂອງມັນ ແລະບຸກຄົນທີ່ລະມັດລະວັງນາຍຂອງຕົນຈະໄດ້ຮັບ
ກຽດ
19 ໃນນ້ຳ ຄົນເຫັນຫນ້າຄົນສັນໃດ ຄວາມຄິດຂອງຄົນກໍສໍ່ຄົນສັນນັ້ນ
20 ແດນຜູ້ຕາຍແລະແດນພິນາດບໍ່ຮູ້ຈັກອີ່ມ ຕາຂອງຄົນເຮົາກໍບໍ່ຮູ້ຈັກອີ່ມ
21 ເບົ້າມີໄວ້ສຳລັບເງິນ ເຕົາຖະລຸງມີໄວ້ສຳລັບຄຳ ຄຳສັຣເສີນຂອງຄົນຈະພິສູດຄົນ
22 ເອົາຄົນໂງ່ໃສ່ຄົກຕຳດ້ວຍສາກ ພ້ອມກັບເຂົ້າຕົ້ມ ຄົນໂງ່ກໍຍັງໂງ່ຢູ່ນັ້ນເອງ
23 ຈົ່ງຮູ້ຄວາມທຸກສຸກຂອງຝູງແບ້ ແກະຂອງເຈົ້າໃຫ້ດີ ແລະຈົ່ງເອົາໃຈໃສ່ຝູງງົວຂອງເຈົ້າ
24 ເພາະຄວາມຮັ່ງມີບໍ່ໄດ້ທົນຢູ່ໄດ້ເປັນນິດ ແລະມົງກຸດທົນຢູ່ໄດ້ຊົ່ວຊາດເຊື້ອສາຍຫລື
25 ເມື່ອເກັບຫຍ້າແຫ້ງໄປແລ້ວ ແລະຫຍ້າງອກໃຫມ່ປາກົດຂຶ້ນມາ ແລະເຂົາເກັບຜັກຫຍ້າຕ່າງໆທີ່ພູເຂົາກັນ
ແລ້ວ
26 ເມື່ອນັ້ນລູກແກະຈະໃຫ້ເສື້ອຜ້າແກ່ເຈົ້າ ແລະແບ້ກໍຈະເປັນຄ່ານາ
27 ຈະມີນົມແບ້ເປັນອາຫານແກ່ເຈົ້າພຽງພໍ ທັງເປັນອາຫານແກ່ຄົວເຮືອນຂອງເຈົ້າ ແລະເປັນເຄື່ອງລ້ຽງຊີ
ວິດສາວໃຊ້ຂອງເຈົ້າ

## 28.

1 ຄົນຊົ່ວຮ້າຍກໍຫນີເມື່ອບໍ່ມີໃຜໄລ່ຕາມ ແຕ່ຄົນຊອບທັມກໍກ້າຫານຢ່າງສິງຫນຸ່ມ
2 ເມື່ອແຜ່ນດິນທໍຣະຍົດກໍມີຜູ້ຄອບຄອງເພີ້ມຂຶ້ນ ແຕ່ດ້ວຍຄົນທີ່ມີຄວາມເຂົ້າໃຈແລະຄວາມຮູ້ ສະຖຽນຣະ
ພາບແຜ່ນດິນນັ້ນຈະເຂັ້ມແຂງແລະຫມັ້ນຄົງ

3 ຄົນຍາກຈົນທີ່ບີບບັງຄັບຄົນຍາກຈົນ ກໍເຫມືອນຝົນທີ່ເທລົງມາ ແຕ່ບໍ່ໃຫ້ອາຫານ
4 ບັນດາຜູ້ທີ່ປະຖິ້ມບັນຍັດຍ່ອມສັຣເສີນຄົນຊົ່ວຮ້າຍ ແຕ່ບັນດາຜູ້ທີ່ຮັກສາບັນຍັດຍ່ອມຄອຍຕໍ່ສູ້ເຂົາ
5 ຄົນຊົ່ວຮ້າຍບໍ່ເຂົ້າໃຈຄວາມຍຸດຕິທັມ ແຕ່ບັນດາຜູ້ທີ່ສແວງຫາພຣະເຈົ້າເຂົ້າໃຈຖີ່ຖ້ວນ
6 ຄົນຍາກຈົນທີ່ດຳເນີນໃນຄວາມສັດຊື່ຂອງເຂົາກໍດີກວ່າຄົນຮັ່ງມີທີ່ສໍ້ໂກງໃນທາງຂອງຕົນ
7 ບຸກຄົນທີ່ຮັກສາບັນຍັດເປັນບຸດຊາຍທີ່ສລາດ ແຕ່ເພື່ອນຂອງຄົນຂີ້ຂາດນຳຄວາມອັບອາຍມາເຖິງບິດາເຂົາ
8 ບຸກຄົນທີ່ເພີ້ມຊັບສົມບັດຂອງຕົນດ້ວຍດອກເບັ້ຽແລະເງິນເພີ້ມ ພຣະເຈົ້າຈະຊົງເອົາຊັບນັ້ນໄປຈາກເຂົາເພື່ອເພີ້ມແກ່ຄົນທີ່ເອັນດູຄົນຍາກຈົນ
9 ຖ້າເຈົ້າບໍ່ທຳຕາມພຣະທັມ ພຣະເຈົ້າກໍຈະກຽດຊັງຄຳອ້ອນວອນຂອງເຈົ້າ
10 ຖ້າເຈົ້າຫລອກລວງໃຫ້ຄົນສັດຊື່ທຳຊົ່ວ ຄວາມຊົ່ວນັ້ນຈະຕົກຖືກເຈົ້າເອງ ແຕ່ຜູ້ບໍ່ທຳຊົ່ວຈະໄດ້ຮັບຮາງວັນຢ່າງດີ
11 ຄົນຮັ່ງມີມັກຄິດວ່າຕົນສລາດສເມີ ແຕ່ຄົນທຸກຍາກທີ່ມີປັນຍາອາດຮູ້ຈັກເຂົາດີກວ່າອີກ
12 ເມື່ອຄົນດີມີອຳນາດທຸກໆຄົນກໍມ່ວນຊື່ນຍິນດີ ແຕ່ເມື່ອຄົນອະທັມໄດ້ປົກຄອງປະຊາຊົນກໍຫລົບລີ້ຢູ່
13 ຖ້າເຈົ້າພຍາຍາມປິດບັງບາບໄວ້ ຊີວິດຂອງເຈົ້າກໍຈະບໍ່ຈະເຣີນ ຈົ່ງສາລະພາບແລະປ່ຽນໃຈເສັຽ ແລ້ວພຣະເຈົ້າຈະຊົງສຳແດງພຣະກະຣຸນາຕໍ່ເຈົ້າ
14 ຄົນທີ່ເກງກົວຢູ່ສເມີກໍໄດ້ຮັບພອນ ແຕ່ບຸກຄົນທີ່ທຳໃຈຕົນໃຫ້ແຂງກະດ້າງຈະຕົກໃນຄວາມລຳບາກຍາກເຢັນ
15 ຜູ້ຄອບຄອງທີ່ຊົ່ວຮ້າຍເຫນືອຄົນຍາກຈົນ ກໍເຫມືອນສິງຄຳຣາມຫລືຫມີທີ່ກຳລັງເຂົ້າຕໍ່ສູ້
16 ຜູ້ຄອບຄອງທີ່ຂາດຄວາມເຂົ້າໃຈກໍເປັນຜູ້ບີບບັງຄັບທີ່ດຸຮ້າຍ ແຕ່ບຸກຄົນທີ່ກຽດຊັງກຳໄຣອະທັມຍ່ອມຍືດປີເດືອນຂອງເຂົາອອກໄປ
17 ຄົນໃດທີ່ມີກັມຊົ່ວເຣື່ອງໂລຫິດຂອງຄົນອື່ນ ຄົນນັ້ນກໍເປັນຄົນຫລົບຫນີຢູ່ຈົນຕາຍ ຢ່າໃຫ້ໃຜຊ່ອຍເຂົາເລີຍ
18 ບຸກຄົນທີ່ດຳເນີນໃນຄວາມສັດຊື່ຈະໄດ້ຮັບການຊ່ອຍກູ້ ແຕ່ຄົນທີ່ມີເລ່ໃນທາງຂອງເຂົາເອງຈະຕົກໃນຫລຸມ
19 ບຸກຄົນທີ່ໄຖ່ໄຮ່ນາຂອງຕົນຈະໄດ້ອາຫານຫລວງຫລາຍ ແຕ່ຜູ້ທີ່ປະກອບການງານທີ່ໄຮ້ຄ່າຈະຍິ່ງຈົນລົງ
20 ຄົນທີ່ຊື່ສັດຈະໄດ້ຮັບພອນມາກມາຍ ແຕ່ຜູ້ທີ່ຢາກຮັ່ງມີໄວກໍຈະຫນີໄປບໍ່ພົ້ນໂທດ
21 ຊິ່ງຈະສຳແດງຄວາມລຳອຽງກໍບໍ່ດີ ຄົນອາດຈະທໍຣະຍົດເພາະອາຫານຊີ້ນນຶ່ງກໍເປັນໄດ້
22 ຄົນທີ່ມີນັຍຕາຊົ່ວກໍເລັ່ງຫາຊັບສົມບັດ ແລະບໍ່ຮູ້ວ່າຄວາມຂັດສົນຈະມາເຖິງເຂົາ
23 ບຸກຄົນທີ່ຂະຫນາບຄົນນຶ່ງຄົນໃດ ທີ່ຫລັງເຂົາຈະໄດ້ຮັບຄວາມຊອບຫລາຍກວ່າຄົນທີ່ປົ້ຍໍດ້ວຍລີ້ນຂອງຕົນ
24 ບຸກຄົນທີ່ຂະໂມຍສິ່ງຂອງຂອງບິດາ ຫລືມານດາຂອງຕົນ ແລະກ່າວວ່າ, “ຢ່າງນີ້ບໍ່ທໍຣະຍົດ ເຂົາກໍເປັນເພື່ອນຂອງຄົນທຳລາຍ
25 ຄົນເຫັນແກ່ຕົວທຳໃຫ້ເກີດການວິວາດ ແຕ່ຜູ້ທີ່ວາງໃຈໃນພຣະເຈົ້າຈະຈະເຣີນຂື້ນ
26 ບຸກຄົນທີ່ວາງໃຈໃນຄວາມຄິດຂອງຕົວເປັນຄົນໂງ່ ແຕ່ບຸກຄົນທີ່ດຳເນີນໃນປັນຍາຈະໄດ້ຮັບການຊ່ອຍກູ້

27 ບຸກຄົນທີ່ໃຫ້ແກ່ຄົນຍາກຈົນຈະບໍ່ຮູ້ຈັກການຂັດສົນ ແຕ່ບຸກຄົນທີ່ປິດຕາຂອງເຂົາເສັຽຈາກການນີ້ຈະໄດ້ຮັບການສາບແຊ່ງຫລາຍ

28 ເມື່ອຄົນຊົ່ວຮ້າຍມີອຳນາດຂຶ້ນ ຄົນກໍລີ້ຊ່ອນຕົວເສັຽ ແຕ່ເມື່ອເຂົາທັງຫລາຍພິນາດໄປຄົນຊອບທັມກໍເພີ້ມຂຶ້ນ

## 29.

1 ບຸກຄົນທີ່ຖືກຕັກເຕືອນເລື້ອຍໆ ແຕ່ຍັງແຂງຄໍ ກໍຈະຫລົ້ມຈົມຈົນເຫລືອແກ້ໃນມື້ນຶ່ງ

2 ເມື່ອຄົນຊອບທັມທະວີອຳນາດ ປະຊາຊົນກໍເປັນສຸກ ແຕ່ເມື່ອຄົນຊົ່ວຮ້າຍຄອບຄອງປະຊາຊົນກໍເປັນທຸກ

3 ບຸກຄົນຜູ້ຮັກປັນຍາຍ່ອມທຳໃຫ້ບິດາຂອງເຂົາຍິນດີ ແຕ່ຜູ້ທີ່ຄົບຄ້າຍິງແພດສະຍາກໍຜານຊັບສິ່ງຂອງຂອງເຂົາ

4 ພຣະຣາຊາຊົງໃຫ້ຄວາມເປັນຫ່ວງແກ່ແຜ່ນດິນດ້ວຍຄວາມຍຸດຕິທັມ ແຕ່ອົງທີ່ຊົງບີບຄັ້ນເອົາຂອງກຳນັນກໍທຳໃຫ້ແຜ່ນດິນຫລົ້ມຈົມລົງໄດ້

5 ຄົນທີ່ປະຈົບປະແຈງເພື່ອນບ້ານຂອງຕົນຍ່ອມກາງຂ່າຍໄວ້ດັກຈັບຕີນຂອງເຂົາ

6 ຄົນຊົ່ວຕິດກັບຢູ່ໃນຄວາມທໍຣະຍົດຂອງຕົນ ແຕ່ຄົນຊອບທັມຮ້ອງເພງແລະຍິນດີ

7 ຄົນຊອບທັມຮູ້ຈັກສິດທິຂອງຄົນຍາກຈົນ ຄົນຊົ່ວຮ້າຍບໍ່ເຂົ້າໃຈຄວາມຮູ້ຢ່າງນີ້

8 ຄົນມັກເຍາະເຍີ້ຍກະທຳບ້ານເມືອງໃຫ້ລຸກເປັນໄຟ ແຕ່ນັກປາດແປຄວາມໂກດຮ້າຍໄປເສັຽ

9 ຖ້ານັກປາດມີເຣື່ອງໂຕ້ຖຽງກັບຄົນໂງ່ ຄົນໂງ່ກໍດຸເດືອດທັງຫົວເລາະ ແລະບໍ່ມີວັນສງົບລົງໄດ້

10 ຄົນທີ່ກະຫາຍເລືອດຍ່ອມກຽດຄົນທີ່ໄຮ້ຕຳໜິ ແລະຄົນຊົ່ວຮ້າຍສແວງຫາຊີວິດຂອງເຂົາ

11 ຄົນໂງ່ຍ່ອມໃຫ້ຄວາມໂກດຂອງເຂົາພຸ່ງອອກມາເຕັມທີ່ ແຕ່ນັກປາດຍ່ອມຍັບຍັ້ງໂທສະໄວ້ງຽບໆ

12 ຖ້າຜູ້ຄອບຄອງເຊື່ອຟັງຄວາມເທັດ ຂ້າຣາຊການຂອງທ່ານກໍເປັນຄົນຊົ່ວຮ້າຍທັງສິ້ນ

13 ຄົນຍາກຈົນ ແລະຜູ້ບີບບັງຄັບມັກມາປະຈັນຫນ້າກັນສເມີ ແລະພຣະຜູ້ເປັນເຈົ້າປະທານຄວາມສວ່າງແກ່ຕາຂອງຄົນທັງສອງ

14 ຖ້າພຣະຣາຊາພິພາກສາຄົນຍາກຈົນດ້ວຍຄວາມທ່ຽງທັມ ພຣະທີ່ນັ່ງຂອງພຣະອົງຈະສະຖາປະນາຢູ່ເປັນນິດ

15 ໄມ້ແສ້ ແລະຄຳຕັກເຕືອນໃຫ້ເກີດປັນຍາ ແຕ່ຖ້າປ່ອຍເດັກໄວ້ແຕ່ລຳພັງຈະນຳຄວາມອັບອາຍມາສູ່ມານດາຂອງຕົນ

16 ເມື່ອຄົນຊົ່ວຮ້າຍຢູ່ໃນອຳນາດຫນ້າທີ່ການທໍຣະຍົດກໍທະວີຂຶ້ນ ແຕ່ຄົນຊອບທັມຈະມອງເບິ່ງຄວາມຫລົ້ມຈົມຂອງເຂົາ

17 ຈົ່ງຝຶກສອນບຸດຂອງເຈົ້າ ແລະເຂົາຈະໃຫ້ເຈົ້າໄດ້ຢຸດພັກ ເຂົາຈະໃຫ້ຄວາມປິຕິຍິນດີແກ່ໃຈຂອງເຈົ້າ

18 ທີ່ໃດໆທີ່ບໍ່ມີການເຜີຍທັມ ປະຊາຊົນກໍປະຖິ້ມຄວາມຍັບຍັ້ງຊັ່ງໃຈເສັຽ ແຕ່ຄົນທີ່ຮັກສາທັມບັນຍັດຈະເປັນສຸກ

19 ບອກສອນຄົນໃຊ້ແຕ່ປາກກໍບໍ່ທ່ອນໄດ້ ເພາະເຖິງແມ່ນເຂົາຈະເຂົ້າໃຈ ແຕ່ເຂົາກໍບໍ່ຟັງ

20 ເຈົ້າເຫັນຄົນທີ່ປາກໄວຫລື ຍັງມີຫວັງໃນຄົນໂງ່ຫລາຍກວ່າເຂົາ

21 ບຸກຄົນທີ່ທະນຸຖະນອມຄົນໃຊ້ຂອງຕົນຕັ້ງແຕ່ນ້ອຍໆ ທີ່ສຸດຈະເຫັນວ່າເຂົາເປັນຜູ້ຮັບມໍຣະດົກຂອງຕົນ

22 ຄົນທີ່ໃນໂທຍ່ອມກໍ່ໃຫ້ເກີດການວິວາດ ແລະຄົນທີ່ມັກໂກດກໍເປັນເຫດໃຫ້ມີການທໍຣະຍົດຫລາຍຂຶ້ນ

23 ຄວາມເຍີ່ຍິ່ງຂອງຄົນນໍາເຂົາໃຫ້ຕໍ່າລົງ ແຕ່ຄົນທີ່ມີໃຈຖ່ອມຈະໄດ້ຮັບກຽດ

24 ຜູ້ເຂົ້າສ່ວນກັບຂະໂມຍກໍກຽດຊັງຊີວິດຂອງຕົນ ເຂົາໄດ້ຍິນຄໍາສາບານ ແຕ່ບໍ່ເປີດເຜີຍສິ່ງໃດເລີຍ

25 ຜູ້ທີ່ກັງວົນນໍາຄົນເວົ້າໃຫ້ກໍເປັນອັນຕະຣາຍ ແຕ່ບຸກຄົນທີ່ວາງໃຈໃນພຣະຜູ້ເປັນເຈົ້າກໍປອດພັຍ

26 ຄົນຈໍານວນຫລາຍສແວງຄວາມພໍໃຈຈາກຜູ້ຄອບຄອງ ແຕ່ຄົນຈະໄດ້ຄວາມຍຸດຕິທັມຈາກພຣະຜູ້ເປັນເຈົ້າ

27 ຄົນອະທັມເປັນທີ່ລັງກຽດຂອງຄົນຊອບທັມ ແຕ່ຄົນຕົງເປັນທີ່ຫນ້າກຽດຊັງແກ່ຄົນຊົ່ວຮ້າຍ

## 30. ຂໍ້ສັງເກດຂອງອາກູ

1 ຖ້ອຍຄໍາຂອງອາກູ ບຸດຊາຍຢາເກແຫ່ງເມືອງມັດສາ “ພຣະເຈົ້າບໍ່ຢູ່ນໍາຂ້າພະເຈົ້າ ພຣະເຈົ້າບໍ່ຢູ່ນໍາຂ້າພະເຈົ້າ ແລະຂ້າພະເຈົ້າກໍຂາດຜູ້ຊ່ອຍເຫລືອ”

2 ແທ້ຈິງຂ້າພະເຈົ້າກໍໂງ່ເກີນທີ່ຈະເປັນຄົນ ຂ້າພະເຈົ້າບໍ່ມີຄວາມຮອບຮູ້ຢ່າງມະນຸດ

3 ຂ້າພະເຈົ້າບໍ່ເຄີຍຮຽນຮູ້ປັນຍາ ທັງບໍ່ມີຄວາມຮູ້ຂອງອົງບໍຣິສຸດ

4 ໃຜເດ່ໄດ້ຂຶ້ນໄປຍັງສວັນແລະລົງມາ ໃຜເດ່ໄດ້ຮວບຮວມລົມໄວ້ໃນກໍາມືຂອງທ່ານ ໃຜເດ່ໄດ້ເອົາເຄື່ອງແຕ່ງກາຍມາຫໍ່ນໍ້າໄວ້ ໃຜເດ່ໄດ້ສະຖາປະນາທີ່ສຸດປາຍແຫ່ງແຜ່ນດິນໂລກໄວ້ ນາມຂອງຜູ້ນັ້ນຄືໃຜ ແລະນາມບຸດຊາຍຂອງຜູ້ນັ້ນຄືໃຜ ທ່ານຈະຕ້ອງຮູ້ເປັນແນ່

5 ພຣະວັຈນະທຸກຄໍາຂອງພຣະຜູ້ເປັນເຈົ້ານັ້ນພິສູດເຫັນຈິງແລ້ວ ພຣະອົງຊົງເປັນໂລ່ແກ່ບັນດາຜູ້ລີ້ພັຍຢູ່ໃນພຣະອົງ

6 ຢ່າເພີ້ມຫຍັງເຂົ້າກັບພຣະວັຈນະຂອງພຣະອົງ ເກງວ່າພຣະອົງຈະຊົງຂະຫນາບເຈົ້າແລະເຂົາຈະເຫັນວ່າເຈົ້າເປັນຄົນມຸສາ

7 ຂ້າພຣະອົງຂໍສອງຢ່າງຈາກພຣະອົງ ຂໍຢ່າຊົງປະຕິເສດທີ່ຈະໃຫ້ຂ້າພຣະອົງກ່ອນຂ້າພຣະອົງຕາຍ

8 ຂໍໃຫ້ຄວາມມຸສາ ແລະຄວາມເທັດໄກຈາກຂ້າພຣະອົງ ຂໍຢ່າປະທານຄວາມຍາກຈົນ ຫລືຄວາມມັ່ງຄັ່ງແກ່ຂ້າພຣະອົງ ຂໍລ້ຽງຂ້າພຣະອົງດ້ວຍອາຫານທີ່ພໍດີແກ່ຂ້າພຣະອົງ

9 ຢ້ານວ່າຂ້າພຣະອົງຈະອີ່ມ ແລະປະຕິເສດພຣະອົງ ແລ້ວເວົ້າວ່າ, “ພຣະເຈົ້າເປັນຜູ້ໃດ” ຫລືຢ້ານວ່າຂ້າພຣະອົງຈະຍາກຈົນແລະຂະໂມຍ ແລະກະທໍາໃຫ້ພຣະນາມພຣະເຈົ້າຂອງຂ້າພຣະອົງເປັນມົນທິນ

10 ຢ່ານິນທາຄົນໃຊ້ໃຫ້ນາຍຂອງເຂົາຟັງ ເກງວ່າເຂົາຈະແຊ່ງເຈົ້າ ແລະເຈົ້າຈະຕ້ອງຮັບກັມຊົ່ວ

11 ມີຄົນທີ່ແຊ່ງບິດາຂອງຕົນ ແລະບໍ່ອວຍພອນແກ່ມານດາຂອງຕົນ

12 ມີຄົນທີ່ຄິດວ່າຕົນເອງບໍຣິສຸດ ແຕ່ບໍ່ໄດ້ຮັບການຊໍາຣະຄວາມເປື້ອນເປິຂອງຕົນ

13 ມີຄົນເຊັ່ນນັ້ນຢູ່ທົ່ວໄປ ຕາຂອງເຂົາສູງຈິງຫນໍ ແລະຫນັງຕາຂອງເຂົາສູງຍິ່ງ
14 ມີຄົນທີ່ແຂ້ວຂອງເຂົາເປັນດາບ ທົບຂອງເຂົາເປັນມີດ ເພື່ອຈະທຳລາຍຄົນຍາກຈົນເສັຽຈາກແຜ່ນດິນໂລກ
ຄົນຂັດສົນ ເສັຽຈາກຖ້າມກາງມະນຸດ
15 ປີງມີລູກສາວສອງໂຕ ມັນຮ້ອງວ່າ, "ໃຫ້, ໃຫ້" ແຕ່ສິ່ງສາມສິ່ງນີ້ບໍ່ເຄີຍອີ່ມ ສີ່ສິ່ງບໍ່ເຄີຍເວົ້າວ່າ, "ພໍແລ້ວ"
16 ຄືແດນຜູ້ຕາຍ ຍິງທີ່ບໍ່ມີລູກ ແຜ່ນດິນໂລກທີ່ບໍ່ອີ່ມນ້ຳ ແລະໄຟທີ່ບໍ່ເຄີຍເວົ້າວ່າ, "ພໍແລ້ວ"
17 ນັຍຕາທີ່ເຍາະເຍີ້ຍບິດາແລະດູຖູກ ບໍ່ຟັງມານດາຈະຖືກກາແຫ່ງຫຸບເຂົາຈິກອອກ ແລະແຮ້ງຈະກິນເສັຽ
18 ມີສາມສີ່ຢ່າງທີ່ຂ້າພະເຈົ້າບໍ່ເຂົ້າໃຈ ແລະອັດສະຈັນທີ່ສຸດຄື
19 ນົກອິນຊີທີ່ບິນໄປໃນທ້ອງຟ້າ ງູທີ່ເລືອໄປມາເທິງໂງ່ນຫີນ ເຮືອທີ່ແລ່ນໄປໃນນ້ຳທະເລ ແລະທ່າທີຂອງ
ຊາຍກັບຍິງສາວ
20 ນີ້ເປັນທາງຂອງຍິງທີ່ລ່ວງປະເວນີ ຄືນາງໄດ້ຮັບປະທານ ແລະນາງເຊັດປາກ ແລະນາງເວົ້າວ່າ, "ຂ້າພະ
ເຈົ້າບໍ່ໄດ້ທຳຜິດ"
21 ແຜ່ນດິນໂລກສັ່ນສະເທືອນຢູ່ໃຕ້ສາມສິ່ງ ມັນທົນຢູ່ໃຕ້ສີ່ສິ່ງບໍ່ໄດ້
22 ຄື ທາດເມື່ອໄດ້ເປັນພຣະຣາຊາ ຄົນໂງ່ເມື່ອກິນອີ່ມ
23 ຍິງທີ່ບໍ່ມີໃຜຮັກໄດ້ຜົວ ແລະສາວໃຊ້ທີ່ໄດ້ເປັນນາຍແທນນາຍຍິງຂອງຕົນ
24 ມີສີ່ຢ່າງໃນແຜ່ນດິນໂລກທີ່ນ້ອຍເຫລືອເກີນ ແຕ່ມີປັນຍາຫລາຍເຫລືອລົ້ນ
25 ມົດເປັນປະຊາກອນທີ່ບໍ່ແຂງແຮງ ແຕ່ມັນຍັງຕຽມອາຫານຂອງມັນໄວ້ໃນຣະດູແລ້ງ
26 ຕຸ່ນ ເປັນປະຊາກອນທີ່ບໍ່ມີກຳລັງ ແຕ່ມັນຍັງສ້າງບ້ານຂອງມັນໃນໂງ່ນຫີນ
27 ຕັກແຕນບໍ່ມີຣາຊາ ແຕ່ມັນຍັງເດີນຂະບວນເປັນແຖວ
28 ຈີງໂຈະນັ້ນ ເຈົ້າເອົາມືຈັບໄດ້ ແຕ່ມັນຍັງຢູ່ໃນພຣະຣາຊວັງ
29 ມີສາມສິ່ງທີ່ສະງ່າງາມຫລາຍໃນທ່າເດີນ ມີສີ່ສິ່ງຕົນຂອງມັນຜ່າເຜີຍ
30 ຄືສິງ ຊຶ່ງເປັນສັດທີ່ມີກຳລັງຫລາຍທີ່ສຸດ ແລະບໍ່ຍອມຫັນຫລັງກັບເພາະສິ່ງໃດເລີຍ
31 ພໍ່ໄກ່ທີ່ເດີນຢູ່ ແບ້ຜູ້ ແລະພຣະຣາຊາທີ່ສະເດັດພຣະຣາຊດຳເນີນຢູ່ຫນ້າປະຊາຊົນຂອງພຣະອົງ
32 ຖ້າເຈົ້າເປັນຄົນໂງ່ຍົກຍ້ອງຕົນເອງ ຫລືຄິດແຜນການຊົ່ວຮ້າຍ ຈົ່ງເອົາມືປິດປາກຂອງເຈົ້າເສັຽເຖີດ
33 ເພາະເມື່ອກວນນ້ຳນົມກໍໄດ້ເນີຍແຫລວ ເມື່ອບີບດັງກໍໄດ້ໂລຫິດ ແລະເມື່ອກວນໂທໂສກໍໄດ້ການວິວາດ

## 31. ຄຳຕັກເຕືອນກະສັດ

1 ຖ້ອຍຄຳຂອງເລມູເອນ ພຣະຣາຊາແຫ່ງເມືອງມັດສາ ພຣະຣາຊຊົນນີໄດ້ສອນຄຳນີ້ໄວ້ແກ່ພຣະອົງ
2 ລູກແມ່ເອີຍ ລູກແຫ່ງທ້ອງແມ່ເອີຍ ລູກແຫ່ງຄຳສັນຍາຂອງແມ່ເອີຍ
3 ຢ່າໃຫ້ກຳລັງຂອງເຈົ້າແກ່ຜູ້ຍິງ ແລະໃຫ້ທາງຂອງເຈົ້າແກ່ຜູ້ທຳລາຍພຣະຣາຊາໃດໆ

4 ໂອ ເລມູເອນເອີຍ ບໍ່ສົມຄວນທີ່ພຣະຣາຊາ ບໍ່ສົມຄວນທີ່ພຣະຣາຊາຈະສເວີຍເຫລົ້າອະງຸ່ນ ຫລືຜູ້ທີ່ຄອບ
ຄອງຈະປາຖນາສຸຣາ
5 ຢ້ານວ່າເຂົາຈະດື່ມແລະລືມຄຳທີ່ຕາເປັນກົດຫມາຍນັ້ນເສັຽ ແລະບໍ່ຍອມຮັບຮູ້ສິດທິຂອງຄົນຂັດສົນ
6 ຈົ່ງໃຫ້ສຸຣາແກ່ຜູ້ທີ່ກຳລັງພິນາດ ແລະນ້ຳອະງຸ່ນແກ່ຜູ້ທີ່ທຸກໃຈຢ່າງຂົ່ມຂື່ນ
7 ຈົ່ງໃຫ້ເຂົາດື່ມແລະລືມຄວາມຍາກຈົນຂອງເຂົາ ເພື່ອຈະຈົດຈຳຄວາມຣະທົມທຸກຂອງເຂົາບໍ່ໄດ້ອີກຕໍ່ໄປ
8 ຈົ່ງອ້າປາກຂອງເຈົ້າແທນຄົນໃບ້ ເພື່ອສິດຂອງທຸກຄົນທີ່ບໍ່ມີທີ່ເພິ່ງ
9 ຈົ່ງອ້າປາກຂອງເຈົ້າ ພິພາກສາຢ່າງຊອບທັມ ຮັກສາສິດຂອງຄົນຈົນແລະຄົນຂັດສົນໃຫ້ຄົງຢູ່

## ເມັຽທີ່ດີ

10 ເມັຽທີ່ດີຍ່ອມປະເສີດກວ່າເພັດນິນຈິນດາ ແຕ່ຍາກຫລາຍທີ່ຈະໄດ້ຍິງເຊັ່ນນັ້ນ
11 ຜົວທີ່ມີເມັຽດີກໍວາງໃຈໃນນາງໄດ້ ເຂົາຈະບໍ່ເປັນທຸກເລີຍ
12 ເມັຽທີ່ດີນັ້ນເປັນດັ່ງນີ້ ຄືທຳແຕ່ສິ່ງທີ່ດີຕໍ່ຜົວ ຈະບໍ່ທຳໃຫ້ຜົວເຊື່ອມເສັຽຕລອດຊີວິດ
13 ຈັດຫາຂົນແກະ ຜ້າເນື້ອດີ ພ້ອມທັງເຮັດວຽກຢ່າງຊຳນິຊຳນານ
14 ຊອກຫາອາຫານຈາກບ່ອນໄກມາສູ່ເຮືອນເຫມືອນເຮືອນພໍ່ຄ້າ
15 ນອນເດິກຕື່ນເຊົ້າ ເພື່ອຈັດຕຽມຫາອາຫານສຳລັບຄອບຄົວ ແລະບອກວຽກໃຫ້ສາວໃຊ້ທຳ
16 ຊອກຫາທີ່ດິນເຮັດສວນອະງຸ່ນ ແລ້ວຊື້ໄວ້ດ້ວຍເງິນທີ່ນາງຫາມາເອງ
17 ເປັນຍິງທີ່ແຂງແຮງ ມີນ້ຳໃຈແລະສຸກຂະພາບດີ
18 ຮູ້ຈັກຄຸນຄ່າຂອງສິ່ງທີ່ຕົນທຳ
19 ເຂັນຝ້າຍ ແລະຕ່ຳຜ້າເອງ
20 ໃຫ້ຄວາມຊ່ອຍເຫລືອຄົນທຸກຍາກແລະຜູ້ຂັດສົນ
21 ເມື່ອຍາມຫນາວກໍບໍ່ເດືອດຮ້ອນ ເພາະວ່ານາງມີເຄື່ອງກັນຫນາວສຳລັບລູກຜົວແລ້ວ
22 ນາງຕ່ຳຜ້າປູນອນ ແລະນຸ່ງຜ້າໄຫມສີມ່ວງເນື້ອດີ
23 ຊ່ອຍໃຫ້ຜົວມີຊື່ສຽງ ແລະເປັນເຈົ້ານາຍຄົນນຶ່ງໃນປະເທດ
24 ນາງຕ່ຳເຄື່ອງນຸ່ງ ແລະທຳສາຍແອວຂາຍໃຫ້ພວກພໍ່ຄ້າ
25 ເປັນຍິງທີ່ແຂງແຮງ ແລະຫນ້າເຄົາຣົບນັບຖື ບໍ່ເປັນຫ່ວງຫຍັງໃນອານາຄົດ
26 ເປັນຍິງເວົ້າຈາຫລັກແຫລມ ແລະສຸພາບອ່ອນຫວານ
27 ຫຍຸ້ງຢູ່ກັບວຽກ ແລະເອົາໃຈໃສ່ໃນຄວາມຕ້ອງການຂອງຄອບຄົວສເມີ
28 ລູກຜົວຂອງນາງຈະສະແດງຄວາມພໍໃຈ ແລະຍ້ອງຍໍນາງ
29 ຜົວຈະເວົ້າວ່າ, “ມີຜູ້ຍິງຢູ່ຫລາຍຄົນເປັນເມັຽທີ່ດີ ແຕ່ເຈົ້າດີກວ່າຜູ້ຍິງທັງປວງ”
30 ສເນ່ເປັນຂອງຫລອກລວງ ແລະຄວາມງາມກໍເປັນຂອງບໍ່ແນ່ນອນ ແຕ່ຜູ້ຍິງທີ່ຢຳເກງພຣະຜູ້ເປັນເຈົ້າສົມ
ຄວນໄດ້ຮັບຄວາມສັຣເສີນ

31 ຍ້ອນຜົນງານທັງປວງທີ່ນາງໄດ້ທຳມານັ້ນ ຈົ່ງໃຫ້ກຽດແກ່ນາງ ນາງສົມຄວນໄດ້ຮັບຄວາມເຄົາຣົບນັບຖື
ຈາກທຸກໆຄົນ